# ການຖືຄອງ ແລະ ນຳໃຊ້ທີ່ດິນກ່ອນ ແລະ ຫຼັງການສຳປະທານທີ່ດິນ ປີ 2008 ແລະ ປີ 2010 ຂອງຊຸມຊົນບ້ານ ຕຸ້ມລີທົ່ງ ແລະ ບ້ານ ຕຸ້ມລີຂາວ, ເມືອງ ຕະໂອ້ຍ, ແຂວງ ສາລະວັນ, ສປປ ລາວ.

Land Use and Land Ownership Before and After Land Concession During 2008 and 2010 of the Tumlythong and Tumlykhao Villages, Taoy District, Saravan Province, Lao PDR.

ໂດຍ:

ພູວຽງ ພົນອາສາ
ເຂັມພອນ ຄູນປະເສີດ

ບົດໂຄງການຈົບຊັ້ນທີ່ນຳມາສະເໜີນີ້ ເປັນສ່ວນໜຶ່ງຂອງຫຼັກສູດ
ການສຶກສາລະດັບປະລິນຍາຕີ

ຄະນະວິທະຍາສາດປ່າໄມ້
ມະຫາວິທະຍາໄລແຫ່ງຊາດ
ກໍລະກົດ, 2011

# ການຖືຄອງ ແລະ ນຳໃຊ້ທີ່ດິນກ່ອນ ແລະ ຫຼັງການສຳປະທານທີ່ດິນ ປີ 2008 ແລະ ປີ 2010 ຂອງຊຸມຊົນບ້ານ ຕຸ້ມລີທົ່ງ ແລະ ບ້ານ ຕຸ້ມລີຂາວ, ເມືອງ ຕະໂອ້ຍ, ແຂວງ ສາລະວັນ, ສປປ ລາວ.

Land Use and Land Ownership Before and After Land Concession During 2008 and 2010 of the Tumlythong and Tumlykhao Villages, Taoy District, Saravan Province, Lao PDR.

ໂດຍ:

ພູວຽງ ພົນອາສາ
ເຂັມພອນ ຄູນປະເສີດ

ບົດໂຄງການຈົບຊັ້ນທີ່ນຳມາສະເໜີນີ້ ເປັນສ່ວນໜຶ່ງຂອງຫຼັກສູດ
ການສຶກສາລະດັບປະລິນຍາຕີ

ອາຈານຊີ້ນຳ: ອຈ ສາຍຄຳ ບຸດທະວົງ
ຣສ.ດຣ. ຄຳຫຼ້າ ພັນວິໄລ

ຄະນະວິທະຍາສາດປ່າໄມ້
ມະຫາວິທະຍາໄລແຫ່ງຊາດ
ກໍລະກົດ, 2011

ການຖືຄອງ ແລະ ນຳໃຊ້ທີ່ດິນກ່ອນ ແລະ ຫຼັງການສຳປະທານທີ່ດິນ ປີ 2008 ແລະ ປີ 2010 ຂອງຊຸມຊົນບ້ານ ຕຸ້ມລີທົ່ງ ແລະ ບ້ານ ຕຸ້ມລີຂາວ, ເມືອງ ຕະໂອ້ຍ, ແຂວງ ສາລະວັນ, ສປປ ລາວ.

Land Use and Land Ownership Before and After Land Concession During 2008 and 2010 of the Tumlythong and Tumlykhao Villages, Taoy District, Saravan Province, Lao PDR.

ບົດໂຄງການຈົບຊັ້ນທີ່ນຳມາສະເໜີນີ້ ເປັນສ່ວນໜຶ່ງຂອງຫຼັກສູດ ການສຶກສາລະດັບປະລິນຍາຕີ

ພາກວິຊາ: ຄຸ້ມຄອງຈັດສັນແຫຼ່ງນ້ຳ (ອ່າງໂຕ່ງ) ແລະ ວາງແຜນນຳໃຊ້ທີ່ດິນ

ຄະນະກຳມະການປ້ອງກັນບົດຈົບຊັ້ນ

ທ່ານ...................................................................................ອາຈານຊີ້ນຳ

ທ່ານ...............................................................................ຮອງອາຈານຊີ້ນຳ

ທ່ານ.....................................................................................ກຳມະການ

ທ່ານ.....................................................................................ກຳມະການ

ທ່ານ.....................................................................................ກຳມະການ

ທ່ານ.....................................................................................ກຳມະການ

ທ່ານ.....................................................................................ກຳມະການ

ວັນທີ...........ເດືອນ.............ປີ 2011

## ຄຳຂອບໃຈ

ບົດຈົບຊັ້ນສະບັບນີ້ຄົງຈະບໍ່ສຳເລັດໄດ້ ຖ້າບໍ່ໄດ້ຮັບການຊີ້ນຳ ແລະ ຊ່ວຍເຫຼືອຈາກພາກສ່ວນຕ່າງໆ, ຫຼາຍໆໜ່ວຍງານ ແລະ ບຸກຄົນທີ່ສຳຄັນອີກຫຼາຍໆທ່ານ.

ໃນໂອກາດນີ້ພວກຂ້າພະເຈົ້າຂໍຂອບໃຈ ແລະ ຮູ້ບຸນຄຸນມາຍັງພໍ່ແມ່, ພີ່ນ້ອງທີ່ໄດ້ໃຫ້ການຊ່ວຍເຫຼືອດ້ານທຶນຮອນ, ງົບປະມານໃນການສຶກສາຮ່ຳຮຽນໃນຄັ້ງນີ້ ຈົນພວກຂ້າພະເຈົ້າສາມາດຮຽນຈົບຈົບ ເປັນນັກວິຊາການປ່າໄມ້ຕາມທີ່ໄດ້ຕັ້ງໃຈໄວ້.

ຂໍສະແດງຄວາມຂອບໃຈມາຍັງ ທ່ານ ຮສ. ດຣ. ຮຸ່ງເພັດ ຈັນທະວົງ ຄະນະບໍດີຄະນະວິທະຍາສາດປ່າໄມ້ ແລະ ຄູອາຈານທຸກທ່ານພາຍໃນຄະນະວິທະຍາສາດປ່າໄມ້ ທີ່ໄດ້ສະລະເວລາທີ່ມີຄ່າທຸ້ມເທສະຕິປັນຍາ ເຂົ້າໃນການສິດສອນ, ຖ່າຍທອດຄວາມຮູ້ວິຊາການ ຕັ້ງແຕ່ຕົ້ນຈົນຈົບການຮຽນໃຫ້ແກ່ພວກຂ້າພະເຈົ້າຕະຫຼອດໄລຍະເວລາທີ່ໄດ້ສຶກສາຢູ່ທີ່ຄະນະວິທະຍາສາດປ່າໄມ້.

ພິເສດສຸດແມ່ນຂໍຂອບໃຈ ແລະ ຮູ້ບຸນຄຸນອັນລົ້ນເຫຼືອມາຍັງ ທ່ານ ຮສ. ດຣ. ຄຳຫຼ້າ ພັນວິໄລ ແລະ ອຈ. ສາຍຄຳ ບຸດທະວົງ ເຊິ່ງເປັນອາຈານນຳພາໃຫ້ການຊ່ວຍເຫຼືອ ກໍ່ຄືການແນະນຳ ວິທີການ ແລະ ຂໍ້ຄິດເຫັນຕ່າງໆ, ວິທີການເກັບກຳຂໍ້ມູນທັງພາກຫ້ອງການ ແລະ ພາກສະໜາມ, ການວິເຄາະຂໍ້ມູນ, ພ້ອມທັງກວດແກ້, ດັດແປງເນື້ອໃນທາງວິຊາການ ຈົນຕະຫຼອດຮອດເຕັກນິກວິທີ ການຂຽນບົດໂຄງການຈົບຊັ້ນ ຂອງພວກຂ້າພະເຈົ້າຈົນສຳເລັດໄປດ້ວຍດີ.

ຂໍສະແດງຄວາມຂອບໃຈມາຍັງທ່ານ ຫົວໜ້າໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ ທີ່ໄດ້ໃຫ້ທຶນໃນການລົງເກັບກຳຂໍ້ມູນໃນຄັ້ງນີ້ ແລະ ພະນັງງານທຸກໆທ່ານທີ່ໃຫ້ການຮ່ວມມື ໃນການປະສານງານກັບໜ່ວຍງານກັບໜ່ວຍງານທີ່ກ່ຽວຂ້ອງຂັ້ນແຂວງ, ເມືອງ ແລະ ບ້ານເປົ້າໝາຍທີ່ກ່ຽວຂ້ອງໃນການລົງເກັບຂໍ້ມູນ.

ຂໍສະແດງຄວາມຂອບໃຈມາຍັງ ທ່ານ ຫົວໜ້າ ແລະ ພະນັກງານທຸກທ່ານພະແນກແຜນການ ແລະ ການລົງທຶນແຂວງສາລະວັນ, ອົງການຄຸ້ມຄອງທີ່ດິນ ແຂວງສາລະວັນທີ່ຕອບສະໜອງຂໍ້ມູນທີ່ສຳຄັນ ແລະ ຂາດບໍ່ໄດ້ກໍ່ຄືການຮ່ວມມືໃນການເຮັດວຽກຂອງອົງການຄຸ້ມຄອງທີ່ດິນເມືອງຕະໂອ້ຍທີ່ໃຫ້ຄວາມສະດວກສະບາຍໃນການລົງເກັບກຳຂໍ້ມູນໃນຄັ້ງນີ້.

ຂໍຂອບໃຈມາຍັງອຳນາດການປົກຄອງບ້ານຕຸ້ມລີທົ່ງ ແລະ ຕຸ້ມລີຂາວ ຕະຫຼອດຮອດພໍ່ແມ່ປະຊາຊົນທີ່ໄດ້ໃຫ້ການຮ່ວມມື ໃນການສຳພາດ ແລະ ໃຫ້ຄວາມສະດວກໃນການລົງເກັບກຳຂໍ້ມູນ ແລະ ຕອບສະໜອງຂໍ້ມູນຕ່າງໆໃຫ້ພວກຂ້າພະເຈົ້າ.

ສຸດທ້າຍນີ້ ຂໍອວຍໄຊໃຫ້ພອນທຸກໆທ່ານ ຈົ່ງມີແຕ່ຄວາມສຸກ, ສຸຂະພາບແຂງແຮງ, ອາຍຸໝັ້ນຂວັນຍືນ, ປາສະຈາກໂລກໄພໄຂ້ເຈັບ, ລ້ຳລວຍລ້ຳລວຍ, ປະສົບຜົນສຳເລັດໃນໜ້າທີ່ວຽກງານ ແລະ ມີຄວາມຜາສຸກຕະຫຼອດໄປດ້ວຍເຖີ້ນ.

# ບົດສັດຫຍໍ້


ໃນປະຈຸບັນນີ້ເນື່ອງຈາກວ່າປະຊາກອນໄດ້ເພີ່ມຂຶ້ນ ສະນັ້ນ, ຄວາມຕ້ອງການໃນການພັດທະນາແມ່ນມີສູງ ເພື່ອໃຫ້ປະເທດຊາດລຸດພົ້ນອອກຈາກປະເພດທີ່ດ້ອຍພັດທະນາ ສະນັ້ນ, ຂັ້ນເທິງຈຶ່ງມີນະໂຍບາຍໃຫ້ມີການເຊົ່າ ແລະ ການສຳປະທານທີ່ດິນຂຶ້ນໃຫ້ແກ່ນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດເຂົ້າມາສຳປະທານທີ່ດິນເປັນຕົ້ນແມ່ນການກະສິກຳ ແລະ ປ່າໄມ້ ແລະ ມີການບຸກເບີກເນື້ອທີ່ແມ່ນມີລັກສະນະເປີດແປນ ສະນັ້ນ, ມັນຈຶ່ງໄດ້ໄປກະທົບໂດຍກົງຕໍ່ກັບການດຳລົງຊີວິດຂອງປະຊາຊົນຢູ່ເຂດຊົນນະບົດ. ພວກຂ້າພະເຈົ້າຈຶ່ງໄດ້ສຶກສາກ່ຽວກັບການຖືຄອງ ແລະ ການນຳໃຊ້ທີ່ດິນ ພາຍຫຼັງທີ່ມີການສຳປະທານທີ່ດິນຂຶ້ນ ທີ່ບ້ານຕຸ້ມລີທົ່ງ ແລະ ຕຸ້ມລີຂາວ, ເມືອງຕະໂອ້ຍ, ແຂວງສາລະວັນ.

ຈຸດປະສົງໃນການສຶກສາຄັ້ງນີ້ແມ່ນ: (1) ປະເມີນການນຳໃຊ້ທີ່ດິນຂອງປະຊາຊົນກ່ອນ ແລະ ຫຼັງ ການສຳປະທານທີ່ດິນໃນລະຫວ່າງ ປີ 2008 ແລະ ປີ 2010, (2) ສັງລວມຮູບແບບການຖືຄອງທີ່ດິນຂອງປະຊາຊົນ ພາຍຫຼັງທີ່ມີການສຳປະທານທີ່ດິນ ແລະ (3) ປະເມີນທັດສະນະຂອງປະຊາຊົນພາຍຫຼັງທີ່ມີການສຳປະທານທີ່ດິນ.

ວິທີການສຶກສາ ແມ່ນໄດ້ສຶກສາໂດຍການສຳພາດອຳນາດການປົກຄອງບ້ານ, ເຖົ້າແກ່ແນວໂຮມ ແລະ ປະຊາຊົນ. ໃນການສຳພາດປະຊາຊົນແມ່ນຈະສຳພາດເອົາ 30 ເປີເຊັນ ຂອງຄອບຄົວທັງໝົດພາຍໃນບ້ານຄື: ບ້ານຕຸ້ມລີທົ່ງສຳພາດເອົາ 27 ຄອບຄົວ ແລະ ບ້ານຕຸ້ມລີຂາວສຳພາດເອົາ 24 ຄອບຄົວ.

ຜົນຂອງການສຶກສາການປະເມີນການນຳໃຊ້ທີ່ດິນຂອງປະຊາຊົນທີ່ ບ້ານຕຸ້ມລີທົ່ງມີທີ່ດິນ 3 ປະເພດໃຫຍ່ຄື: ດິນກະສິກຳ, ດິນປ່າໄມ້ ແລະ ດິນປຸກສ້າງ. ເຊິ່ງມີເນື້ອທີ່ລວມທັງໝົດ 2,610.99 ເຮັກຕາ ໃນນັ້ນ ແມ່ນທີ່ດິນປ່າໄມ້ມີເນື້ອທີ່ຫຼາຍກ່ວາໝູ່ ເຊິ່ງມີເຖິງ 1,661.67 ເຮັກຕາ (63.64 ເປີເຊັນ) ແລະ ເນື້ອທີ່ໜ້ອຍກ່ວາໝູ່ມີ 13 ເຮັກຕາ (0.5 ເປີເຊັນ) ຂອງເນື້ອທີ່ທັງໝົດຂອງບ້ານ. ສ່ວນບ້ານຕຸ້ມລີຂາວ ແມ່ນມີທີ່ດິນ 3 ປະເພດໃຫຍ່ເຊັ່ນດຽວກັນ ມີເນື້ອທີ່ທັງໝົດ 1841.94 ເຮັກຕາ ໃນນີ້ແມ່ນດິນກະສິກຳເນື້ອທີ່ຫຼາຍກວ່າໝູ່ມີ 914.81 ເຮັກຕາ (51.57 ເປີເຊັນ) ຂອງເນື້ອທີ່ທັງໝົດຂອງບ້ານ ແລະ ໜ້ອຍກ່ວາໝູ່ແມ່ນທີ່ດິນປຸກສ້າງມີ 15.37 ເຮັກຕາ (0.83).

ພາຍຫຼັງສຳປະທານທີ່ດິນ ການປ່ຽນແປງການນຳໃຊ້ທີ່ດິນແຕ່ ປີ 2008 ຫາ ປີ 2010 ຂອງຄອບຄົວຕົວຢ່າງ ບ້ານຕຸ້ມລີທົ່ງເນື້ອທີ່ນຳໃຊ້ທັງໝົດຈາກ 25.04 ເຮັກຕາ ເພີ່ມຂຶ້ນເປັນ 31.1 ເຮັກຕາ ແຕ່ໃນນີ້ເນື້ອທີ່ດິນທີ່ນຳໃຊ້ສະເລ່ຍຕໍ່ຄອບຄົວຈາກ 0.88 ເຮັກຕາ/ຄອບຄົວ ມາເປັນ 1.109,2 ເຮັກຕາ/ຄອບຄົວ. ສ່ວນບ້ານຕຸ້ມລີຂາວເນື້ອທີ່ນຳໃຊ້ທັງໝົດຈາກ 19.39 ເຮັກຕາ ເພີ່ມຂຶ້ນເປັນ 22.96 ເຮັກຕາ ແຕ່ໃນນີ້ເນື້ອທີ່ດິນທີ່ນຳໃຊ້ສະເລ່ຍຕໍ່ຄອບຄົວຈາກ 0.807 ເຮັກຕາ/ຄອບຄົວ ມາເປັນ 0.912 ເຮັກຕາ/ຄອບຄົວ.

ໃນນີ້ຮູບແບການຖືຄອງທີ່ດິນຂອງ 2 ບ້ານແມ່ນຄືກັນເຊັ່ນ: ແບບລວມໝູ່ ແລະ ແບບສ່ວນຕົວ, ສ່ວນການໄດ້ມາໃນການຖືຄອງ ແລະ ນຳໃຊ້ທີ່ດິນ ຂອງຄອບຄົວຕົວຢ່າງບ້ານຕຸ້ມລີທົ່ງ ມີ

ເນື້ອທີ່ສືບມູນທັງໝົດ 0.65 ເຮັກຕາ (ມີ 5 ຕອນ) ເຊັ່ນ: ດິນນາ ມີ 1 ຄອບຄົວ ເຊິ່ງມີເນື້ອທີ່ 0.5 ເຮັກຕາ ແລະ ດິນສວນ ມີ 4 ຄອບຄົວ ເຊິ່ງມີເນື້ອທີ່ 0.15 ເຮັກຕາ. ສ່ວນບ້ານຕຸ້ມລືຂາວມີເນື້ອທີ່ສືບມູນ 1.9 ເຮັກຕາ, (ມີ 8 ຕອນ) ເຊັ່ນ: ດິນນາ ມີ 2 ຄອບຄົວ ເຊິ່ງມີເນື້ອທີ່ 1.30 ເຮັກຕາ, ດິນປຸກສ້າງ ມີ 4 ຄອບຄົວ ເຊິ່ງມີເນື້ອທີ່ 0.26 ເຮັກຕາ ແລະ ດິນສວນ ມີ 2 ຄອບຄົວ ເຊິ່ງມີເນື້ອທີ່ 0.34 ເຮັກຕາ.

ບ້ານຕຸ້ມລືທົ່ງ ມີເນື້ອທີ່ສັບສ່າວ 30.45 ເຮັກຕາ (ມີ 71 ຕອນ) ເຊັ່ນ: ດິນໄຮ່ ມີ 26 ຄອບຄົວ ເຊິ່ງມີເນື້ອທີ່ 18.45 ເຮັກຕາ, ດິນນາ ມີ 8 ຄອບຄົວ ເຊິ່ງມີເນື້ອທີ່ 4.44 ເຮັກຕາ, ດິນສວນ ມີ 14 ຄອບຄົວ ເຊິ່ງມີເນື້ອທີ່ 6.56 ເຮັກຕາ ແລະ ດິນປຸກສ້າງ ມີ 23 ຄອບຄົວ ເຊິ່ງມີເນື້ອທີ່ 1 ເຮັກຕາ. ສ່ວນບ້ານຕຸ້ມລືຂາວມີເນື້ອທີ່ສັບສ່າວ 21.06 ເຮັກຕາ (ມີ 64 ຕອນ) ເຊັ່ນ: ດິນໄຮ່ ມີ 24 ຄອບຄົວ ເຊິ່ງມີເນື້ອທີ່ 14.70 ເຮັກຕາ, ດິນນາ ມີ 6 ຄອບຄົວ ເຊິ່ງມີເນື້ອທີ່ 1.94 ເຮັກຕາ, ດິນສວນ ມີ 14 ຄອບຄົວ ເຊິ່ງມີເນື້ອທີ່ 3.61 ເຮັກຕາ ແລະ ດິນປຸກສ້າງ ມີ 20 ຄອບຄົວ ເຊິ່ງມີເນື້ອທີ່ 0.81 ເຮັກຕາ.

ສໍາລັບທັດສະນະຂອງສອງບ້ານແມ່ນມີສອງຢ່າງຄື: ທັດສະນະຄວາມພໍໃຈຂອງປະຊາຊົນຕໍ່ການເຂົ້າມາຂອງບໍລິສັດ ແລະ ທັດສະນະຂອງປະຊາຊົນກ່ຽວກັບການດໍາລົງຊີວິດ ພາຍຫຼັງທີ່ມີການສໍາປະທານທີ່ດິນເພື່ອປູກໄມ້ວິກ. ເຊິ່ງສ່ວນໃຫຍ່ແລ້ວປະຊາຊົນທັງສອງບ້ານ ແມ່ນມີທັດສະນະຄ້ອນຂ້າງຄ້າຍຄືກັນເຊັ່ນ: ທັດສະນະຄວາມພໍໃຈຂອງປະຊາຊົນ ທີ່ມີຕໍ່ການເຂົ້າມາຂອງບໍລິສັດ ມີ 13.7 ເປີເຊັນ, ທັດສະນະຄວາມບໍ່ພໍໃຈຂອງປະຊາຊົນຕໍ່ການເຂົ້າມາຂອງບໍລິສັດ ມີ 70.6 ເປີເຊັນ, ທັດສະນະຄວາມພໍໃຈປານກາງຂອງປະຊາຊົນຕໍ່ການເຂົ້າມາຂອງບໍລິສັດ ມີ 15.7 ເປີເຊັນ ແລະ ທັດສະນະຊີວິດການເປັນຢູ່ຂອງປະຊາຊົນມີການປ່ຽນແປງດີຂຶ້ນ 13.7 ເປີເຊັນ, ທັດສະນະຊີວິດການເປັນຢູ່ຂອງປະຊາຊົນບໍ່ມີການປ່ຽນແປງ 86.3 ເປີເຊັນ.

**ສາລະບານ**

ເນື້ອໃນ ໜ້າ


ຄຳຂອບໃຈ ....................................................................................................iii
ບົດຄັດຫຍໍ້ ....................................................................................................iv
ສາລະບານ ....................................................................................................vi
ສາລະບານຕາຕາລາງ .........................................................................................ix
ສາລະບານຮູບ .................................................................................................x

**1. ພາກສະເໜີ........................................................................................1**

1.1 ເຫດຜົນຂອງການສຶກສາ...........................................................................2
1.2 ຄຳຖາມຄົ້ນຄ້ວາ.....................................................................................3
1.3 ຈຸດປະສົງຂອງການສຶກສາ.........................................................................3
1.4 ຂອບເຂດຂອງການສຶກສາ..........................................................................4

**2. ທົບທວນເອກະສານ. ..............................................................................4**

2.1 ນິຍາມຄຳສັບ...........................................................................................4
2.2 ການຖືຄອງ (ຄອບຄອງ) ທີ່ດິນ.....................................................................6
2.3 ການຈັດແບ່ງເຂດ ແລະ ປະເພດທີ່ດິນ..........................................................7
2.4 ການຂຶ້ນທະບຽນທີ່ດິນ.................................................................................7
2.5 ການເຊົ່າ ແລະ ການສຳປະທານທີ່ດິນ...........................................................8
2.6 ການສຳປະທານທີ່ດິນລັດເພື່ອກິດຈະກຳການກະສິກຳ ແລະ ປ່າໄມ້.....................8
2.7 ການນຳໃຊ້ທີ່ດິນໃນ ສ ປ ປ ລາວ...............................................................9
2.8 ບັນຫາທີ່ດິນຕໍ່ກັບການດຳລົງຊີວິດຂອງປະຊາຊົນ..........................................10
2.9 ພັນທະໃນການປ່ຽນແປງປະເພດການນຳໃຊ້ທີ່ດິນ ແລະ ອັດຕາຄ່າສຳປະ ທານທີ່ດິນຂອງລັດ.........................................................................................10
2.9.1 ພັນທະໃນການຫັນປ່ຽນປະເພດການນຳໃຊທີ່ດິນ..........................................10
2.9.2 ການທົດແທນຄ່າເສຍຫາຍທີ່ດິນທີ່ໃຫ້ເຊົ່າ ແລະ ໃຫ້ສຳປະທານ.....................12
2.9.3 ຂັ້ນຕອນການເຊົ່າ ແລະ ສຳປະທານທີ່ດິນຢູ່ແຂວງສາລະວັນ..........................12

**3. ວິທີການສຶກສາ ແລະ ການວິເຄາະຂໍ້ມູນ.......................................................13**

3.1 ວິທີການສຶກສາ. ......................................................................................13

3.1.1 ພາກຫ້ອງການ.......................................................................................13

3.1.2 ພາກສະໜາມ.........................................................................................14

3.2 ການວິເຄາະຂໍ້ມູນ.....................................................................................14

**4. ສະຖານທີ່ການສຶກສາ. .................................................................................14**

4.1 ສະພາບທົ່ວໄປຂອງເມືອງຕະໂອ້ຍ............................................................14

4.2 ສະພາບການລົງທຶນພາຍໃນເມືອງຕະໂອ້ຍ ປີ 2010. ....................................16

4.2.1 ການຈັດຕັ້ງປະຕິບັດການລົງທຶນພາຍໃນເມືອງຕະໂອ້ຍ.................................16

4.3 ປະຫວັດຄວາມເປັນມາຂອງບ້ານຕຸ້ມລີທີ່ງ ແລະ ຕຸ້ມລີຂາວ.............................17

4.3.1 ປະຫວັດຄວາມເປັນມາຂອງບ້ານຕຸ້ມລີທີ່ງ................................................17

4.3.2 ປະຫວັດຄວາມເປັນມາຂອງບ້ານຕຸ້ມລີຂາວ...............................................18

4.4 ສະພາບຈຸດທີ່ຕັ້ງຂອງບ້ານຕຸ້ມລີທີ່ງ ແລະ ຕຸ້ມລີຂາວ......................................20

4.4.1 ສະພາບຈຸດທີ່ຕັ້ງຂອງບ້ານຕຸ້ມລີທີ່ງ.........................................................20

4.4.2 ສະພາບຈຸດທີ່ຕັ້ງຂອງບ້ານຕຸ້ມລີຂາວ.......................................................20

4.5 ພົນລະເມືອງ ແລະ ອາຊີບ......................................................................21

4.6 ວັດທະນະທຳ ແລະ ສັງຄົມ......................................................................22

4.7 ການຜະລິດກະສິກຳຂອງປະຊາຊົນ............................................................25

**5. ຜົນຂອງການສຶກສາ. ...............................................................................26**

5.1 ສະພາບການນຳໃຊ້ທີ່ດິນກ່ອນ ແລະ ຫຼັງ ການສຳປະທານທີ່ດິນ.........................26

5.1.1 ສະພາບການນຳໃຊ້ທີ່ດິນກ່ອນສຳປະທານປີ 2008. ...................................26

5.1.2 ສະພາບການນຳໃຊ້ທີ່ດິນພາຍຫຼັງທີ່ມີການສຳປະທານປີ 2010. ....................27

5.2 ປະເພດການນຳໃຊ້ທີ່ດິນກ່ອນ ແລະ ຫຼັງການສຳປະທານທີ່ດິນ..........................28

5.2.1 ປະເພດການນຳໃຊ້ທີ່ດິນກ່ອນການສຳປະທານທີ່ດິນ ປີ 2008......................28

5.2.2 ປະເພດການນຳໃຊ້ທີ່ດິນພາຍຫຼັງການສຳປະທານທີ່ດິນ ປີ 2010...................29

5.2.3 ການນຳໃຊ້ທີ່ດິນຂອງຄອບຄົວຕົວຢ່າງ......................................................35

5.3 ການຖືຄອງການນຳໃຊ້ທີ່ດິນ......................................................................40

5.3.1 ສະພາບການຖືຄອງທີ່ດິນ....................................................................40
5.3.2 ການຈັດແບ່ງປະເພດການຖືຄອງທີ່ດິນ......................................................41
5.3.3 ການຖືຄອງທີ່ດິນໃນລະດັບບ້ານ.............................................................41
5.3.4 ການຖືຄອງທີ່ດິນໃນລະດັບຄອບຄົວ ຫຼື ບຸກຄົນ..........................................41
5.3.5 ການຖືຄອງທີ່ດິນສໍາລັບຄອບຄົວທີ່ໄດ້ສໍາພາດ 30 ເປີເຊັນ...........................42
5.4 ການເສຍພາສີທີ່ດິນຂອງປະຊາຊົນ.............................................................46
5.5 ປະເມີນທັດສະນະຂອງປະຊາຊົນຕໍ່ກັບການສໍາປະທານທີ່ດິນ............................47
5.5.1 ທັດສະນະຂອງປະຊາຊົນທີ່ມີຕໍ່ບໍລິສັດທີ່ມາສໍາປະທານທີ່ດິນເພື່ອປູກໄມ້ວິກ......48
5.5.2 ທັດສະນະຂອງປະຊາຊົນຕໍ່ກັບການດໍາລົງຊີວິດພາຍຫຼັງການສໍາປະທານທີ່ດິນ...49

**6. ສະຫຼຸບ ແລະ ຂໍ້ສະເໜີແນະ.........................................................................51**

6.1 ສະຫຼຸບ...............................................................................................51
6.2 ຂໍ້ສະເໜີແນະ.......................................................................................53

ເອກະສານອ້າງອີງ. ....................................................................................54
ເອກະສານແນບທ້າຍ. .................................................................................56

# ສາລະບານຕາຕາລາງ

ຕາຕາລາງທີ: ໜ້າ


1: ອັດຕາຄ່າທຳນຽມການຫັນປ່ຽນທີ່ດິນ.............................................................11

2: ອັດຕາຄ່າທຳນຽມການສຳປະທານທີ່ດິນ........................................................11

3: ຈຳນວນປະຊາກອນ ແລະ ຊົນເຜົ່າພາຍໃນບ້ານ..............................................21

4: ຈຳນວນສັດລ້ຽງຂອງປະຊາຊົນ......................................................................25

5: ປະເພດການນຳໃຊ້ທີ່ດິນກ່ອນການສຳປະທານທີ່ດິນປີ 2008.............................28

6: ປະເພດການນຳໃຊ້ທີ່ດິນຫຼັງການສຳປະທານທີ່ດິນ............................................30

7: ປະເພດການນຳໃຊ້ທີ່ດິນຂອງປະຊາຊົນບ້ານຕຸ້ມລີທົ່ງປີ 2008 ແລະ ປີ 2010........35

8: ການຜະລິດເຂົ້າຂອງຂອງປະຊາຊົນບ້ານຕຸ້ມລີທົ່ງປີ 2008 ແລະ ປີ 2010. ...........36

9: ປະເພດການນຳໃຊ້ທີ່ດິນຂອງປະຊາຊົນບ້ານຕຸ້ມລີຂາວປີ 2008 ແລະ ປີ 2010.....38

10: ການຜະລິດເຂົ້າຂອງປະຊາຊົນບ້ານຕຸ້ມລີຂາວປີ 2008 ແລະ ປີ 2010...............39

11: ຮູບແບບການຖືຄອງທີ່ດິນຂອງປະຊາຊົນໃນການໄດ້ມາຈາກການສືບມູນ.............42

12 : ຮູບແບບການຖືຄອງທີ່ດິນນຂອງປະຊາຊົນໃນການໄດ້ມາຈາກການສັບສ່າວ........44

13: ທັດສະນະຂອງປະຊາຊົນຕໍ່ບໍລິສັດທີ່ມາສຳປະທານເພື່ອປູກໄມ້ວິກ.....................49

14: ທັດສະນະຂອງປະຊາຊົນຕໍ່ກັບການດຳລົງຊີວິດພາຍຫຼັງການສຳປະທານທີ່ດິນ.......50

# ສາລະບານຮູບ

ຮູບທີ: ໜ້າ

1: ແຜນທີ່ສະແດງຈຸດສະຖານທີ່ການສຶກສາ.......................................................15
2: ໂຄງຮ່າງການຈັດຕັ້ງຂອງທັງສອງບ້ານ...........................................................23
3: ແຜນທີ່ການນຳໃຊ້ທີ່ດິນບ້ານຕຸ້ມລີທົ່ງ.........................................................31
4: ແຜນທີ່ການນຳໃຊ້ທີ່ດິນບ້ານຕຸ້ມລີຂາວ........................................................31
5: ສົມທຽບການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີທົ່ງປີ 2008 ແລະ ປີ 2010........32
6: ການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີທົ່ງ ປີ 2008 ແລະ ປີ 2010..................32
7: ສົມການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີຂາວ ປີ 2008 ແລະ ປີ 2010...........33
8: ການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີຂາວ ປີ 2008 ແລະ ປີ 2010................34
9: ສົມທຽບການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີທົ່ງປີ 2008 ແລະ ປີ 2010........36
10: ສົມທຽບການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີຂາວປີ2008 ແລະ ປີ 2010.....38
11: ຮູບແບບການຖືຄອງແບບສືບມູນມໍລະດົກບ້ານຕຸ້ມລີທົ່ງ ປີ 2010. ....................43
12: ຮູບແບບການຖືຄອງແບບສືບມູນມໍລະດົກບ້ານຕຸ້ມລີຂາວ ປີ 2010. ..................43
13: ຮູບແບບການຖືຄອງແບບສັບສ່າວບ້ານຕຸ້ມລີທົ່ງ ປີ 2010. ..............................45
14: ຮູບແບບການຖືຄອງແບບສັບສ່າວບ້ານຕຸ້ມລີຂາວ ປີ 2010. ............................45
15: ການເສຍພາສີທີ່ດິນກະສິກຳຂອງຄອບຄົວຕົວຢ່າງບ້ານຕຸ້ມລີທົ່ງ ປີ 2010. .........46
16: ການເສຍພາສີກະສິກຳຂອງຄອບຄົວຕົວຢ່າງບ້ານຕຸ້ມລີຂາວ ປີ 2010. ..............47
17: ການສົນທະນາກ່ຽວກັບການນຳໃຊ້ທີ່ດິນ ແລະ ສະພາບການສຳປະທານທີ່ດິ........72
18: ການຍ່າງສັງເກດເບິ່ງພື້ນທີ່ນາເຮືອ ແລະ ນາເຟືອງ..........................................72
19: ສະພາບບ້ານເຮືອນຂອງປະຊາຊົນ. ...........................................................73
20: ພື້ນທີ່ປະຊາຊົນເຮັດໄຮ່ ແລະ ສະພາບປ່າໄມ້. ..............................................73
21: ສະພາບພື້ນທີ່ສຳປະທານກະຖິນປູກໄມ້ຂອງບໍລິສັດ.....................................74
22: ສະພາບປ່າໄມ້ທີ່ປະຊາຊົນນຳໃຊ້ ທີ່ຜ່ານການເຮັດໄຮ່ມາໄດ້ຫຼາຍປີແລ້ວ............74
23: ສະພາບສວນປູກໄມ້ວິກຂອງບໍລິສັດທີ່ປູກໄດ້ 2 ປີ ແລ້ວ...............................75
24: ການຊັບຊ່າວ ແລະ ຖືຄອງທີ່ດິນໃໝ່ຂອງປະຊາຊົນ......................................75
25: ສະພາບສາຍນ້ຳຍາມແລ້ງ ແຕ່ກໍ່ເຄີຍມີນ້ຳຫຼາຍ...........................................76
26: ສວນປູກໄມ້ວິກຂອງບໍລິສັດທີ່ໃຫ້ປະຊາຊົນປູກເຂົ້າໃສ່ຕາມຫວ່າງຕົ້ນໄມ້.............76
27: ການເຮັດຮົ້ວ ແລະ ສວນມັນຕົ້ນທີ່ປະຊາຊົນປູກແຮໄວ້ເວລາເຂົ້າໝົດ ແລະ
ເກືອສັດ..................................................................................................77
28: ການຮັບຈ້າງເລື່ອຍໄມ້ຂອງປະຊາຊົນທີ່ເປັນສ່ວນໜຶ່ງຂອງລາຍຮັບຂອງເຂົາເຈົ້າ...77

29: ສະພາບປ່າໄມ້ທີ່ຖືກບຸກລຸກຢ່າງຮ້າຍແຮງໃນພື້ນທີ່ຂອງບ້ານທີ່ບໍ່ມີການຈັດສັນ......88
30: ພິທີຊີວິດຂອງປະຊາຊົນທີ່ຖືຄອງ ແລະ ນຳໃຊ້ທີ່ດິນແບບລວມໝູ່......................88
31: ການອອກແຮງງານລວມບ້ານທີ່ມີແຕ່ຜູ້ຍິງ ແລະ ເດັກນ້ອຍ...............................89
32: ສະພາບໄຮ່ທີ່ຈູດແລ້ວທີ່ກຽມຈະປູກເຂົ້າຂອງປະຊາຊົນ...................................89

## 1. ພາກສະເໜີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດທີ່ມີເນື້ອທີ່ດິນກ້ວາງຂວາງ ຈຳນວນປະຊາກອນຕ່ຳ ຖ້າທຽບໃສ່ບັນດາປະເທດໃນພາກພື້ນອາຊີ ແລະ ເປັນປະເທດທີ່ຍັງມີຊັບພະຍາກອນທາງດ້ານທຳມະຊາດຍັງອຸດົມສົມບູນຢູ່ ເຊິ່ງຈະເປັນທ່າແຮງອັນສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ເຊັ່ນ: ຊັບພະຍາກອນທີ່ດິນ, ນ້ຳ, ປ່າໄມ້, ຊີວະນາໆພັນ, ແຮ່ທາດ, ແຫຼ່ງທຳມະຊາດ, ສະຖານທີ່ປະຫວັດສາດ ແລະ ວັດທະນະທຳ. ຖ້າຊັບພະຍາກອນເຫຼົ່ານັ້ນຫາກບໍ່ໄດ້ຮັບເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ແລ້ວ ເຊິ່ງຕ່າງຝ່າຍຕ່າງນຳໃຊ້, ໃຊ້ພໍໃຜພໍລາວ, ບໍ່ມີຫຼັກການ ແລະ ບໍ່ລວມສູນກໍ່ຈະເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມມີຄວາມຫຍຸ້ງຍາກສັບສົນ ແລະ ຈະສົ່ງຜົນກະທົບທາງລົບຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ; ແຕ່ກົງກັນຂ້າມຖ້າຫາກທີ່ດິນ ແລະ ຊັບພະຍາກອນທຳມະຊາດໄດ້ຖືກຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ໃຫ້ມີຄວາມສົມດູນ ແລະ ດຸ່ນດ່ຽງກັນກໍ່ຈະເຮັດໃຫ້ດິນມີຄວາມອຸດົມສົມບູນ, ຮັກສາໄດ້ໄພທຳມະຊາດ ເຊັ່ນ: ໄພນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ອື່ນໆ ກໍ່ຈະບໍ່ເກີດຂຶ້ນ, ຖ້າເກີດຂຶ້ນກໍ່ຈະບໍ່ຮ້າຍແຮງ (ອົງການຄຸ້ມຄອງທີ່ດິນແຫ່ງຊາດ, 2009).

ເຖິງແມ່ນວ່າທີ່ດິນທັງໝົດໄດ້ລະບຸວ່າເປັນຊັບສົມບັດຂອງລັດກໍ່ຕາມ, ແຕ່ລະບົບການຖືຄອງທີ່ດິນດັ້ງເດີມຍັງມີການສືບຕໍ່ ແລະ ຍອມຮັບກັນຢ່າງຫຼວງຫຼາຍໃນເຂດຊົນນະບົດ. ອີງຕາມດຳລັດເລກທີ 117/ນຍ ວ່າດ້ວຍການຄຸ້ມຄອງນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ສະບັບລົງວັນທີ 05/10/1989, ດິນປ່າໄມ້ບໍ່ແມ່ນຊັບສົມບັດສ່ວນບຸກຄົນ, ມັນເປັນຊັບສົມບັດລວມຂອງຊາດ. ຕາມຫຼັກການແລ້ວລັດເປັນເຈົ້າຂອງ ແລະ ເປັນຜູ້ຈັດສັນປ່າໄມ້ ແລະ ທີ່ດິນປ່າໄມ້ ແລະ ສາມາດມອບໃຫ້ນຳໃຊ້ໃຫ້ເກີດປະໂຫຍດຕາມຄວາມປະສົງ. ຫຼັກການນີ້ແມ່ນໄດ້ຈັດຕັ້ງປະຕິບັດແລ້ວ ແຕ່ກໍ່ບໍ່ໄດ້ຮັບຜົນເທົ່າທີ່ຄວນ ໂດຍສະເພາະໃນເຂດຊົນນະບົດບ່ອນທີ່ມີການຖືຄອງຕາມປະເພນີຍັງປະຕິບັດຢູ່, ເຖິງວ່າຈະບໍ່ຮັບຮູ້ເປັນທາງການກໍ່ຕາມ, ກຳມະສິດຂອງເຂດແດນທີ່ໄດ້ກຳນົດໄວ້ເປັນຢ່າງດີ ຊາວບ້ານຍັງຮັບຮູ້ກັນເອງ (ສຳນັກງານນາຍົກລັດຖະມົນຕີ, 2005).

ວັດທະນະທຳ, ຮີດຄອງປະເພນີ, ຄວາມເຊື່ອຖື ແລະ ແນວຄວາມຄິດຂອງປະຊາຊົນໄດ້ກຳເນີດຈາກການປະຕິບັດ ແລະ ປະສົບການໃນຊີວິດຂອງເຂົາເຈົ້າ ເຊິ່ງເຮັດໃຫ້ສິດນຳໃຊ້ທີ່ດິນຂອງເຂົາເຈົ້າບໍ່ເຄີຍມີການບັນທຶກລະອຽດ ແລະ ມັນກໍ່ມີຄວາມຫຍຸ້ງຍາກທີ່ຈະບັນທຶກລົ້ມຄືນອີກ. ປະຊາຊົນຄິດວ່າດິນທັງໝົດ, ພືດ ແລະ ສັດປ່າກໍ່ເປັນກຳມະສິດຂອງພວກເຂົາໂດຍກົດປະເພນີທີ່ສືບທອດມາຈາກບັນພະບູລຸດຂອງພວກເຂົາ. ເພາະສະນັ້ນ ສິດໃນການປົກປັກຮັກສາ ແລະ ນຳໃຊ້ທີ່ດິນຕາມປະເພນີ ຈິ່ງຖືກຮັບຮອງເອົາໂດຍລັດຢູ່ຂັ້ນບ້ານ, ການນຳໃຊ້ຊັບພະຍາກອນທຳມະຊາດໃນປັດຈຸບັນແມ່ນມາຈາກການປະຕິບັດຕາມຮີດຄອງປະເພນີ ທີ່ໄດ້ພັດທະນາຕາມຄວາມພິເສດຂອງຊົນເຜົ່າ, ຄວາມເຊື່ອຖື, ພື້ນຖານທາງດ້ານວັດທະນະທຳ, ຫຼັກການທາງຮີດຄອງປະເພນີອື່ນໆຕໍ່ກັບສິດນຳໃຊ້ທີ່ໄດ້ສືບທອດກັນມາ ໄດ້ເຮັດໃຫ້ຊັບພະຍາກອນທຳມະຊາດທີ່ຢູ່ໃນເຂດບ້ານກາຍເປັນຊັບພະຍາກອນລວມໝູ່ເຊິ່ງເຂົາເຈົ້າໄດ້ຮັບຮູ້ການນຳໃຊ້ຂອງແຕ່ລະຄົນ.

ໃນປີ 1986, ກົນໄກທາງດ້ານເສດຖະກິດໃໝ່ໄດ້ເກີດຂຶ້ນ, ຄວາມຜາສຸກໃນການນຳໃຊ້ຊັບພະຍາກອນຂອງຊາວບ້ານໄດ້ຈືດຈາງລົງ ການປ່ຽນແປງໃນການນຳໃຊ້ຊັບພະຍາກອນໄດ້ເກີດຂຶ້ນໂດຍສະເພາະການກຳນົດສະຖານະພາບໃນການຖືຄອງທີ່ດິນ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ. ໃນໄລຍະນີ້ຊະນິດພັນພືດ, ເຄື່ອງປ່າຂອງດົງ ແລະ ສັດປ່າທີ່ຊົມໃຊ້ໜ້ອຍໃນໄລຍະຜ່ານມາໄດ້ກາຍເປັນສິນຄ້າຕະຫຼາດ. ດິນກະສິກຳທີ່ຈັບຈອງເພື່ອຜະລິດກະສິກຳເພື່ອລ້ຽງຊີບ ກໍ່ໄດ້ຂະຫຍາຍອອກເພື່ອປັບປຸງການເປັນຢູ່ໃຫ້ດີຂຶ້ນ ໂດຍບໍ່ໄດ້ຄຳນຶງເຖິງຜົນກະທົບທາງສະພາບແວດລ້ອມ, ໃນຂະນະດຽວກັນ ດິນປ່າໄມ້ກໍ່ຄ່ອຍໆຫຼຸດລົງ ແລະ ຜົນຜະລິດຂອງປ່າບົກແຫ້ງລົງເທື່ອລະໜ້ອຍ, ການຊ່ວງຊີງໃນການຄອບຄອງທີ່ດິນແມ່ນຮຸນແຮງໃນເຂດທີ່ມີການຜະລິດສິນຄ້າເພື່ອການຕະຫຼາດ. (ສະລະພອນ ອິນທະວົງ, 2007)

ແຕ່ໃນປັດຈຸບັນນີ້ ເນື່ອງຈາກວ່າ ປະຊາກອນໃນປະເທດແມ່ນເພີ່ມຂຶ້ນ ສະນັ້ນຄວາມຕ້ອງການໃນການພັດທະນາແມ່ນມີສູງເພື່ອປະເທດຊາດຫຼຸດພົ້ນອອກຈາກປະເທດທີ່ດ້ອຍພັດທະນາ. ດັ່ງນັ້ນ, ລັດຖະບານຈຶ່ງມີນະໂຍບາຍໃຫ້ມີການເຊົ່າ ແລະ ສຳປະທານທີ່ດິນຂຶ້ນໃຫ້ແກ່ນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດເຂົ້າມາສຳປະທານທີ່ດິນເປັນຕົ້ນ ເພື່ອການກະສິກຳ ແລະ ປ່າໄມ້, ການຂຸດຄົ້ນແຮ່ທາດ ແລະ ອື່ນໆ. ເນື່ອງຈາກວ່າການສຳປະທານແມ່ນມີເນື້ອທີ່ກ້ວາງ ແລະ ການບຸກເບີກເນື້ອທີ່ແມ່ນມີລັກສະນະເປີດແປນທີ່ເຮັດໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ (ເກດສະດົງ ສີລິທອນ, 2007).

## 1.1 ເຫດຜົນຂອງການສຶກສາ

ໃນປະຈຸບັນນີ້ຊັບພະຍາກອນທີ່ອຸດົມຮັ່ງມີຂອງປະເທດລາວ ສາມາດດຶງດູດຄວາມສົນໃຈຈາກນັກລົງທຶນມີຫຼາຍໂຄງການ, ເປັນຕົ້ນພາກສ່ວນເອກະຊົນທີ່ຢູ່ພາຍໃນປະເທດ ແລະ ປະເທດໃກ້ຄຽງໄດ້ເຂົ້າມາລົງທຶນໃນການເຊົ່າ ຫຼື ສຳປະທານທີ່ດິນນີ້ແມ່ນມີບົດບາດສຳຄັນທີ່ສຸດຕໍ່ການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນການນຳໃຊ້ເນື້ອທີ່ດິນເພື່ອປູກໄມ້, ການກະສິກຳ, ສ້າງເຂື່ອນໄຟຟ້ານ້ຳຕົກ ແລະ ອື່ນໆ (ໄມເຄີລ໌ ແຄນີລາຊາຣ໌, ບໍ່ລະບຸປີ)

ເນື່ອງຈາກວ່າ ການຖືຄອງ ແລະ ນຳໃຊ້ທີ່ດິນ ແມ່ນພົວພັນເຖິງການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ ໂດຍສະເພາະແມ່ນເຂດທີ່ຢູ່ຫ່າງໄກສອກຫຼີກ, ບ່ອນທີ່ບໍ່ມີການວາງແຜນນຳໃຊ້ທີ່ດິນ, ມອບດິນ-ມອບປ່າ, ການວາງລະບຽບການຕ່າງໆກ່ຽວກັບການຖືຄອງ ແລະ ນຳໃຊ້ທີ່ດິນ ຢູ່ໃນຂົງເຂດດັ່ງກ່າວນັ້ນ ເຊິ່ງເຮັດໃຫ້ເກີດຂໍ້ຂັດແຍ່ງ ແລະ ເກີດຜົນກະທົບທາງດ້ານສິ່ງແວດລ້ອມ-ສັງຄົມເກີດຂຶ້ນ. ດັ່ງນັ້ນ, ລັດຖະບານເຮົາຈຶ່ງໄດ້ອອກລະບຽບ ແລະ ຂໍ້ກຳນົດຕ່າງໆໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ, ທັງນີ້ກໍ່ເພື່ອແນໃສ່ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ເພື່ອຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນໃນຂົງເຂດຊົນນະບົດ ໂດຍຕິດພັນກັບການປົກປັກຮັກສາຊີວະນາໆພັນ ແລະ ສິ່ງແວດລ້ອມ ເພື່ອເພີ່ມທະວີເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ອີກຢ່າງໜຶ່ງເພື່ອສ້າງໃຫ້ປະຊາຊົນມີຄວາມຮູ້ ແລະ ປະສົບການກ່ຽວກັບວຽກງານດັ່ງກ່າວເປັນຕົ້ນ.

ໃນນັ້ນບ້ານຕຸ້ມລີທົ່ງ ແລະ ບ້ານຕຸ້ມລີຂາວ ບາງເຂດໄດ້ຖືກກຳນົດເປັນຂອບເຂດຂອງການສຳປະທານທີ່ດິນຂອງບໍລິສັດ ເພື່ອນຳໃຊ້ທີ່ດິນເຂົ້າໃນການປູກໄມ້ ແລະ ການກະສິກຳອື່ນໆ ໃນການສຳປະທານທີ່ດິນໃຫ້ແກ່ບໍລິສັດນັ້ນບາງເຂດກວມເອົາເຂດດິນຂອງປະຊາຊົນຖືຄອງຢູ່ ຈຶ່ງເຮັດໃຫ້ມີການຖົກຖຽງກັນເກີດຂຶ້ນ ເມື່ອມີການສຳປະທານທີ່ດິນເຂົ້າມາອາດຈະເຮັດໃຫ້ຊີວິດການເປັນຢູ່, ການຖືຄອງ ແລະ ການນຳໃຊ້ທີ່ດິນຂອງປະຊາຊົນມີການປ່ຽນແປງ. ດັ່ງນັ້ນພວກຂ້າພະເຈົ້າຈຶ່ງມີຄວາມສົນໃຈ ແລະ ເປັນເຫດຜົນທີ່ສຳຄັນໃນການສຶກສາຂໍ້ມູນ ການຖືຄອງ ແລະ ການນຳໃຊ້ທີ່ດິນຂອງປະຊາຊົນໃນບ້ານຕຸ້ມລີທົ່ງ ແລະ ບ້ານຕຸ້ມລີຂາວ, ເມືອງຕະໂອ້ຍ, ແຂວງສາລະວັນ ພາຍຫຼັງທີ່ໄດ້ມີການສຳປະທານທີ່ດິນ.

## 1.2 ຄຳຖາມຄົ້ນຄ້ວາ

ເປົ້າໝາຍຕົ້ນຕໍຂອງພວກເຮົາແມ່ນເພື່ອຢາກຄົ້ນຫາຄຳຕອບຂອງຄຳຖາມທີ່ສຳຄັນດັ່ງລຸ່ມນີ້ :

1. ປະເພດການນຳໃຊ້ທີ່ດິນຂອງປະຊາຊົນພາຍຫຼັງການສຳປະທານທີ່ດິນ (ໄລຍະປະຕິບັດຂອງບໍລິສັດສຳປະທານທີ່ດິນ) ມີການປ່ຽນແປງຄືແນວໃດ?

2. ສະພາບການຖືຄອງທີ່ດິນຂອງປະຊາຊົນພາຍຫຼັງການສຳປະທານມີຄືແນວໃດ?

3. ເມື່ອມີການສຳປະທານທີ່ດິນແລ້ວທັດສະນະຂອງປະຊາຊົນ ພາຍໃນເຂດສຳປະທານທີ່ດິນບ້ານດັ່ງກ່າວມີຄືແນວໃດ?

## 1.3 ຈຸດປະສົງຂອງການສຶກສາ

- ປະເມີນການນຳໃຊ້ທີ່ດິນຂອງປະຊາຊົນກ່ອນ ແລະ ຫຼັງການສຳປະທານທີ່ດິນ.
- ສັງລວມຮູບແບບການຖືຄອງທີ່ດິນຂອງປະຊາຊົນ ພາຍຫຼັງທີ່ມີການສຳປະທານທີ່ດິນ.
- ປະເມີນທັດສະນະຂອງປະຊາຊົນ ພາຍຫຼັງທີ່ມີການສຳປະທານທີ່ດິນ.

### 1.4 ຂອບເຂດຂອງການສຶກສາ

ແມ່ນໄດ້ສຶກສາເຖິງ ການນຳໃຊ້ທີ່ດິນຕາມປະເພນີຂອງປະຊາຊົນ ເຊັ່ນ: ການປ່ຽນແປງປະເພດການນຳໃຊ້ທີ່ດິນກ່ອນ ແລະ ຫຼັງທີ່ມີການສຳປະທານທີ່ດິນ (ໄລຍະປະຕິບັດ) ປະເພດການນຳໃຊ້ທີ່ດິນຂອງບ້ານ, ການນຳໃຊ້ທີ່ດິນກະສິກຳຂອງປະຊາຊົນ, ປະສິດທິພາບ ປະສິດທິຜົນຂອງການນຳໃຊ້ທີ່ດິນກະສິກຳຂອງປະຊາຊົນ, ຮູບແບບການຖືຄອງທີ່ດິນ (ຄອບຄອງທີ່ດິນ) ຂອງປະຊາຊົນ ເຊັ່ນ: ການໄດ້ມາຂອງສິດນຳໃຊ້ທີ່ດິນ, ການຢັ້ງຢືນ ການຖືຄອງທີ່ດິນດັ່ງກ່າວ ແລະ ທັດສະນະຂອງປະຊາຊົນພາຍຫຼັງການສຳປະທານທີ່ດິນ: ເມື່ອມີການສຳປະທານທີ່ດິນແລ້ວ ຊີວິດການເປັນຢູ່ຂອງປະຊາຊົນມີການປ່ຽນແປງແນວໃດ, ປະຊາຊົນມີຄວາມພໍໃຈແນວໃດ ຫຼື ບໍ່ພໍໃຈຕໍ່ກັບບໍລິສັດທີ່ເຂົ້າມາສຳປະທານທີ່ດິນຢູ່ບ້ານດັ່ງກ່າວນັ້ນ. ໂດຍການສຶກສາໄດ້ເນັ້ນໃສ່ການສຳພາດ, ການຍ່າງສັງເກດເບິ່ງພື້ນທີ່ຕ່າງໆ ໃນເຂດຄຸ້ມຄອງຂອງບ້ານ.

## 2. ທົບທວນເອກະສານ

### 2.1 ນິຍາມຄຳສັບ

ໂດຍເຫັນໄດ້ຄວາມສຳຄັນຂອງທີ່ດິນ ທີ່ຕິດກັບຜົນປະໂຫຍດຕົວຈິງຂອງປະຊາຊົນ ແລະເປັນພາຫະນະການຜະລິດທີ່ສຳຄັນຂອງປະຊາຊົນລາວ ໂດຍສະເພາະແມ່ນວຽກງານການຜະລິດ-ທຸລະກິດເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ຈຶ່ງມີຄວາມຈຳເປັນຕ້ອງມີການຄຸ້ມຄອງລວມສູນ ເພື່ອສ້າງປະໂຫຍກສູງສຸດໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມແຫ່ງຊາດ. ຈຶ່ງໄດ້ໃຫ້ຄຳນິຍາມກ່ຽວກັບທີ່ດິນໂດຍກຳນົດອອກເປັນລາຍລະອຽດຄື :

- **ທີ່ດິນ**

ທີ່ດິນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນເນື້ອທີ່ດິນເຊິ່ງນອນຢູ່ໃນເຂດແດນຂອງ ສປປ ລາວ, ປະກອບດ້ວຍໜ້າດິນ, ພື້ນດິນ, ພູຜາ, ເກາະດອນ ລວມທັງດິນພື້ນນ້ຳ, ນ່ານນ້ຳ ແລະ ນ່ານຟ້າ.

ທີ່ດິນແຫ່ງ ສປປ ລາວ ແມ່ນຊັບພະຍາກອນອັນຕົ້ນຕໍຂອງຊາດ ທີ່ເປັນບ່ອນດຳລົງຊີວິດ ແລະ ທຳມາຫາກິນຂອງພົນລະເມືອງລາວ, ເປັນພາຫະນະອັນສຳຄັນແຫ່ງການຜະລິດ, ການພັດທະນາເສດຖະກິດ - ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ໜ້າດິນ:** ໝາຍເຖິງທີ່ດິນທຸກຕອນທີ່ປະກອບມີຕົ້ນໄມ້, ເຄືອງປ່າຂອງດົງ, ຊີວະນາໆພັນ, ພືດ ແລະ ອື່ນໆ.

**ພື້ນດິນ:** ໝາຍເຖິງທີ່ດິນທຸກຕອນເຊິ່ງປະກອບມີແຮ່ທາດຕ່າງໆເຊັ່ນ : ແຮ່ທອງແດງ, ແຮ່ທອງປະສົມ, ຊັ້ນຫີນປູນ, ແຮ່ທອງແດງໃນຮູບແບບຫີນອັກຄະນີ, ສາຍແຮ່ຄຳ, ສາຍແຮ່ໂລຫະປະສົມ ( ກົ່ວ, ຊືນ, ເງິນ), ແກ້ວປະເສີດ ລວມທັງດິນດາກ, ຫີນແຮ່, ນ້ຳໃຕ້ດິນ ແລະ ອື່ນໆ.

**ພູຜາ:** ໝາຍເຖິງທີ່ດິນທຸກຕອນທີ່ເປັນພູຜາ.

**ເກາະດອນ:** ໝາຍເຖິງທີ່ດິນທຸກຕອນທີ່ຢູ່ກາງນ້ຳ ເຊິ່ງເກີດຂຶ້ນຕາມທຳມະຊາດ ຫຼື ທີ່ດິນປັ້ງຂຶ້ນໃໝ່ທີ່ຢູ່ໃນຂອບເຂດທີ່ດິນບໍລິເວນນ້ຳ.

**ດິນພື້ນນ້ຳ:** ໝາຍເຖິງທີ່ດິນທຸກຕອນທີ່ຢູ່ພື້ນນ້ຳໃນທີ່ດິນບໍລິເວນນ້ຳ ເຊິ່ງປະກອບມີສັດນ້ຳ, ພືດນ້ຳ, ແຮ່ທາດ ແລະ ອື່ນໆ.

**ນ່ານນ້ຳ ແລະ ນ່ານຟ້າ:** ໝາຍເຖິງຂອບເຂດດິນແດນທີ່ໄດ້ຢູ່ໃນສິດອຳນາດອະທິປະໄຕຂອງ ສປປ ລາວ ເຊິ່ງປະກອບມີສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ.

**ຊັບພະຍາກອນປ່າໄມ້ :** ໝາຍເຖິງຊັບພະຍາກອນຕ່າງໆທີ່ມີຊີວິດ ແລະ ບໍ່ມີຊີວິດ ເຊິ່ງປະກອບດ້ວຍ ດິນ, ພືດພັນ, ຕົ້ນໄມ້, ນ້ຳ, ສັດນ້ຳ, ສັດປ່າ ແລະ ອື່ນໆ ທີ່ມີທັງໝົດຢູ່ໃນຂອບເຂດທີ່ດິນປ່າໄມ້.

- **ກຳມະສິດກ່ຽວກັບທີ່ດິນ**

ທີ່ດິນ ແຫ່ງ ສປປ ລາວ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງລັດຖະທຳມະນູນ ເຊິ່ງແມ່ນລັດເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ແລະ ມອບໃຫ້ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງເສດຖະກິດນຳໃຊ້, ເຊົ່າ ຫຼື ສຳປະທານ; ມອບໃຫ້ກົມກອງປະກອບອາວຸດ, ອົງການຂອງລັດ, ອົງການຈັດຕັ້ງການເມືອງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນໃຊ້; ສຳລັບຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວນັ້ນ ແມ່ນໃຫ້ເຊົ່າ ຫຼື ສຳປະທານ.

- **ການໄດ້ຮັບສິດນຳໃຊ້ທີ່ດິນ**

ບຸກຄົນ ຫຼື ການຈັດຕັ້ງຈະໄດ້ຮັບສິດນຳໃຊ້ທີ່ດິນບົນພື້ນຖານໃດໜຶ່ງຕໍ່ໄປນີ້: ການມອບຂອງລັດ, ການໂອນ, ການສືບທອດມູນມໍລະດົກ.

- **ສິດຂອງຜູ້ນຳໃຊ້ທີ່ດິນ**

ຜູ້ໄດ້ສິດນຳໃຊ້ທີ່ດິນ ມີສິດຕ່າງໆດັ່ງຕໍ່ໄປນີ້: ສິດປົກປັກຮັກສາທີ່ດິນ, ສິດນຳໃຊ້ທີ່ດິນ, ສິດໄດ້ຮັບໝາກຜົນຈາກທີ່ດິນ, ສິດໂອນສິດນຳໃຊ້ທີ່ດິນ, ສິດສືບທອດສິດນຳໃຊ້ທີ່ດິນ.

- **ໃບຢັ້ງຢືນທີ່ດິນ**

ໃບຢັ້ງຢືນທີ່ດິນ ແມ່ນເອກະສານທາງການ ທີ່ຢັ້ງຢືນກ່ຽວກັບສິດໃຊ້ ທີ່ດິນກະສິກຳ ຫຼື ທີ່ດິນປ່າໄມ້ຊົ່ວຄາວ ເຊິ່ງອົງການປົກຄອງເມືອງ, ເທດສະບານ ອອກໃຫ້ບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດໃຊ້ທີ່ດິນນັ້ນ. ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບໃບຢັ້ງຢືນທີ່ດິນ ມີສິດທຳການສືບທອດຕາມອາຍຸຂອງໃບຢັ້ງຢືນໄດ້ ແຕ່ບໍ່ມີສິດໂອນ, ບໍ່ມີສິດເອົາໄປເປັນຮຸ້ນ, ບໍ່ມີສິດນຳໄປຄ້ຳປະກັນ ຫຼື ໃຫ້ເຊົ່າ.

- **ໃບຕາດິນ**

ໃບຕາດິນແມ່ນເອກະສານ ທີ່ເປັນຫຼັກຖານຕົ້ນຕໍອັນໜຶ່ງອັນດຽວ ກ່ຽວກັບສິດນຳໃຊ້ທີ່ດິນຢ່າງຖາວອນ ເຊິ່ງໄດ້ຄັດສຳເນົາຢ່າງຖືກຕ້ອງຈາກປື້ມທະບຽນທີ່ດິນ ເພື່ອມອບໃຫ້ແກ່ຜູ້ເປັນເຈົ້າຂອງທີ່ດິນພຽງໃບດຽວ ເພື່ອຖືໄວ້ເປັນຫຼັກຖານຢ່າງຍາວນານ ຈົນກວ່າຈະມີການປ່ຽນແປງໃໝ່ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ.

ກ່ອນຈະອອກໃບຕາດິນ ອົງການທີ່ກ່ຽວຂ້ອງຕ້ອງຕິດປະກາດ ຢູ່ອົງການຄຸ້ມຄອງທີ່ດິນ, ສຳນັກງານປົກຄອງເມືອງ, ເທດສະບານ, ສຳນັກງານປົກຄອງບ້ານ ບ່ອນທີ່ດິນຕັ້ງຢູ່, ອອກແຈ້ງການຜ່ານສື່ມວນຊົນຂອງລັດ, ລົງໜ້າໜັງສືພິມ ແລະ ປະກາດທາງວິທະຍຸກະຈາຍສຽງ ຫຼື ອອກໂທລະພາບ ໂດຍອີງໃສ່ເງື່ອນໄຂຕົວຈິງ ໃນການກຳນົດເກົ້າສິບວັນ ນັບແຕ່ວັນທີ່ລົງລາຍເຊັນໃສ່ໃບປະກາດເປັນຕົ້ນໄປ ເພື່ອໃຫ້ມວນຊົນຊາບ. ຖ້າວ່າພາຍໃນກຳນົດເວລາດັ່ງກ່າວ ຫາກບໍ່ມີການຕໍ່ວ່າຕໍ່ຂານ ຫຼື ການຕໍ່ວ່າຕໍ່ຂານນັ້ນ ຫາກຖືກແກ້ໄຂໄປແລ້ວຈຶ່ງອອກໃບຕາດິນ ໃຫ້ແກ່ຜູ້ໄດ້ຮັບສິດນຳໃຊ້ທີ່ດິນ (ສະພາແຫ່ງຊາດ, ກົດໝາຍວ່າດ້ວຍທີ່ດິນ, 2003).

- **ການປະເມີນຜົນ**

ແມ່ນຂະບວນການລວບລວມ ແລະ ວິເຄາະຂໍ້ມູນກ່ຽວກັບປັດໃຈການນຳເຂົ້າ, ຂະບວນການ ແລະ ຜົນໄດ້ຮັບ. ເພື່ອໄປປຽບທຽບກັບມາດຕະຖານ ຫຼື ສິ່ງກຳນົດໄວ້ວ່າເປັນໄປຢ່າງມີປະສິດທິຜົນ ຫຼື ປະສິດທິພາບ ຫຼື ບໍ່? ພຽງໃດ? ໂດຍອີງຕາມຈຸດປະສົງ, ເປົ້າໝາຍເວລາ ແລະ ງົບປະມານທີ່ກຳນົດໄວ້ (ສົງໄຊ ຈັນທະຄຳ ແລະ ວິໄລແສງສຸລິນ, 2009).

## 2.2 ການຖືຄອງ (ຄອບຄອງ) ທີ່ດິນ

ການຖືຄອງທີ່ດິນ ແມ່ນການມີກຳມະສິດໃນທີ່ດິນຕອນໃດໜຶ່ງ ຫຼື ຫຼາຍໆຕອນເຊິ່ງໄດ້ຮັບຮູ້ໃນກຸ່ມສັງຄົມ ແລະ ກ້າວໄປສູ່ການຄອບຄອງທີ່ມີການຂຶ້ນທະບຽນທີ່ດິນຢ່າງເປັນທາງການ ໃນນັ້ນຜູ້ຖືຄອງຈະມີສິດທິຕ່າງໆ ໃນການນຳໃຊ້ທີ່ບໍ່ເປັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ສະພາແຫ່ງຊາດ, 2003). ການນຳໃຊ້ ແລະ ຖືຄອງທີ່ດິນຕາມປະເພນີ ແມ່ນຮູບແບບໜຶ່ງຂອງສິດທິຕໍ່ດິນທີ່ປະຕິບັດກັນມາຕາມຮີດຄອງ ແລະ ປະເພນີ. ລະບົບການນຳໃຊ້ ແລະ ຖືຄອງຕາມປະເພນີທີ່ໄດ້ຜ່ານວິວັດທະນາການມາຫຼາຍສັດຕະວັດແລ້ວ ແລະ ຍັງສືບຕໍ່ມີຢູ່ຫຼາຍໆປະເທດທີ່ມີປະຊາກອນອາໄສຢູ່ເຂດຊົນນະບົດເປັນຈຳນວນຫຼວງຫຼາຍ ເຊິ່ງໃນນັ້ນຄວາມອາດສາມາດໃນການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນໄດ້ຖືກກຳນົດໄວ້ໃນຫຼັກການທີ່ປະເພນີໄດ້ກຳນົດໄວ້. ໂດຍທົ່ວໄປແລ້ວ, ສ່ວນປະກອບຂອງການນຳໃຊ້ ແລະ ຖືຄອງທີ່ດິນຕາມປະເພນີແມ່ນສະແດງເຖິງຄວາມກ່ຽວພັນກັນລະຫວ່າງພິທີທາງສາສະໜາ ແລະ ຄວາມເຊື່ອຖືຕໍ່ທີ່ດິນຕາມປະເພນີ, ສິດຂອງຊຸມຊົນໃນການຄວບຄຸມການໃຊ້, ການແຈກຢາຍທີ່ດິນ, ການເຂົ້າເປັນສະມາຊິກຂອງຊຸມຊົນເພື່ອໃຫ້ມີຄວາມສາມາດຈະນຳໃຊ້ທີ່ດິນ, ຂໍ້ຈຳກັດຂອງຊຸມຊົນໃນການພົວພັນກັບບຸກຄົນພາຍນອກ ແລະ ຫຼັກການໃນການສົ່ງທີ່ດິນທີ່ບໍ່ໄດ້ນຳໃຊ້ແລ້ວຄືນໃຫ້ແກ່ຊຸມຊົນ. ເນື່ອງຈາກມີການເນັ້ນໜັກຢ່າງແຮງກ້າເຖິງຄວາມຮັບຜິດຊອບໃນການ

ຄວບຄຸມ ແລະ ຄຸ້ມຄອງຂອງຊຸມຊົນ, ສະນັ້ນວິທີການນຳໃຊ້ ແລະ ຖືຄອງທີ່ດິນຕາມປະເພນີຍັງສາມາດເອີ້ນໄດ້ວ່າແມ່ນລະບົບການນຳໃຊ້ ແລະ ຖືຄອງທີ່ດິນສ່ວນຮ່ວມ.

ລະບົບການນຳໃຊ້ ແລະ ຖືຄອງ ແມ່ນກ່ຽວພັນເຖິງກຳມະສິດ ເຖິງຢ່າງໃດກໍ່ດີກຳມະສິດໃນທີ່ນີ້ບໍ່ແມ່ນສິ່ງຂອງແຕ່ມັນແມ່ນສາຍພົວພັນທາງສັງຄົມທີ່ບຸກຄົນ ຫຼື ກຸ່ມຂອງບຸກຄົນອາດມີ ຫຼື ປະຕິບັດ. ສະນັ້ນ ການນຳໃຊ້ ແລະ ການຖືຄອງທີ່ດິນກໍ່ສາມາດອະທິບາຍໄດ້ວ່າ ເປັນສາຍພົວພັນທາງສັງຄົມ ຫຼື ສະຖາບັນທີ່ການປົກຄອງສາມາດເຂົ້າຫາການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ. ຂຶ້ນຢູ່ກັບລັກສະນະຂອງການອ້າງສິດ, ບັນດານັກຄົ້ນຄ້ວາໄດ້ຈັດປະເພດຂອງສິດຕໍ່ກຳມະສິດອອກເປັນ 4 ປະເພດ ເຊິ່ງລວມມີກຳມະສິດຂອງລັດ, ກຳມະສິດຂອງສ່ວນບຸກຄົນ, ກຳມະສິດສ່ວນລວມ ແລະ ກຳມະສິດທີ່ເປີດກ້ວາງ ໃນການເຂົ້ານຳໃຊ້ ຫຼື ບໍ່ມີການກຳນົດສິດຕໍ່ຕອນດິນໃດໜຶ່ງແຕ່ຢ່າງໃດ (ກາຕຣິນ ຊີເດລ, 2007).

## 2.3 ການຈັດແບ່ງເຂດ ແລະ ປະເພດທີ່ດິນ

ທີ່ດິນ ໃນຂອບເຂດທົ່ວປະເທດໄດ້ຈັດແບ່ງເປັນເຂດ ແລະ ປະເພດ ດັ່ງຕໍ່ໄປນີ້ : ການຈັດແບ່ງເຂດຄື : ເຂດທົ່ງພຽງ, ພູພຽງ ແລະ ພູດອຍ ເຊິ່ງປະກອບດ້ວຍ : ເຂດຕົວເມືອງ, ເຂດຊົນນະບົດ, ເຂດເສດຖະກິດສະເພາະ, ເຂດເສດຖະກິດພິເສດ. ການຈັດແບ່ງປະເພດ ຄື: ທີ່ດິນກະສິກຳ, ທີ່ດິນປ່າໄມ້, ທີ່ດິນບໍລິເວນນ້ຳ, ທີ່ດິນອຸດສາຫະກຳ, ທີ່ດິນຄົມມະນາຄົມ, ທີ່ດິນວັດທະນະທຳ, ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ທີ່ດິນປຸກສ້າງ (ສະພາແຫ່ງຊາດ, ກົດໝາຍວ່າດ້ວຍທີ່ດິນ, 2003)

## 2.4 ການຂຶ້ນທະບຽນທີ່ດິນ

ການຂຶ້ນທະບຽນທີ່ດິນ ແມ່ນການຢັ້ງຢືນສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍໃຫ້ແກ່ບຸກຄົນ ຫຼື ການຈັດຕັ້ງ ເພື່ອບໍ່ໃຫ້ມີການປອມແປງສິດນຳໃຊ້ທີ່ດິນ, ອຳນວຍຄວາມສະດວກໃຫ້ແກ່ການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນ ຢ່າງເປັນເອກະພາບໃນທົ່ວປະເທດ.

ໃນການຂຶ້ນທະບຽນທີ່ດິນ ຕ້ອງຈົດກ່າຍຂໍ້ມູນຕ່າງໆເຂົ້າປື້ມທະບຽນທີ່ດິນ: ຊື່ ແລະ ນາມສະກຸນຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ, ( ຊື່ ແລະ ນາມສະກຸນຂອງຜົວ ແລະ ເມັຍ ໃນກໍລະນີເປັນສິນສົມສ້າງ), ປະເພດທີ່ດິນ, ຂອບເຂດ ແລະ ເນື້ອທີ່ຂອງທີ່ດິນ, ການໄດ້ມາ ແລະ ທີ່ຕັ້ງຂອງທີ່ດິນ (ສະພາແຫ່ງຊາດ, ກົດໝາຍວ່າດ້ວຍທີ່ດິນ, 2003).

## 2.5 ການເຊົ່າ ແລະ ການສຳປະທານທີ່ດິນ

ໂດຍອີງຕາມດຳລັດຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ໄດ້ກຳນົດຈຸດປະສົງ ແລະ ນິຍາມຂອງການເຊົ່າ ແລະ ການສຳປະທານທີ່ດິນໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼື ສຳປະທານ ແນໃສ່ເພື່ອຮັບປະກັນການຄຸ້ມຄອງ ແລະ ນຳໃຊ້ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ເຮັດໃຫ້ທີ່ດິນຂອງລັດໄດ້ຮັບການພັດທະນາ, ທັນທີ່ດິນເປັນທຶນທັງເປັນການສົ່ງເສີມການລົງທຶນເຂົ້າໃນການຜະລິດເປັນສິນຄ້າ, ການບໍລິການ ແລະ ການສ້າງແຫຼ່ງລາຍຮັບເຂົ້າງົບປະມານແຫ່ງລັດ.

- **ການເຊົ່າທີ່ດິນຂອງລັດ:** ແມ່ນການອະນຸຍາດໃຫ້ການຈັດຕັ້ງ, ບຸກຄົນ ຫຼື ນິຕິບຸກຄົນມີສິດໃຊ້ທີ່ດິນຂອງລັດຕາມເງື່ອນໄຂ ແລະ ກຳນົດເວລາໂດຍມີຂໍ້ຜູກພັນສັນຍາຢ່າງຖືກຕ້ອງຕາມລະບຽບກົດໝາຍ.
- **ການສຳປະທານທີ່ດິນ:** ແມ່ນການອະນຸຍາດໃຫ້ບຸກຄົນ ຫຼື ນິຕິບຸກຄົນເພື່ອດຳເນີນກິດຈະການ ໂດຍການມີສິດໃຊ້ທີ່ດິນຂອງລັດເຂົ້າໃນກິດຈະການອັນໃດອັນໜຶ່ງໄດ້ ຕາມເງື່ອນໄຂ ແລະ ກຳນົດເວລາ ໂດຍມີຂໍ້ຜູກພັນສັນຍາຢ່າງຖືກຕ້ອງຕາມລະບຽບກົດໝາຍ.

## 2.6 ການສຳປະທານທີ່ດິນລັດເພື່ອກິດຈະກຳການກະສິກຳ ແລະ ປ່າໄມ້

➢ **ການສຳປະທານທີ່ດິນຂອງລັດເພື່ອກິດຈະການກະສິກຳ ແລະ ປ່າໄມ້**

ການສຳປະທານທີ່ດິນຂອງລັດເພື່ອກິດຈະການກະສິກຳ ແລະ ປ່າໄມ້ ແມ່ນໃຫ້ດຳເນີນໃນພື້ນທີ່ທີ່ດິນກະສິກຳເພື່ອປູກພືດເສດຖະກິດ ທີ່ລັດໄດ້ຈັດສັນໄວ້ເທົ່ານັ້ນຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍ ກະສິກຳ. ທີ່ດິນຂອງລັດທີ່ໃຫ້ສຳປະທານເພື່ອກິດຈະການປູກໄມ້ອຸດສາຫະກຳ ຫລືໄມ້ເສດຖະກິດ ແລະ ເຄື່ອງປ່າຂອງດົງ ແມ່ນໃຫ້ດຳເນີນໃນພື້ນທີ່ ທີ່ດິນປອກໂລ້ນ, ທີ່ດິນປ່າຊຸດໂຊມທີ່ບໍ່ສາມາດຟື້ນຟູຄືນດ້ວຍຕົວມັນເອງທີ່ລັດໄດ້ຈັດສັນໄວ້ເທົ່ານັ້ນ.

ເຂດພື້ນທີ່ດິນທີ່ໃຫ້ສຳປະທານ ແມ່ນໃຫ້ດຳເນີນໃນເຂດພື້ນທີ່ດິນຊານເມືອງ ແລະ ຊົນນະບົດເທົ່ານັ້ນ.

➢ **ເງື່ອນໄຂການໃຫ້ສຳປະທານທີ່ດິນຂອງລັດເພື່ອກິດຈະການກະສິກຳ ແລະ ປູກໄມ້**

ການໃຫ້ສຳປະທານທີ່ດິນເພື່ອປູກພືດເສດຖະກິດ, ຟື້ນຟູປ່າ, ປູກປ່າ, ປູກຕົ້ນໄມ້ອຸດສາຫະກຳ, ໄມ້ເສດຖະກິດ, ເຄື່ອງປ່າຂອງດົງຕ້ອງປະຕິບັດຕາມເງື່ອນໄຂຕ່າງໆຕາມທີ່ໄດ້ກຳນົດໄວ້ດັ່ງນີ້:

1. ສຶກສາຂໍ້ມູນທາງດ້ານເສດຖະກິດ - ສັງຄົມ, ຄວາມເໝາະສົມທາງທຳມະຊາດເຊັ່ນ: ດິນ, ອາກາດ, ຄວາມສູງຈາກລະດັບນ້ຳທະເລ, ປະລິມານນ້ຳຝົນ, ແຫຼ່ງນ້ຳ, ສິດນຳໃຊ້ທີ່ດິນ, ແຮງງານທ້ອງຖິ່ນ, ສຳຫລວດສະພາບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ອື່ນໆທີ່ຈຳເປັນ.

2. ສ້າງບົດວິພາກເສດຖະກິດ - ເຕັກນິກ ໂດຍຜ່ານການຮັບຮອງຈາກອົງການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ແລະ ຂະແໜງການທີ່ກ່ຽວຂ້ອງ.

3. ສ້າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ແລະ ສັງຄົມລວມທັງມາດຕະການແກ້ໄຂຢ່າງເໝາະສົມ ໂດຍການຢັ້ງຢືນຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ.

4. ສ້າງແຜນດໍາເນີນງານ ໂດຍເລັ່ງໃສ່ການປົກປັກຮັກສາແຫລ່ງນໍ້າ ແລະ ສິ່ງແວດລ້ອມ, ການບຸກເບີກເນື້ອທີ່, ການສົ່ງເສີມປະຊາຊົນມີສ່ວນຮ່ວມໃນການດໍາເນີນການຜະລິດ, ການນໍາໃຊ້ເຕັກໂນໂລຊີ ແລະ ອື່ນໆ ຕະຫຼອດເຖິງການແບ່ງປັນຜົນປະໂຫຍດ.

5. ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງອື່ນໆ (ສໍານັກງານນາຍົກລັດຖະມົນຕີ, 2008).

## 2.7 ການນໍາໃຊ້ທີ່ດິນໃນ ສ ປ ປ ລາວ

ຊັບພະຍາກອນທີ່ດິນ ຄືຊັບພະຍາກອນທໍາມະຊາດອື່ນໆ ທີ່ມີບົດບາດໃນການດໍາລົງຊີວິດແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນລາວ. ການເຮັດໄຮ່ເລື່ອນລອຍຈະຕ້ອງໄດ້ພິຈາລະນາການນໍາໃຊ້ທີ່ດິນທີ່ເປັນບັນຫາໃຫຍ່ຢູ່ໃນເຂດພູສູງ ແລະ ພູດອຍ ທີ່ມີບັນຫາຂອງບັນດາຊົນເຜົ່າທີ່ຕັ້ງຖິ່ນຖານເປັນເວລາຍາວນານມາແລ້ວ ເຊິ່ງເປັນລະບົບການເຮັດໄຮ່ບໍ່ຄົງທີ່ມີການປ່ຽນແປງທໍາມະຊາດຢ່າງຮ້າຍແຮງ ແຕ່ກໍ່ມີໜ້ອຍທີ່ສຸດທີ່ຄົນເຮົາຈະກ່ຽວຂ້ອງກັບລະບົບການຄຸ້ມຄອງທີ່ດີ. ດັ່ງນັ້ນ, ລະບົບການນໍາໃຊ້ທີ່ດິນ ຕ້ອງໄດ້ຮັບການພິຈາລະນາຫາສາເຫດຕົ້ນຕໍໃນການນໍາໃຊ້ທີ່ດິນປ່າໄມ້ ເຊິ່ງເຮັດໃຫ້ເປີເຊັນການປົກຫຸ້ມຂອງປ່າມີການປ່ຽນແປງ ແລະ ການນໍາໃຊ້ທີ່ດິນຂອງປະຊາຊົນບໍ່ມີຫຼັກເກນກໍານົດຢ່າງແນ່ນອນຈຶ່ງເປັນຜົນກະທົບຫຼາຍເກີນໄປ.

ເຖິງແມ່ນວ່າພົນລະເມືອງລາວຈະມີໜ້ອຍກໍ່ຕາມ ຖ້າທຽບໃສ່ປະເທດໃກ້ຄຽງ, ການເຮັດໄຮ່ເລື່ອນລອຍ ແມ່ນຈຸດໃຈກາງຂອງການດໍາລົງຊີວິດຂອງປະຊາຊົນສ່ວນຫຼາຍໃນປະເທດເຮົາ. ຢ່າງໃດກໍ່ຕາມເຮົາກໍ່ມີໂອກາດອັນດີທີ່ຈະກໍ່ສ້າງ, ປັບປຸງລະບົບການຜະລິດ ແລະ ການນໍາໃຊ້ທີ່ດິນ ໂດຍຫຼັກການ, ເພາະບົດຮຽນການເຮັດໄຮ່ເລື່ອນລອຍ ແມ່ນປະຕູໜຶ່ງທີ່ເຮົາສາມາດຫຼີກລ້ຽງຄວາມຜິດພາດຂອງການນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ໃນຕໍ່ໜ້າ. ເພື່ອເປັນຊ່ອງທາງອອກໃນການຍອມຮັບ ແລະ ນໍາໃຊ້ຢ່າງຖືກຕ້ອງພາຍໃຕ້ການຄຸ້ມຄອງແບບປະເພນີ, ການສືບທອດ, ນໍາໄປສູ່ບໍ່ເຮັດໃຫ້ມີຜົນກະທົບ ແລະ ຂໍ້ຂັດແຍ່ງລະຫວ່າງບ້ານ.(ໄຊຍະສານ, 2008).

## 2.8 ບັນຫາທີ່ດິນຕໍ່ກັບການດຳລົງຊີວິດຂອງປະຊາຊົນ

ບັນຫາທີ່ດິນ ແລະ ບັນຫາອ້ອມແອ້ມທີ່ດິນ ມັນກ່ຽວພັນກັບຜົນປະໂຫຍດໂດຍກົງຕໍ່ກັບ ການດຳລົງຊີວິດ, ການທຳມາຫາກິນຂອງປະຊາຊົນບັນດາເຜົ່າ ນອກຈາກນີ້ຍັງມີຜົນກະທົບຕໍ່ກັບລະບົບນິເວດ ແລະ ສະພາບແວດລ້ອມຂອງປະເທດ, ໃນຂະນະດຽວກັນນັ້ນດິນກໍ່ແມ່ນເປົ້າໝາຍຂອງການລົງທຶນຈາກໂຄງການພາຍໃນ ແລະ ຕ່າງປະເທດ ເຫດການດັ່ງກ່າວໄດ້ກາຍເປັນບັນຫາທີ່ໂດດເດັ່ນທີ່ສຸດໃນ ສປປ ລາວ ໃນປະຈຸບັນ.

ການສຳປະທານທີ່ດິນເພື່ອສ້າງພື້ນຖານໂຄງລ່າງ ແລະ ການທຳການຜະລິດ ເຊັ່ນ: ການປູກຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ເກດສະໜາ, ຕົ້ນຢາງພາລາ ແລະ ອື່ນໆ ເພີ່ມຂຶ້ນນັບມື້ນັບຫຼາຍແສນເຮັກຕາ. ສະນັ້ນ ບັນຫາທີ່ດິນຖືເປັນທີ່ໜ້າສົນໃຈຂອງປະຊາຊົນທຸກຄົນ ເພາະວ່າໃນປະຈຸບັນນີ້ຈຳນວນພົນລະເມືອງກໍ່ນັບມື້ນັບເພີ່ມຂຶ້ນ ເຮັດໃຫ້ມີຄວາມຮຽກຮ້ອງຕ້ອງການນຳໃຊ້ທີ່ດິນ ເພື່ອສ້າງທີ່ຢູ່ອາໄສ ແລະ ທຳມາຫາກິນກໍ່ເພີ່ມຂຶ້ນເປັນເງົາຕາມຕົວເຮັດປະຊາຊົນມີເນື້ອທີ່ການຜະລິດ (ໄຮ່, ນາ, ສວນ) ບໍ່ພຽງພໍ ຈຳເປັນຕ້ອງໄດ້ໄປຖາງປ່າເຮັດໄຮ່ຕາມເຂດປ່າດົງທີ່ມີຄວາມເໝາະສົມ ແຕ່ໃນທາງກົງກັນຂ້າມຖ້າເຮັດແບບນີ້ ຊຳພັດຂັດຕໍ່ກົດໝາຍວ່າດ້ວຍທີ່ດິນເຂດຫວງຫ້າມປ່າສະຫງວນຕ່າງໆ. ໃນນີ້ສາເຫດທີ່ເຮັດໃຫ້ຄວາມຕ້ອງການນຳໃຊ້ທີ່ດິນໃນເຂດຊົນນະບົດນັບມື້ເພີ່ມຂຶ້ນ ເຊັ່ນ: ຈຳນວນປະຊາກອນເພີ່ມຂຶ້ນ, ການຂະຫຍາຍພື້ນຖານໂຄງລ່າງລົງສູ່ຊົນນະບົດ, ການຫັນຈາກການຜະລິດແບບກຸ້ມຢູ່ກຸ້ມກິນໄປສູ່ການຜະລິດເປັນສິນຄ້າ ແລະ ຄວາມຕ້ອງການໃນການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ( ອາຄົມ ຕຸນາລົມ, 2007).

## 2.9 ພັນທະໃນການປ່ຽນແປງປະເພດການນຳໃຊ້ທີ່ດິນ ແລະ ອັດຕາຄ່າສຳປະທານທີ່ດິນຂອງລັດ

### 2.9.1 ພັນທະໃນການຫັນປ່ຽນປະເພດການນຳໃຊທີ່ດິນ

ພັນທະໃນການຫັນປ່ຽນ ໃນການນຳໃຊ້ປະເພດທີ່ດິນ, ເພື່ອເຮັດໃຫ້ການຫັນປ່ຽນປະເພດການນຳໃຊ້ທີ່ດິນ ຈາກປະເພດໜຶ່ງໄປອີກປະເພດໜຶ່ງ ໃນຂອບເຂດທົ່ວປະເທດໃຫ້ມີຄວາມເອກະພາບກັນນັ້ນ (ສະພາ ແຫ່ງຊາດ, ກົດໝາຍວ່າດ້ວຍ ທີ່ດິນ, 2003).

ຕາມລັດຖະບັນຍັດຂອງປະທານປະເທດແຫ່ງ ສປປ ລາວ (ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008) ໄດ້ກຳນົດຄ່າທຳນຽມການຫັນປ່ຽນທີ່ດິນດັ່ງນີ້:

ຕາຕະລາງທີ 1: ອັດຕາຄ່າທຳນຽມການທັນປ່ຽນທີ່ດິນ

| ລ/ດ | ເປົ້າໝາຍການທັນປ່ຽນປະເພດທີ່ດິນ | ອັດຕາຄ່າທຳນຽມ ຕາແມັດ/ກີບ | | |
|---|---|---|---|---|
| | | ຕົວເມືອງ | ຊານເມືອງ | ຊົນນະບົດ |
| 1 | ດິນກະສິກຳເປັນດິນປຸກສ້າງເພື່ອການຄ້າ | 30,000 | 20,000 | 15,000 |
| 2 | ດິນກະສິກຳເປັນດິນປຸກສ້າງເພື່ອທີ່ຢູ່ອາໄສ | 300 | 200 | 100 |
| 3 | ດິນປຸກສ້າງມາເປັນດິນກະສິກຳ | 8 | 5 | 3 |
| 4 | ດິນປ່າໄມ້ທຳມະຊາດມາເປັນດິນປະເພດອື່ນ | 40,000 | 35,000 | 30,000 |

*ແຫຼ່ງຂໍ້ມູນ: ອົງການຄຸ້ມຄອງທີ່ດິນແຫ່ງຊາດ, 2008.*

ຕາຕະລາງ 2: ອັດຕາຄ່າທຳນຽມການສຳປະທານທີ່ດິນ

| ລ/ດ | ເປົ້າໝາຍຂອງການສຳປະທານທີ່ດິນຂອງລັດ | ອັດຕາຄ່າສຳປະທານທີ່ດິນເຮັກຕາຕໍ່ປີ ຫົວໜ່ວຍເປັນໂດລາ ( $) | | |
|---|---|---|---|---|
| | | ຊົນນະບົດ | ຊານເມືອງ | ຕົວເມືອງ |
| 1 | ກິດຈະການປູກພືດລົ້ມລຸກ ແລະ ພືດສະບຽງອາຫານ | 5 | 10 | 15 |
| 2 | ກິດຈະການລ້ຽງສັດໃຫ່ຍເຊັ່ນ: ງົວ, ຄວາຍ, ແບ້... | 5 | 10 | 20 |
| 3 | ກິດຈະການປູກພືດໃຫ້ໝາກ ແລະ ພືດຢືນຕົ້ນ | 5 | 10 | 20 |
| 4 | ກິດຈະການປູກພືດເສດຖະກິດ | 6 | 10 | 20 |
| 5 | ກິດຈະການປູກເຄື່ອງປ່າຂອງດົງ ແລະ ພືດເປັນຢາ | 7 | 15 | 25 |
| 6 | ກິດຈະການລ້ຽງສັດປີກ ແລະ ສັດນ້ອຍຕ່າງໆ | 10 | 15 | 25 |
| 7 | ກິດຈະການລ້ຽງສັດນ້ຳ | 10 | 20 | 30 |

*ແຫຼ່ງຂໍ້ມູນ: ສຳນັກງານນາຍົກລັດຖະມົນຕີ, 2008.*

ຈາກຕາຕະລາງ 1 ແລະ 2 ເຫັນວ່າອັດຕາຄ່າທຳນຽມການທັນປ່ຽນທີ່ດິນ ແມ່ນມີຄວາມແຕກຕ່າງກັນ ໂດຍອີງໃສ່ແຕ່ລະສະພາບພື້ນທີ່ ແລະ ແຕ່ລະເຂດຄື: ເຫັນວ່າເຂດຕົວເມືອງຈະໄດ້ຄ່າທຳນຽມສູງກ່ວາເຂດຊານເມືອງ ແລະ ເຂດຊົນນະບົດ.

### 2.9.2 ການທົດແທນຄ່າເສຍຫາຍທີ່ດິນທີ່ໃຫ້ເຊົ່າ ແລະ ໃຫ້ສຳປະທານ

ໃນກໍລະນີເຂດເຊົ່າ ແລະ ສຳປະທານທີ່ດິນຂອງລັດ ຫາກໄປກວມເອົາເນື້ອທີ່ຂອງປະຊາຊົນທີ່ໄດ້ຮັບສິດນຳໃຊ້ດິນຖືກຕ້ອງຕາມກົດໝາຍ ແລະ ຕາມດຳລັດສະບັບເລກທີ 19/ນຍ, ລົງວັນທີ 07 ກໍລະກົດ 2005. ການຄິດໄລ່ການທົດແທນໃຫ້ປະຕິບັດດັ່ງນີ້:

- ທີ່ດິນກະສິກຳສຳລັບປູກເຂົ້າ ຫຼື ພືດລົ້ມລຸກໃນດ້ານຫຼັກການ ແມ່ນຕ້ອງຮັກສາໄວ້ໃຫ້ຊາວກະສິກອນເປັນຜູ້ນຳໃຊ້ ເວັ້ນເສຍແຕ່ໃນກໍລະນີຈຳເປັນ ແມ່ນຕ້ອງໄດ້ທົດແທນໃຫ້ເຂົາເຈົ້າ ໂດຍເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າປະເມີນຂອງຜົນລະປູກໃນປີ (ປີກກະຕິຄູນສິບ).

- ທີ່ດິນກະສິກຳສຳລັບປູກຕົ້ນໄມ້ໃຫ້ໝາກ ແມ່ນໃຫ້ເອົາມູນຄ່າປະເມີນທີ່ດິນບວກກັບມູນຄ່າປະເມີນຂອງຜົນລະປູກໃນປີນັ້ນ (ປີກກະຕິຄູນສິບ).

- ທີ່ດິນສຳລັບປູກໄມ້ອຸດສາຫະກຳ ແລະ ພືດເປັນຢາແມ່ນໃຫ້ເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າປະເມີນຂອງຕົ້ນໄມ້ທີ່ປູກໄວ້ໃນທີ່ດິນຕອນນັ້ນ.

- ທີ່ດິນກະສິກຳສຳລັບລ້ຽງສັດ ແມ່ນໃຫ້ເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າປະເມີນຂອງຜົນໄດ້ຮັບຈາກການລ້ຽງສັດໃນປີນັ້ນ (ປີກກະຕິຄູນສາມ).

- ສຳລັບເນື້ອທີ່ດິນນາ ແມ່ນຫ້າມບໍ່ໃຫ້ໃຊ້ເຂົ້າໃນເປົ້າໝາຍອື່ນໆ. ໃນກໍລະນີທີ່ມີຄວາມຈຳເປັນຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງທີ່ດິນ ແລະ ຂະແໜງກະສິກຳ ແລະ ປ່າໄມ້.

- ສຳລັບດິນປຸກສ້າງ ແມ່ນໃຫ້ເອົາມູນຄ່າປະເມີນຂອງທີ່ດິນບວກກັບມູນຄ່າສິ່ງປຸກສ້າງ ແລະ ຜົນລະປູກທີ່ໄດ້ປູກໄວ້ໃນດິນຕອນນັ້ນ.

ໃນກໍລະນີທີ່ມີຄວາມຈຳເປັນຕ້ອງໄດ້ນຳໃຊ້ເນື້ອທີ່ດິນ ໃນເຂດທີ່ໄດ້ອະນຸມັດໃຫ້ເຊົ່າ ແລະ ສຳປະທານໄປແລ້ວນັ້ນ ເພື່ອນຳໃຊ້ເຂົ້າໃນສາທາລະນະປະໂຫຍດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ລັດຈະທົດແທນຄ່າເສຍຫາຍຄືນຕໍ່ຊັບສິນທີ່ຕິດພັນກັບທີ່ດິນທີ່ໃຫ້ເຊົ່າ ຫຼື ສຳປະທານນັ້ນໃຫ້ແກ່ຜູ້ລົງທຶນຕາມຄວາມເໝາະສົມ ໃນການປະເມີນມູນຄ່າທົດແທນ ຕ້ອງມີການເຂົ້າຮ່ວມຂອງຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ນາຍບ້ານ ແລະ ປະຊາຊົນທີ່ກ່ຽວຂ້ອງທຸກຄັ້ງ ໂດຍເຮັດບົດບັນທຶກການປະເມີນເປັນລາຍລັກອັກສອນ ແລ້ວໃຫ້ຜູ້ເຂົ້າຮ່ວມເຊັນທຸກຄັ້ງ (ສຳນັກງານນາຍົກລັດຖະມົນຕີ, 2009).

### 2.9.3 ຂັ້ນຕອນການເຊົ່າ ແລະ ສຳປະທານທີ່ດິນຢູ່ແຂວງສາລະວັນ

ໃນໄລຍະຜ່ານມາການຄົ້ນຄວ້າການອະນຸຍາດການລົງທຶນເຊົ່າ ແລະ ສຳປະທານທີ່ດິນໃນແຂວງສາລະວັນ ໄດ້ປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໂດຍໄດ້ມີການຈັດຕັ້ງຄະນະກຳມະການຂັ້ນແຂວງເຊິ່ງມີພະແນກການຕ່າງໆທີ່ກ່ຽວຂ້ອງເປັນໃຈກາງ ແລະ ທ່ານເຈົ້າແຂວງໆສາລະວັນ ເປັນປະທານຄະນະກຳມະການ, ຖືເອົາພະແນກແຜນການ ແລະ ການລົງທຶນ ເປັນຫ້ອງການປະຈຳຂອງຄະ

ນະກຳມະການດັ່ງກ່າວ, ທຸກໆການລົງທຶນທີ່ພົວພັນກັບການເຊົ່າ ແລະ ສຳປະທານທີ່ດິນທັງໝົດໄດ້ຜ່ານການນຳເຂົ້າຄົ້ນຄວ້າດ້ວຍຄວາມເປັນເອກະພາບຈາກທຸກພາກສ່ວນທີ່ກ່ຽວຂ້ອງ.

ສຳລັບການສຳປະທານທີ່ດິນໄດ້ມີຂັ້ນຕອນ ໃນການຈັດຕັ້ງປະຕິບັດທີ່ລະອຽດພໍສົມຄວນ ໂດຍເລີ່ມຈາກການຄົ້ນຄ້ວາຕາມຈຸດປະສົງຂອງບໍລິສັດ ເຫັນວ່າເປົ້າໝາຍຂອງການນຳສະເໜີນັ້ນສອດຄ່ອງກັບແນວທາງຂອງພັກ ແລະ ແຜນພັດທະນາເສດຖະກິດສັງຄົມ. ຄົ້ນຄວ້ານະໂຍບາຍຂອງບໍລິສັດ ຕ້ອງມີນະໂຍບາຍເປັນທີ່ຍອມຮັບ ແລະ ເບິ່ງຕາມຄວາມເໝາະສົມ, ຄວາມເປັນໄປໄດ້ໃນການນຳສະເໜີຂໍສຳປະທານ ຈາກນັ້ນຈຶ່ງທຳການສຳຫຼວດເນື້ອທີ່ປຶກສາຫາລືກັບອຳນາດການປົກຄອງ ແລະ ປະຊາຊົນ ທີ່ນອນໃນບໍລິເວນເປົ້າໝາຍຂອງໂຄງການ ເພື່ອຮ່ວມກັນສຳຫຼວດເນື້ອທີ່, ຝຶກອົບຮົມເຜີຍແຜ່ໃຫ້ປະຊາເຂົ້າໃຈຕໍ່ການດຳເນີນໂຄງການ ຫຼັງຈາກນັ້ນຈຶ່ງນຳສະເໜີຂັ້ນເທິງອະນຸມັດຕາມລຳດັບຂັ້ນ (ຂັ້ນແຂວງອະນຸມັດ 100 ເຮັກຕາລົງມາ, ເກີນ 100 ເຮັກຕາແມ່ນຂັ້ນສູນກາງເປັນຜູ້ອະນຸມັດ). ພາຍຫຼັງໄດ້ຮັບການອະນຸມັດເປັນທາງການ ແລ້ວບໍລິສັດຕ້ອງໄດ້ກຳນົດບົດວິພາກ ເສດຖະກິດເຕັກນິກໄວ້. ສຳລັບເຂດສຳປະທານທີ່ແຕະຕ້ອງເຖິງສິດນຳໃຊ້ທີ່ດິນຂອງປະຊາຊົນໄດ້ມີການປຶກສາຫາລື ແລະ ຊົດເຊີຍຕາມຄວາມເໝາະສົມ (ອົງການຄຸ້ມຄອງທີ່ດິນແຂວງສາລະວັນ, 2009).

## 3. ວິທີການສຶກສາ ແລະ ການວິເຄາະຂໍ້ມູນ

### 3.1 ວິທີການສຶກສາ

ເພື່ອໃຫ້ຂໍ້ມູນຕອບສະໜອງຕາມຈຸດປະສົງທີ່ວາງໄວ້ ໃນການສຶກສາຄັ້ງນີ້ໄດ້ແບ່ງວິທີການສຶກສາອອກເປັນຂັ້ນຕອນດັ່ງນີ້:

#### 3.1.1 ພາກຫ້ອງການ

ເພື່ດເຮັດໃຫ້ການເກັບກຳຂໍ້ມູນລະອຽດ ແລະ ມີຄວາມຊັດເຈນໄດ້ມີການກະກຽມຢ່າງລະອຽດເຊັ່ນ: ໄດ້ລວບລວມ ແລະ ທົບທວນບັນດາເອກະສານຕ່າງໆ ທີ່ກ່ຽວຂ້ອງກັບນະໂຍບາຍຂອງລັດຖະບານ, ເອກະສານ, ບົດລາຍງານການສຶກສາຕ່າງໆ ທີ່ພົວພັນກັບການສຳປະທານທີ່ດິນ, ຜົນກະທົບຂອງການສຳປະທານທີ່ດິນຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນ, ການຖືຄອງທີ່ດິນ ແລະ ການນຳໃຊ້ທີ່ດິນຂອງປະຊາຊົນ ຈາກຫ້ອງສະໝຸດຂອງຄະນະປ່າໄມ້, ຫ້ອງສະໝຸດຂອງສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ ແລະ ຫ້ອງສະໝຸດຂອງໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ (Rights - Link, Information Network and Knowledge). ແລ້ວສັງລວມເອົາຂໍ້ມູນນຳເອກະສານດັ່ງກ່າວມາກະກຽມເປັນແບບຟອມສຳພາດ.

### 3.1.2 ພາກສະໜາມ

ແມ່ນການລົງເກັບກຳຂໍ້ມູນຕົວຈິງ (ການເກັບກຳຂໍ້ມູນມືໜຶ່ງ) ໄດ້ມີການປຶກສາຫາລືກັບອຳນາດການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ. ໂດຍສະເພາະແມ່ນອົງການຄຸ້ມຄອງທີ່ດິນປະຈຳແຂວງສາລະວັນ, ພະແນກແຜນການ ແລະ ການລົງທຶນແຂວງສາລະວັນ.

ຫຼັງຈາກນັ້ນໄດ້ລົງເກັບກຳຂໍ້ມູນຂັ້ນບ້ານ ໂດຍໄດ້ແຈ້ງຈຸດປະສົງໃນການລົງເກັບກຳຂໍ້ມູນ ໃຫ້ອຳນາດການປົກຄອງບ້ານຊາບ. ໃນການສຳພາດອຳນາດການປົກຄອງບ້ານ ແມ່ນໄດ້ສອບຖາມກ່ຽວກັບສະພາບລວມຂອງບ້ານເຊັ່ນ: ປະຫວັດຄວາມເປັນມາຂອງບ້ານ, ທີ່ຕັ້ງຂອບເຂດຊາຍແດນ ແລະ ເນື້ອທີ່ຂອງບ້ານ, ຈຳນວນປະຊາກອນ, ຊົນເຜົ່າ, ການສຶກສາ, ເສດຖະກິດ, ພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກຕ່າງໆທີ່ມີພາຍໃນບ້ານ. ນອກນັ້ນຍັງໄດ້ສອບຖາມກ່ຽວກັບສະພາບການນຳໃຊ້ທີ່ດິນ, ປະເພດການນຳໃຊ້ທີ່ດິນຂອງປະຊາຊົນກ່ອນ ແລະ ຫຼັງການສຳປະທານທີ່ດິນ.

ພາຍຫຼັງທີ່ໄດ້ເກັບກຳຂໍ້ມູນຂັ້ນບ້ານແລ້ວ ໄດ້ລົງສຳພາດຂັ້ນຄອບຄົວ ໂດຍການໃຊ້ຟອມສຳພາດໃນການສຳພາດແມ່ນໄດ້ສຳພາດເອົາ 30 ເປີເຊັນ ຂອງຈຳນວນຄອບຄົວທີ່ມີທັງໝົດພາຍໃນບ້ານເປົ້າໝາຍເຊັ່ນ: ບ້ານຕຸ້ມລີທົ່ງໄດ້ສຳພາດເອົາ 27 ຄອບຄົວ ຈາກ 90 ຄອບຄົວທັງໝົດບ້ານ ແລະ ບ້ານຕຸ້ມລີຂາວໄດ້ສຳພາດເອົາ 24 ຄອບຄົວ ຈາກ 81 ຄອບຄົວທັງໝົດບ້ານ ແມ່ນໄດ້ສອບຖາມກ່ຽວກັບ ການຖືຄອງທີ່ດິນ, ການນຳໃຊ້ທີ່ດິນ ແລະ ທັດສະນະຂອງປະຊາຊົນທີ່ມີພາຍຫຼັງທີ່ມີການສຳປະທານທີ່ດິນ.

## 3.2 ການວິເຄາະຂໍ້ມູນ

ພາຍຫຼັງທີ່ໄດ້ຂໍ້ມູນຈາກການສຶກສາພາກຫ້ອງການ ແລະ ພາກສະໜາມແລ້ວກໍ່ນຳເອົາຂໍ້ມູນດັ່ງກ່າວມາລວບລວມ, ຈັດລຽງ, ວິເຄາະ. ໃນການວິເຄາະແມ່ນໄດ້ໃຊ້ໂປແກມທາງສະຖິຕິເຂົ້າຊ່ວຍໃນການຊອກຫາຄ່າສະເລ່ຍ, ປະລິມານ, ຄ່າຄວາມແຕກຕ່າງ, ເປີເຊັນຕ່າງໆ ແລະ ອື່ນໆ.

# 4. ສະຖານທີ່ການສຶກສາ

## 4.1 ສະພາບທົ່ວໄປຂອງເມືອງຕະໂອ້ຍ

ເມືອງຕະໂອ້ຍເປັນເມືອງໜຶ່ງທີ່ຈັດຢູ່ໃນ 47 ເມືອງທຸກຍາກໃນທົ່ວປະເທດ ເປັນເມືອງເຂດພູດອຍ ຕັ້ງຢູ່ທິດຕາເວັນອອກສ່ຽງເໜືອຂອງແຂວງສາລະວັນ, ທິດເໜືອຕິດກັບເມືອງນອງ ແຂວງສະຫວັນນະເຂດ; ທິດໃຕ້ຕິດກັບເມືອງກະລຶມ ແຂວງເຊກອງ ແລະ ເມືອງສາລະວັນ; ທິດຕາເວັນອອກຕິດກັບເມືອງສະໝ້ວຍ; ທິດຕາເວັນຕົກຕິດກັບເມືອງຕຸ່ມລານ. ມີລະດັບພື້ນທີ່ສູງຈາກໜ້ານ້ຳທະເລ

ຕ່ຳສຸດສະເລ່ຍ 250 ແມັດ, ສູງສຸດ 2051 ແມັດ, ມີເນື້ອທີ່ທັງໝົດແມ່ນ 208.607,09 ເຮັກຕາ, ມີ 56 ບ້ານ ແບ່ງເປັນ 5 ກຸ່ມບ້ານ. ປະຊາກອນລວມມີ 25.299 ຄົນ, 3.318 ຫຼັງຄາເຮືອນ, 4.420 ຄອບຄົວ (ສຳຫຼວດເດືອນ2-ເດືອນ5 ປີ 2010) ອັດຕາປະຊາກອນສະເລ່ຍ 1 ຄົນ/8.28 ເຮັກຕາ ລວມມີ 4 ຊົນເຜົ່າຄື: ຊົນເຜົ່າກະຕາງ, ຊົນເຜົ່າຕະໂອ້ຍ, ຊົນເຜົ່າປີໂກະ ແລະ ຊົນເຜົ່າລາວລຸ່ມ. ອາຊີບຫຼັກຂອງປະຊາຊົນໃນເມືອງດັ່ງກ່າວ ແມ່ນເຮັດໄຮ່ ແລະ ລ່າເນື້ອ.

ການສຶກສາໃນຄັ້ງນີ້ແມ່ນໄດ້ລົງເກັບກຳຂໍ້ມູນກ່ຽວກັບ ການຖືຄອງທີ່ດິນ ແລະ ການນຳໃຊ້ທີ່ດິນໃນເຂດສຳປະທານທີ່ດິນ ຂອງບ້ານຕຸ້ມລີທົ່ງ ແລະ ບ້ານຕຸ້ມລີຂາວ, ເມືອງຕະໂອ້ຍ, ແຂວງສາລະວັນ. ເຊິ່ງບ້ານ ຕຸ້ມລີທົ່ງ ແລະ ບ້ານ ຕຸ້ມລີຂາວ ແມ່ນຕັ້ງຢູ່ທິດເໜືອຂອງເມືອງຕະໂອ້ຍ ເຊິ່ງຫ່າງຈາກເທດສະບານເມືອງມີໄລຍະທາງປະມານ 22-25 ກິໂລແມັດ.




ຮູບທີ 1: ແຜນທີ່ສະແດງຈຸດສະຖານທີ່ການສຶກສາ.

## 4.2 ສະພາບການລົງທຶນພາຍໃນເມືອງຕະໂອ້ຍ ປີ 2010

## 4.2.1 ການຈັດຕັ້ງປະຕິບັດການລົງທຶນພາຍໃນເມືອງຕະໂອ້ຍ

ລວມຍອດການລົງທຶນທັງໝົດ 25 ໂຄງການ, ມູນຄ່າ 15.271 ຕື້ກີບ, ກວມເອົາ 15.60% ຂອງ GDP ທຽບໃສ່ແຜນ 5 ປີ ປະຕິບັດໄດ້ລື່ນ 4.65% ຖ້າທຽບໃສ່ 5 ປີກ່ອນເພີ່ມຂຶ້ນ 19.80% ເຊິ່ງປະກອບມີແຫຼ່ງທຶນດັ່ງນີ້:

### ❖ ການລົງທຶນຂອງລັດຢູ່ເມືອງຕະໂອ້ຍ

ໃນ 5 ປີລວມຍອດການລົງທຶນຂອງລັດມີ 5.3 ຕື້ກີບ ທຽບໃສ່ແຜນການ 5 ປີລື່ນ 5.95% ທຽບໃສ່ 5 ປີກ່ອນເພີ່ມຂຶ້ນ 12.23% ເຊິ່ງແຫຼ່ງທຶນດັ່ງກ່າວສຸມໃສ່ພັດທະນາພື້ນຖານໂຄງລ່າງເປັນຕົ້ນເສັ້ນທາງບ້ານຕໍ່ບ້ານ, ສ້ອມແປງລະບົບຊົນລະປະທານ, ໂຮງງານ,ໂຮງໝໍ, ສຸກສາລາ, ຈັດຫານໍ້າສະອາດ, ສະຖານທີ່ເຮັດວຽກຂອງພະນັກງານ, ຈຳນວນໜຶ່ງກໍ່ບຸກເບີກເນື້ອທີ່ທຳການຜະລິດໃຫ້ປະຊາຊົນ.

### ❖ ການລົງທຶນທຸລະກິດທັງພາຍໃນ ແລະ ຕ່າງປະເທດຢູ່ເມືອງຕະໂອ້ຍ

ໃນ 5 ປີ ຜ່ານມາການລົງທຶນຂອງທຸລະກິດເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ທ່ວງທ່າຂະຫຍາຍຕົວດີຂຶ້ນ ແຫຼ່ງທຶນດັ່ງກ່າວກວມອັດຕາສ່ວນສູງພໍສົມຄວນ, ລວມຍອດການລົງທຶນທັງໝົດ 8.6 ຕື້ກີບ ທຽບໃສ່ແຜນ 5 ປີ ປະຕິບັດໄດ້ 85.61% ແຫຼ່ງທຶນດັ່ງກ່າວ ສຸມໃສ່ການຊຸກຍູ້ການຜະລິດເປັນສິນຄ້າເປັນຕົ້ນປູກໝາກເຍົາ, ປູກມັນ, ປູກໄມ້ອຸດສາຫະກຳຕ່າງໆ ນອກຈາກນັ້ນສຸມໃສ່ການກໍ່ຕັ້ງໂຮງງານຂະໜາດນ້ອຍຈຳນວນໜຶ່ງ.

### ❖ ວຽກງານທະນາຄານນະໂຍບາຍຂອງເມືອງຕະໂອ້ຍ

ໄດ້ປ່ອຍທຶນສິນເຊື່ອໃຫ້ປະຊາຊົນມີ 5 ໂຄງການຈຳນວນ 32 ບ້ານ 90 ກຸ່ມ 1,004 ຄອບຄົວ ໃນວົງເງິນ 22,716,684,000 ກີບ.

### ❖ ການລົງທຶນຂອງປະຊາຊົນພາຍໃນເມືອງຕະໂອ້ຍ

ແຫຼ່ງທຶນດັ່ງກ່າວແມ່ນສຸມໃສ່ການສ້າງບ້ານເຮືອນທີ່ຢູ່ອາໃສ, ສົມທົບທຶນໃສ່ພັດທະນາໂຄງລ່າງເປັນຕົ້ນເສັ້ນທາງບ້ານຕໍ່ບ້ານ, ສົບທົບທຶນສ້ອມແປງໂຮງຮຽນ, ການບໍລິການຄ້າຂາຍ, ບໍລິການບ້ານພັກການຜະລິດຂອງຄອບຄົວໃນ 5 ປີ ລວມຍອດການລົງທຶນທັງໝົດມີ 1.1 ຕື້ກີບ ທຽບໃສ່ແຜນ 5 ປີ ປະຕິບັດໄດ້ 98.33% ຖ້າທຽບໃສ່ 5 ປີກ່ອນເພີ່ມຂຶ້ນ 30%.

## 4.3 ປະຫວັດຄວາມເປັນມາຂອງບ້ານຕຸ້ມລີທົ່ງ ແລະ ຕຸ້ມລີຂາວ

### 4.3.1 ປະຫວັດຄວາມເປັນມາຂອງບ້ານຕຸ້ມລີທົ່ງ

ບ້ານຕຸ້ມລີທົ່ງໃນສະໄໝກ່ອນ ແມ່ນຕັ້ງຢູ່ເມືອງພິນ, ແຂວງສະຫັວນນະເຂດກ່ອນຈະມາຕັ້ງຢູ່ເຂດນີ້. ໃນເມື່ອກ່ອນແມ່ນຊື່ບ້ານຕຸ້ມລີນາເທີນາມບາງປະເອັມ ຫຼັງຈາກນັ້ນໄດ້ທຳມາຫາກິນຢູ່ເຂດນີ້ເພາະເຂດນີ້ມີຄວາມອຸດົມສົມບູນເໝາະແກ່ການດຳລົງຊີວິດ ແລະ ມີເຄື່ອງປ່າຂອງດົງຫຼາຍຈຶ່ງພາກັນຕັດສິນໃຈມາດຳລົງຊີວິດ. ໂດຍແມ່ນສອງອ້າຍນ້ອງເປັນຜູ້ມາຕັ້ງບ້ານຢູ່ເຂດນີ້ ແມ່ນໄດ້ມາຕັ້ງບ້ານຢູ່ບ້ານຕຸ້ມລີເກົ່າ ແລ້ວເກີດມີເຜົ່າກະຕູເຂົ້າມາຕີແຕກອອກເປັນ 5 ບ້ານຄື: ບ້ານຕຸ້ມລີເກົ່າ, ຕຸ້ມລີທົ່ງ, ຕຸ້ມລີໄຮ່, ຕຸ້ມລີຂາວ ແລະ ຕຸ້ມລີຣະກາ.

- ຈາກຕຸ້ມລີເກົ່າມາຢູ່ຕຸ້ມລີທົ່ງ ແມ່ນຈອຍເຍີເປັນຜູ້ນຳພາ ໂດຍມີ 4 ຄອບຄົວມີສັດລ້ຽງເຊັ່ນ: ຄວາຍ, ງົວ. ອາຊີບຫຼັກແມ່ນເຮັດໄຮ່ ແລະ ຫາເຄື່ອງປ່າຂອງດົງ, ລ່າສັດ...
- ກ່ອນຈະຕັ້ງບ້ານຕຸ້ມລີທົ່ງ ກໍ່ຍ້ອນວ່າບ້ານຕັ້ງຢູ່ບ້ານຍອດຫ້ວຍ, ແມ່ນ້ຳລຳເຊ (ໃນພາສາເພິ່ນວ່າແຄມຫ້ວຍແຄມທົ່ງຈຶ່ງເອີ້ນວ່າ: ຕາໍລີເຕີ້ຍ).
- ປີ 1893 ຝຣັ່ງໄດ້ເຂົ້າມາປົກຄອງບ້ານຕຸ້ມລີຂາວ ໄດ້ເຂົ້າມາເກນເອົາຜູ້ຊາຍໄປເຮັດທາງ ແລະ ໄປເປັນກູລີ ແລະ ແຕ່ງຕັ້ງຕາແສງຂຶ້ນ ໂດຍແມ່ນບ້ານຕຸ້ມລີນີ້ຂຶ້ນກັບຕາແສງທຸມ ຝຣັ່ງເຂົ້າມາປົກຄອງໂດຍທຸບຕີທໍລະມານ ແລ້ວເກັບພາສີບ້ານໃນເວລານັ້ນຜູ້ທີ່ເປັນຫົວໜ້າຕາແສງແມ່ນ ອາກະໂດກ ເຊິ່ງແມ່ນພວກຝຣັ່ງເປັນຜູ້ແຕ່ງຕັ້ງ ຮີດຄອງປະເພນີໃນຕອນນັ້ນແມ່ນເຄັ່ງຄັດຜູ້ຊາຍຮອດອາຍຸ 15 ປີແມ່ນຕັດແຂ້ວ, ຈິ່ງຜົມຍາວ, ສັກຫຼາວ, ບ່ອງຫູ ແລະ ຜູ້ຍິງກໍ່ຄືກັນ.
- ຮີດຄອງປະເພນີໃນເມື່ອກ່ອນນັ້ນຕີກອງ, ຕີບມື, ຕັດຜົມບໍ່ໄດ້ ຖ້າຕັດກໍ່ຈະເປັນໄຂ້ຢູ່ຕາມບ້ານຕ້ອງໄດ້ເຮັດຮົ້ວໄມ້ແຫຼມ ເພື່ອບໍ່ໃຫ້ສັດຮ້າຍເຂົ້າມາໃນບ້ານ.
- ຫຼັງຈາກນັ້ນຍີ່ປຸ່ນກໍ່ໄດ້ເຂົ້າມາຕີຝຣັ່ງໃນປີ 1945 ພວກຝຣັ່ງໄດ້ຫຼົບໜີໄປ, ຍີ່ປຸ່ນອອກໄປແລ້ວຫວຽດນາມກໍ່ມາຊ່ວຍເຫຼືອຢູ່ບ້ານເຮົາ ເພື່ອບໍ່ໃຫ້ຝຣັ່ງເຂົ້າມາປົກຄອງໄດ້ຖືຄອງການດຳລົງຊີວິດໃນເມື່ອກ່ອນ ແມ່ນໄດ້ດຳລົງຊີວິດແບບເກົ່າ ໂດຍແມ່ນທະຫານຫວຽດນາມເປັນຜູ້ນຳພາ.

- ປີ 1964 ພວກອາເມລິກາໄດ້ເຂົ້າມາຮຸກຮານລາວ ແລະ ຖິ້ມລະເບີດຮອດປີ 1966-67 ອາເມລິກາໄດ້ເຂົ້າມາຮຸກຮານຢູ່ບ້ານເຮົາ ເຮັດໃຫ້ປະຊາຊົນຍົກຍ້າຍໄປຢູ່ເຂດພູ, ຢູ່ຖ້ຳ ໂດຍແມ່ນຈວຍໜຶກ, ຈວຍລຸກ ເປັນຜູ້ນຳພາໄປ ເພາະພວກອາເມລິກາໄດ້ຈູດບ້ານເຮືອນຂອງປະຊາຊົນ.

- ຈົນຮອດປີ 1973 ເລີ່ມມີການຢຸດຍິງ ປະຊາຊົນ ແລະ ທະຫານລາວ-ຫວຽດນາມ ໄດ້ຍ້າຍລົງມາຢູ່ບ້ານຄືເກົ່າ.

- ປີ 1975 ປະເທດລາວໄດ້ຮັບການປົດປ່ອຍ ບ້ານເລີ່ມມີການຈັດຕັ້ງຕ່າງໆ ໂດຍບ້ານເຮົາຂຶ້ນຢູ່ກັບຕາແສງຫູນ ແລະ ມີການສ້າງໂຮງຮຽນເຊິ່ງມີຄູຢູ່ 3 ຄົນຄື: ຄູບຸນເຮືອງ, ຄູຄຳໄພ ແລະ ຄູມະໂນລາ ການທຳມາຫາກິນແມ່ນຍັງເປັນແບບເກົ່າ.

- ປີ 1960 ແມ່ນຂຶ້ນກັບແຂວງສະຫວັນນະເຂດ.

- ປີ 1977 ແມ່ນໄດ້ມອບຄືນໃຫ້ແຂວງສາລະວັນ.

- 1981-82 ໄດ້ເກີດພະຍາດຖອກທ້ອງ ແລະ ຕາຍປະມານ 30 ຄົນ.

- ປີ 1984 ເລີ່ມມີການເຮັດນາ, ເຮັດໄຮ່ຄົງທີ່ ຜູ້ນຳພາແມ່ນລຸງລີ ຫຼັງຈາກນັ້ນການເຮັດນາໃນບ້ານນີ້ໄດ້ລຸດລົງ ເພາະເຮັດບໍ່ໄດ້ນ້ຳບໍ່ມີ. ໃນເວລານັ້ນແມ່ນຈວຍລຸກເປັນນາຍບ້ານ ໄດ້ມີສັດນ້ອຍ-ໃຫ່ຍ ມີງົວຄວາຍ 30 ໂຕ ການດຳລົງຊີວິດແມ່ນແບບເກົ່າ.

- ຮອດປີ 2000 ເລີ່ມມີການເຮັດເສັ້ນທາງເຂົ້າມາຮອດບ້ານ ໂດຍແມ່ນການຊ່ວຍເຫຼືອຂອງ Oxfam , ທະນາຄານເຂົ້າ ແລະ ຊົນລະປະທານ.

- ປີ 2009 ບໍລິສັດບົວລະພາໄດ້ເຂົ້າມາປູກໄມ້ວິກ, ບໍລິສັດເພັດດາລາໄດ້ເຂົ້າມາປູກມັນຕົ້ນຢູ່ພາຍໃນບ້ານ.

- ໃນປະຈຸບັນໄດ້ມີການນັບຖືຮີດຄອງປະເພນີແມ່ນຖືຜີ ຂຶ້ນກັບກຸ່ມຕາຫຼຸງ ນາຍບ້ານແມ່ນອຳຕະລານ, ມີ 3 ຄຸ້ມ, ມີ 79 ຫຼັງຄາເຮືອນ, ມີ 90 ຄອບຄົວ, ມີພົນລະເມືອງ 580 ຄົນ, ຍິງມີ 311 ຄົນ.

### 4.3.2 ປະຫວັດຄວາມເປັນມາຂອງບ້ານຕຸ້ມລີຂາວ

1920 ບ້ານຕຸ້ມລີຂາວ ຊື່ເກົ່າແມ່ນຢູ່ບ້ານວິລະດາ ເປັນຊົນເຜົ່າກະຕາງ, ນັບຖືຮີດຄອງປະເພນີ ຜີພໍ່ ຜີແມ່, ຂະນົບທຳນຽມ ການນຸ່ງຖືແມ່ນຜ້າກະຕຽວ ທີ່ສານເອງໂດຍ ເຮັດຈາກໝາກຝ້າຍ ແລະ ນອກນັ້ນກໍ່ຍັງນັບຖືກາບໄຫວ້ກ້ອນຫີນອີກ ເພາະເຂົາເຊື່ອວ່າຢູ່ກ້ອນຫີນມີຜີສິງຢູ່. ສຳລັບຜູ້ຊາຍແມ່ນຈິ່ງຜົມຍາວ , ສັກລາຍທົ່ວໂຕ, ຕັດແຂ້ວບ່ອງຫູ, ຜູ້ຍິງກໍ່ເຊັ່ນກັນຕັດແຂ້ວ, ບ່ອງຫູໃຫຍ່. ຜູ້ຊາຍກັບຜູ້ຍິງ ແມ່ນບໍ່ມີສິດເທົ່າທຽມກັນ ຜູ້ຊາຍເອົາເມຍຫຼາຍເທົ່າໃດກໍ່ໄດ້ ຖ້າມີຄະດີຫຍັງເກີດຂຶ້ນແມ່ນຜູ້ຍິງບໍ່ມີສິດອອກສຽງຄຳຄິດເຫັນໃດທັງນັ້ນ. ຫ້າມຄົນໃນອອກຄົນນອກເຂົ້າມາ ຖ້າບໍ່ໄດ້ຮັບອະນຸຍາດ ຫຼື ເອົາໃບຕອງຂຶ້ນເຮືອນ ຖ້າບໍ່ໄດ້ເຮັດບຸນກິນແງະເສຍກ່ອນ. ອາຊີບຕົ້ນຕໍແມ່ນເຮັດໄຮ່, ຫາເຜືອກ, ມັນ, ກອຍມາກິນ, ທົວໜ້າເຜົ່າຊື່ ທ່ານຈວຍ ຕະກູ ເປັນຜູ້ນຳພາມາຕັ້ງຖິ່ນຖານ ເລື່ອງຄະດີຕ່າງໆແມ່ນ ຈວຍ ຕະກູ ເປັນຜູ້ຕັດສິນຢ່າງດຽວ ໄລຍະນັ້ນມີພົນລະເມືອງ 150 ຄົນ. 10 ຫຼັງຄາເຮືອນ ການດຳລົງຊີວິດ ດຳເນີນໄດ້ປະມານ 80 – 90 ປີ ຈິ່ງຍົກຍ້າຍໄປ ຢູ່ເຂດທີ່ອຸດົມສົມບູນ.

1948 ທິວໜ້າເຜົ່າ ຊື່ ຈອຍ ປຣະເປຍ ເປັນຜູ້ນຳພາຕັ້ງບ້ານ ຕຸ້ມລີຂາວ ສາເຫດທີ່ເອີ້ນຕຸ້ມລີ້ຂາວ ກໍ່ຍ້ອນວ່າ ຢູ່ແຫ່ງນັ້ນມີປາຫຼາຍ ຊາວບ້ານພາກັນເຮັດຕຸ້ງ ເຮັດສີ ເພື່ອເອົາປາ ແລະຢູ່ທີ່ແຫ່ງນັ້ນ ກໍ່ມີຖ້ຳ, ພະລານຫີນ ທີ່ເປັນສີຂາວ ໝົດພື້ນທີ່ເລີຍ ຈຶ່ງໃສ່ຊື່ວ່າ ບ້ານຕຸ້ມ ລີຂາວ ມີພົນລະເມືອງທັງໝົດ 270 ຄົນ, ມີ 12 ຫຼັງຄາເຮືອນ ການຢຶດຖືອາຊີບ ແມ່ນເຮັດໄຮ່ ເປັນຕົ້ນຕໍ ຊີວິດຂອງຊາວບ້ານ ແມ່ນຍັງດຳລົງຊີວິດ ທີ່ຕິດພັນກັບທຳມະຊາດຫຼາຍ. ຈຶ່ງເຮັດໃຫ້ມີການຕິດພະຍາດລົ້ມຕາຍຮ່າ ເພາະຂາດການຮັກສາອະນາໄມ.

1964 ຈອຍເອີງ, ຈອຍຈອງ ເປັນນາຍບ້ານ ເກີດສົງຄາມອາເມລິກາເຂົ້າຮຸກຮານ ປະເທດລາວຈຶ່ງເຮັດໃຫ້ປະຊາຊົນພາຍໃນບ້ານແຕກໜີກະແຈກກະຈາຍໄປຢູ່ຕາມຮ່ອມພູຜາ, ປ່າດົງ ແລະຖ້ຳຕ່າງໆ ເພື່ອເອົາຊີວິດລອດເຊິ່ງການໜີນັ້ນໄດ້ແບ່ງອອກເປັນຫຼາຍໆກຸ່ມ ເປັນບ່ອນລະກຸ່ມ 2 ກຸ່ມຊີວິດການເປັນຢູ່ແມ່ນຫຍຸ້ງຍາກຂັດສົນຫຼາຍ ປະຊາຊົນບໍ່ໄດ້ທຳການຜະລິດຫຍັງໝົດ.

1973 ມີການນຳພາເຕົ້າໂຮມຂອງພັກລັດ.ຈຶ່ງເຮັດໃຫ້ປະຊາຊົນອອກມາຈາກປ່າກັບຄືນມາຢູ່ບ້ານຕຸ້ມລີ້ຂາວ ຈົນຮອດປະຈຸບັນນີ້ ເຊິ່ງແບ່ງອອກເປັນ 3 ຄຸ້ມ ຢູ່ໃນບ້ານດຽວກັນຄື :

- ບ. ຕຸ້ມລີຂາວໃຫຍ່. ເຊິ່ງແມ່ນ ຈອຍຈອງ ແລະ ຈອຍເທລ ເປັນພໍ່ບ້ານມີ 13 ຫຼັງຄາເຮືອນ.
- ບ. ຕຸ້ມລີຂາວນ້ອຍ ຈອມເອີງເປັນພໍ່ບ້ານມີ 8 ຫຼັງຄາເຮືອນ.
- ບ. ເຈີນໆ ແມ່ນພໍ່ກະຕິ ເປັນພໍ່ບ້ານ ມີ 15 ຫຼັງຄາເຮືອນ.

ແຕ່ລະຄຸ້ມແມ່ນຂຶ້ນກັບຕາແສງຫຸນ ມີອຳນາດການປົກຄອງຂອງໃຜລາວ. ການດຳລົງຊີວິດແມ່ນຍັງນັບຖືທຳນົບທຳນຽມຮີດຄອງປະເພນີຄືເກົ່າ ແຕ່ບາງອັນກໍ່ໄດ້ປະຖິ້ມແດ່ແລ້ວ. ອາຊີບຕົ້ນຕໍແມ່ນເຮັດໄຮ່, ລ່າສັດ, ຈັກສານ, ລ້ຽງສັດ, ຫາເຄື່ອງປ່າຂອງດົງ, ສັດປ່າ ກໍ່ຍັງມີຫຼວງຫຼາຍເຊັ່ນ: ກວາງ, ຟານ, ກະທິງ, ເສືອ, ຊ້າງ, ລີງ...

1990 ເລີ່ມມີການຖາງປ່າ, ເຮັດໄຮ່ຫຼາຍ, ສັດປ່າເລີ່ມຫາຍາກພ້ອມມີການບຸກເບີກຕັດໄມ້ໃຫຍ່ໄປຈຳນວນໜຶ່ງອີກ. ເສັ້ນທາງການໄປມາກໍ່ຫຍຸ້ງຍາກໄປບໍ່ໄດ້.

ປີ 2005 ແມ່ນມີທະນາຄານເຂົ້າ ເຊິ່ງແມ່ນໂຄງການເກັບໃຫ້ຄວາມຊ່ວຍເຫຼືອ.

2006 - 2007 ໄດ້ນ້ຳບາດານ 3 ບໍ່ (ກ໋ອກ). ໂຄງການໂລກອາທອນໃຫ້, ໂຄງການອາຫານໂລກຊ່ວຍເຫຼືອເຂົ້າ, ສະບຽງອາຫານຈຳນວນໜຶ່ງ.

2009 - 2010 ແມ່ນທ່ານ ອຳແອວ ເປັນນາຍບ້ານມີພົນລະເມືອງທັງໝົດ 486 ຄົນ, ຍິງ 237 ຄົນ ມີ 53 ຫຼັງຄາ 81 ຄອບຄົວ, ມີໂຄງການເຂົ້າມາຈັດສັນສຳຫຼວດຂໍ້ມູນ ແບ່ງດິນ-ແບ່ງປ່າ ແລະ ມີການເຮັດນາ, ສວນຢາງບົງ, ປູກມັນຕົ້ນສຳຮອງ ສ່ວນການເຮັດໄຮ່ຖາງປ່າແບບຊະຊາຍແມ່ນເປັນອາຊີບຕົ້ນຕໍ ນອກນັ້ນຍັງໄດ້ລ້ຽງງົວອີກ 106 ໂຕ, ຄວາຍ 50 ໂຕ, ແບ້ 44 ໂຕ , ໄກ່ 700 ໂຕ, ເປັດ 40 ໂຕ, ໝູ 50 ໂຕ. ທາງບ້ານຍັງມີວັງສະຫງວນ 1 ວັງ ທີ່ບ້ານສ້າງຂຶ້ນເອງ.

## 4.4 ສະພາບຈຸດທີ່ຕັ້ງຂອງບ້ານຕຸ້ມລີທົ່ງ ແລະ ຕຸ້ມລີຂາວ

### 4.4.1 ສະພາບຈຸດທີ່ຕັ້ງຂອງບ້ານຕຸ້ມລີທົ່ງ

ບ້ານຕຸ້ມລີທົ່ງ ແມ່ນຕັ້ງຢູ່ທາງທິດເໜືອຂອງເມືອງຕະໂອ້ຍ ເຊິ່ງນອນໃນຈຸດພິກັດ E 678369; N 1788416 ຫາ E 672400; N 1788713 ແລະ ຈຸດພິກັດ E 674205; N 1785300 ຫາ E 676899; N 1790432. ມີເນື້ອທີ່ທັງໝົດແມ່ນ 2,606.26 ເຮັກຕາ ພື້ນທີ່ຂອງບ້ານແມ່ນມີລັກສະນະຮາບພຽງ ແລະ ຄ້ອຍງ່ຽງເລັກນ້ອຍມີຂອບເຂດ ຕິດຈອດກັບບ້ານອື່ນໆດັ່ງລຸ່ມນີ້:

- ທິດເໜືອຕິດກັບ ບ້ານ ຕຸ້ມລີເກົ່າ ແລະ ບ້ານຕຸ້ມລີຂາວ.
- ທິດໃຕ້ຕິດກັບ ບ້ານ ປະສິງ.
- ທິດຕາເວັນອອກຕິດກັບ ບ້ານ ພໍ່ຕັງ.
- ທິດຕາເວັນຕົກຕິດກັບ ບ້ານ ຈໍລະວຽງ.

### 4.4.2 ສະພາບຈຸດທີ່ຕັ້ງຂອງບ້ານຕຸ້ມລີຂາວ

ບ້ານຕຸ້ມລີຂາວ ແມ່ນຕັ້ງຢູ່ທາງທິດເໜືອຂອງເມືອງຕະໂອ້ຍ ເຊິ່ງນອນໃນຈຸດພິກັດ E 675884; N 1793594 ຫາ E 680147; N 1790871 ແລະ ຈຸດພິກັດ E 678369; N 1788416 ຫາ E 677498; N 1794394. ມີເນື້ອທີ່ທັງໝົດແມ່ນ 1,945.36 ເຮັກຕາ, ມີຂອບເຂດຕິດຈອດກັບບ້ານອື່ນໆດັ່ງລຸ່ມນີ້:

- ທິດເໜືອຕິດກັບ ບ້ານ ປະງານດາວ.
- ທິດໃຕ້ຕິດກັບ ບ້ານ ຕຸ້ມລີທົ່ງ.
- ທິດຕາເວັນອອກຕິດກັບ ບ້ານ ພໍ່ເຊັນ.
- ທິດຕາເວັນຕົກຕິດກັບ ບ້ານ ຕຸ້ມລີເກົ່າ.

## 4.5 ພົນລະເມືອງ ແລະ ອາຊີບ

### ກ. ພົນລະເມືອງ

ບ້ານຕຸ້ມລີທົ່ງ ປະຈຸບັນມີ 3 ຄຸ້ມ ມີພົນລະເມືອງທັງໝົດແມ່ນ 580 ຄົນ, ຍິງ 311 ຄົນ, ຊາຍ 269 ຄົນ, ມີ 79 ຫຼັງຄາເຮືອນ, ມີ 90 ຄອບຄົວ ແລະ ມີພຽງຊົນເຜົ່າດຽວຄືຊົນເຜົ່າກະຕາງ ການນັບຖືຮີດຄອງປະເພນີ ແມ່ນຖືຜີ, ຂຶ້ນກັບກຸ່ມຕາຫຼຸງ, ນາຍບ້ານແມ່ນ ອຳຕະລານ.

ພາຍໃນບ້ານຕຸ້ມລີຂາວ ປະຈຸບັນໄດ້ແບ່ງການຄຸ້ມຄອງອອກເປັນ 3 ຄຸ້ມ, ມີ 53 ຫຼັງຄາເຮືອນ, ມີ 81 ຄອບຄົວ, ພົນລະເມືອງທັງໝົດມີ 486 ຄົນ, ຍິງ 237 ຄົນ, ມີແຮງງານສົມບູນ 155 ຄົນ ແລະ ພາຍໃນບ້ານມີຊົນເຜົ່າດຽວຄືຊົນເຜົ່າກະຕາງ.

ຕາຕະລາງ 3: ຈຳນວນປະຊາກອນ ແລະ ຊົນເຜົ່າພາຍໃນບ້ານ

| ລ/ດ | ຊື່ບ້ານ | | | | | | | |
|---|---|---|---|---|---|---|---|---|
| | ຕຸ້ມລີທົ່ງ | | | | ຕຸ້ມລີຂາວ | | | |
| | ຊົນເຜົ່າກະຕາງ | | | | ຊົນເຜົ່າກະຕາງ | | | |
| | ຈຳນວນທັງໝົດ (ຄົນ) | ຍິງ ( ຄົນ) | ຈຳນວນຫຼັງຄາເຮືອນ (ຄົນ) | ຈຳນວນຄອບຄົວ ( ຄົນ) | ຈຳນວນທັງໝົດ (ຄົນ) | ຍິງ ( ຄົນ) | ຈຳນວນຫຼັງຄາເຮືອນ (ຄົນ) | ຈຳນວນຄອບຄົວ (ຄົນ) |
| 1 | 580 | 311 | 59 | 90 | 486 | 237 | 53 | 81 |
| ລວມ | 580 | 311 | 59 | 90 | 486 | 237 | 53 | 81 |

*ແຫຼ່ງຂໍ້ມູນ: ສຳພາດພາກສະໜາມ, 2011.*

### ຂ. ອາຊີບຂອງປະຊາຊົນ

ການປະກອບອາຊີບຂອງປະຊາຊົນບ້ານຕຸ້ມລີທົ່ງສ່ວນໃຫ່ຍ ແມ່ນເຮັດໄຮ່ເປັນອາຊີບຫຼັກສະເລ່ຍແລ້ວ ກວມເອົາ 100 ເປີເຊັນ ຂອງຄອບຄົວທັງໝົດ, ບາງຄອບຄົວກໍ່ເຮັດທັງໄຮ່ ແລະ ນາພາຍຫຼັງເຮັດໄຮ່ ແລ້ວບາງຄອບຄົວກໍ່ໄດ້ເຮັດສວນ, ລ້ຽງສັດ, ຫາເຄື່ອງປ່າຂອງດົງ, ຫາປາ ແລະ ຊອກຮັບຈ້າງ.

ບ້ານຕຸ້ມລີຂາວອາຊີບຫຼັກແມ່ນການເຮັດໄຮ່ ແລະ ເຮັດນາ, ອາຊີບສຳຮອງແມ່ນການປູກພືດ, ຮັບຈ້າງ, ຫາປາ ແລະ ເກັບເຄື່ອງປ່າຂອງດົງ, ລ້ຽງສັດ ສັດທີ່ປະຊາຊົນພາຍໃນບ້ານລ້ຽງມີ : ງົວ, ຄວາຍ, ໝູ, ແບ້ ແລະ ສັດປີກ

## 4.6 ວັດທະນະທຳ ແລະ ສັງຄົມ

### ກ. ຮີດຄອງປະເພນີ

ປະຊາຊົນພາຍໃນບ້ານຕຸ້ມລີທົ່ງ ແມ່ນຖືສາສະໜາຜີໝົດທຸກຄົນ ແລະ ມີຮີດຄອງປະເພນີທີ່ເຂົາເຈົ້າປະຕິບັດຄື: ຮີດເຂົ້າ, ຮີດຜີເຮືອນ, ຮີດຜີບ້ານ, ຮີດປ່າສັກສິດ ແລະ ມີປະເພນີກິນແງະ ແລະ ຍັງມີຂໍ້ຫ້າມຕ່າງໆ ເຊັ່ນ: ຫ້າມບໍ່ໃຫ້ເຮັດກິນເປິເປື້ອນ, ຫ້າມບໍ່ໃຫ້ເຂົ້າປ່າຊີ້ທູດ, ຫ້າມບໍ່ໃຫ້ໄປຖາງປ່າຢູ່ບ້ານຮ້າງ ແລະ ປ່າສັກສິດອື່ນໆ. ຜູ້ຍິງເວລາເປັນປະຈຳເດືອນຫ້າມບໍ່ໃຫ້ຂຶ້ນເຮືອນຄົນອື່ນ.

ປະຊາຊົນພາຍໃນບ້ານຕຸ້ມລີຂາວ ແມ່ນຖືສາສະໜາຜີໝົດທຸກຄົນ ແລະ ມີຮີດຄອງປະເພນີຄື: ຮີດເຂົ້າ, ຮີດຜີເຮືອນ, ຮີດຜີບ້ານ, ຮີດປ່າສັກສິດ ແລະ ມີປະເພນີກິນແງະ ແລະ ຍັງມີຂໍ້ຫ້າມຕ່າງໆເຊັ່ນ: ຫ້າມບໍ່ໃຫ້ເຮັດກິນເປິເປື້ອນ, ຫ້າມບໍ່ໃຫ້ເຂົ້າປ່າຊີ້ທູດ, ຫ້າມບໍ່ໃຫ້ໄປຖາງປ່າ, ລ່າສັດຢູ່ບ້ານຮ້າງ, ປ່າຊ້າ, ປ່າສັກສິດອື່ນໆທີ່ນັບຖືກັນມາແຕ່ດຶກດຳບັນ ແລະ ຜູ້ຍິງເວລາເປັນປະຈຳເດືອນຫ້າມບໍ່ໃຫ້ຂຶ້ນເຮືອນຄົນອື່ນ.

### ຂ. ການປົກຄອງ

ບ້ານຕຸ້ມລີທົ່ງ ແລະ ບ້ານຕຸ້ມລີຂາວ ເປັນບ້ານໜຶ່ງທີ່ຂຶ້ນກັບເມືອງຕະໂອ້ຍ ແຂວງສາລະວັນ ເຊິ່ງເປັນບ້ານໜຶ່ງທີ່ມີ ອົງການຈັດຕັ້ງຄົບຊຸດ ແລະ ມີການປົກຄອງທີ່ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ. ມີຮີດຄອງປະເພນີອັນດີງາມ, ການເຄື່ອນໄຫວການດຳລົງຊີວິດພາຍໃນບ້ານ ແມ່ນຢູ່ພາຍໃຕ້ການຊີ້ນຳຂອງ ພັກ-ລັດ ແລະ ປະຕິບັດຕາມລະບຽບກົດໝາຍທີ່ບ້ານ-ເມືອງວາງອອກ.

ອຳນາດການປົກຄອງບ້ານປະກອບມີ: ນາຍບ້ານ, ຮອງນາຍບ້ານ 2 ຄົນ ໃນນັ້ນປະກອບມີອົງການຈັດຕັ້ງຂອງພັກມີໜ້າທີ່ດັ່ງນີ:

- ນາຍບ້ານມີໜ້າທີ່ຮັບຜິດຊອບລວມ.
- ຮອງນາຍບ້ານຜູ້ທີ 1: ຮັບຜິດຊອບວຽກງານເສດຖະກິດ (ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ).
- ຮອງນາຍບ້ານຜູ້ທີ່ 2: ຮັບຜິດຊອບວຽກງານວັດທະນາທຳ-ສັງຄົມ.

ສຳລັບອຳນາດການປົກຄອງບ້ານຈຳນວນໜຶ່ງ ຍັງແມ່ນມະຫາຊົນນອນຢູ່ໃນບ້ານ ແຕ່ເຖິງແນວໃດກໍ່ຕາມຄະນະບໍລິຫານງານຂັ້ນບ້ານທຸກຂະແໜງການ ແມ່ນໄດ້ຈັດຕັ້ງປະຕິບັດໄປຕາມທິດຊີ້ນຳຂອງໜ່ວຍພັກ ເຮັດວຽກແບບລວມສູນມີປະຊາທິປະໄຕເປັນໝູ່ຄະນະແບ່ງຄວາມຮັບຜິດຊອບໃຫ້ບຸກຄົນຮັບຜິດຊອບ, ສຽງສ່ວນໜ້ອຍຕ້ອງປະຕິບັດຕາມສຽງສ່ວນຫຼາຍ ແລະ ມີໂຄງຮ່າງການຈັດຕັ້ງດັ່ງນີ້:

**ແຜນວາດການປົກຄອງບ້ານ**




ຮູບທີ 2: ໂຄງຮ່າງການຈັດຕັ້ງຂອງທັງສອງບ້ານ.

## ຄ. ການສຶກສາ

ການສຶກສາແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນ ເຊິ່ງບ້ານໄດ້ເອົາໃຈໃສ່ເປັນພິເສດ ແລະ ພໍ່ແມ່ປະຊາຊົນກໍ່ເຫັນຄວາມສຳຄັນຂອງການສຶກສາເຊັ່ນດຽວກັນ ເຂົາເຈົ້າໄດ້ສົ່ງເສີມລູກຫຼານຂອງຕົນເອງໃຫ້ເຂົ້າໂຮງຮຽນ ແລະ ພະຍາຍາມສົ່ງເສີມຈົນສຸດຄວາມສາມາດຂອງເຂົາເຈົ້າ. ພາຍໃນບ້ານຕຸ້ມລີທົ່ງມີໂຮງຮຽນ 1 ຫຼັງ, ປໍ 1- ປໍ 4, ມີ ຄູສອນ 2 ສະຫາຍ ເປັນຊາຍທັງສອງຄົນ, ສັນຍາຈ້າງ 1 ຄົນ, ນັກຮຽນທີ່ຮຽນຈົບປໍ 4 ແລ້ວ ແມ່ນໄປຮຽນຕໍ່ຊັ້ນຕໍ່ໄປຢູ່ໂຮງຮຽນບ້ານປະຈຸດອນ ແລະ ພາຍໃນບ້ານຍັງມີໂຄງການກຳລັງຈະກໍ່ສ້າງໂຮງຮຽນອີກ 1 ຫຼັງ (ທຶນການຊ່ວຍເຫຼືອຂອງໂຄງການອ້ອກສະຟາມ).

ພາຍໃນບ້ານຕຸ້ມລີຂາວມີໂຮງຮຽນ 1 ຫຼັງ ປໍ 1-ປໍ 4 ຈຳນວນນັກຮຽນ 81 ຄົນ, ຍິງ 30 ຄົນ ມີຄູສອນ 2 ຄົນ ເຊິ່ງເປັນຊາຍທັງສອງຄົນ, ສັນຍາຈ້າງ 1 ຄົນ. ພາຍຫຼັງຮຽນຈົບປໍ 4 ແລ້ວ ກໍ່ໄດ້ໄປຮຳ

ຮຽນຕໍ່ຢູ່ບ້ານປະຈຸດອນ ພາຍໃນບ້ານກຳລັງກໍ່ສ້າງໂຮງຮຽນຕື່ມອີກ 1 ຫຼັງ ທີ່ໃກ້ຈະສຳເລັດແລ້ວ ເຊິ່ງໄດ້ຮັບທຶນຊ່ວຍເຫຼືອຈາກໂຄງການ ອັອກສະຟາມ.

### ງ. ສາທາລະນະສຸກ

ພາຍໃນບ້ານຕຸ້ມລີທີ່ງມີສຸກສາລາ 1 ຫຼັງ, ມີແພດປະຈຳພຽງ 1 ຄົນ ມີຕູ້ຢາ 1 ໜ່ວຍ, ຖົງພະຍາບານ 1 ຖົງ, ອາສາສະໝັກບ້ານ (ອ.ສ.ບ) 2 ທ່ານ, ໄດ້ຮັບຢາຈາກຫ້ອງການສາທາລະນະສຸກເມືອງ, ປະຊາຊົນພາຍໃນບ້ານແມ່ນໄດ້ຮັບການປິ່ນປົວໃນຂັ້ນຕົ້ນກໍລະນີບໍ່ຮຸນແຮງ, ກໍລະນີເຈັບເປັນຮຸນແຮງກໍ່ເຂົ້າມາປິ່ນປົວຢູ່ ເມືອງ ຫຼື ແຂວງ. ພະຍາດທີ່ມັກເກີດຂຶ້ນພາຍໃນບ້ານ ແມ່ນພະຍາດຖອກທ້ອງ ແລະ ໄຂ້ຍຸງ ສ່ວນຫຼາຍປະຊາຊົນໃນເຂດດັ່ງກ່າວແມ່ນເຊື່ອແບບງົມງວຍ ການປິ່ນປົວຂັ້ນຕົ້ນຂອງເຂົາເຈົ້າ ແມ່ນຈະຮັກສາປິ່ນປົວຕາມຮີດຄອງປະເພນີກ່ອນແລ້ວຈຶ່ງໄປປິ່ນປົວຢູ່ສຸກສາລາ.

ພາຍໃນບ້ານຕຸ້ມລີຂາວແມ່ນບໍ່ມີສຸກສາລາປະຊາຊົນພາຍໃນບ້ານ ແມ່ນໄດ້ໄປປິ່ນປົວ ຫຼື ຊື້ຢາຢູ່ສຸກສາລາບ້ານຕຸ້ມລີທີ່ງໃນກໍລະນີບໍ່ຮຸນແຮງ ຖ້າກໍລະນີເຈັບເປັນຮຸນແຮງກໍ່ເຂົ້າມາປິ່ນປົວຢູ່ເມືອງ ຫຼື ແຂວງ. ພະຍາດທີ່ມັກເກີດຂຶ້ນພາຍໃນບ້ານແມ່ນພະຍາດຖອກທ້ອງ ແລະ ໄຂ້ຍຸງ ສ່ວນຫຼາຍປະຊາຊົນໃນເຂດດັ່ງກ່າວແມ່ນເຊື່ອແບບງົມງວຍ ການປິ່ນປົວຂັ້ນຕົ້ນຂອງເຂົາເຈົ້າແມ່ນຈະຮັກສາປິ່ນປົວຕາມຮີດຄອງປະເພນີກ່ອນແລ້ວຈຶ່ງໄປປິ່ນປົວຢູ່ສຸກສາລາ ຫຼື ໂຮງໝໍ.

### ຈ. ການຄົມມະນາຄົມ

ເສັ້ນທາງຄົມມະນາຄົມຂອງບ້ານຕຸ້ມລີທີ່ງສາມາດທຽວໄດ້ 2 ລະດູຄື: ລະດູແລ້ງ ແລະ ລະດູຝົນ. ລະດູແລ້ງຈະທຽວໄດ້ຢ່າງສະດວກສະບາຍ ສ່ວນລະດູຝົນຂ້ອນຂ້າງຈະທຽວໄປມາຍາກ ເພາະທາງເປັນທາງດິນແດງ ແລະ ຊັນ. ພາຍໃນບ້ານມີພຽງເສັ້ນທາງ 1 ເສັ້ນ ທີ່ໃຊ້ໃນການໄປມາຫາສູ່ບ້ານຕໍ່ ບ້ານ, ຄຸ້ມຕໍ່ຄຸ້ມ ໃນການລຳລຽງສິນຄ້າ, ແລກປ່ຽນຊື້ຂາຍ.

ເສັ້ນທາງຄົມມະນາຄົມຂອງບ້ານຕຸ້ມລີຂາວສາມາດທຽວໄດ້ 2 ລະດູຄື: ລະດູແລ້ງ ແລະ ລະດູຝົນ. ລະດູແລ້ງຈະທຽວໄດ້ຢ່າງສະດວກສະບາຍ ສ່ວນລະດູຝົນຂ້ອນຂ້າງຈະທຽວໄປມາຍາກ ເພາະທາງ ເປັນທາງດິນແດງ ແລະ ຊັນ. ພາຍໃນບ້ານມີພຽງເສັ້ນທາງ 2 ເສັ້ນ ແລະ ໃຊ້ເຮືອໃນການໄປມາຫາ ສູ່ລະຫວ່າງຄຸ້ມຕໍ່ຄຸ້ມ, ບ້ານຕໍ່ ບ້ານໃນການລຳລຽງສິນຄ້າ, ແລກປ່ຽນຊື້ຂາຍ.

## 4.7 ການຜະລິດກະສິກຳຂອງປະຊາຊົນ

### ກ. ການປູກຝັງ

ປະຊາຊົນພາຍໃນບ້ານຕຸ້ມລືທົ່ງ ແມ່ນພາກັນປູກມັນຕົ້ນ, ມັນດ້າງ, ເຜືອກ ເພາະເຂົາເຈົ້າໃຊ້ເປັນອາຫານໃນເວລາເຂົ້າບໍ່ພໍກິນ ບາງຄັ້ງກໍ່ໃຊ້ໜື້ງປົນກັບເຂົ້າ ແລະ ກໍ່ໃຊ້ເປັນອາຫານສັດ. ນອກນັ້ນເຂົາເຈົ້າຍັງ ປູກກ້ວຍ, ປູກອ້ອຍ, ໝາກເຂືອ, ຕົ້ນຢາສູບ, ໝາກເຜັດ ແລະ ພືດຜັກອື່ນໆ.

ປະຊາຊົນພາຍໃນບ້ານຕຸ້ມລືຂາວ ແມ່ນພາກັນປູກມັນຕົ້ນ, ມັນດ້າງ, ເຜືອກ ເພາະເຂົາເຈົ້າໃຊ້ເປັນອາຫານໃນເວລາເຂົ້າບໍ່ພໍກິນ ບາງຄັ້ງກໍ່ໃຊ້ໜື້ງປົນກັບເຂົ້າ ແລະ ກໍ່ໃຊ້ເປັນອາຫານສັດ. ນອກນັ້ນເຂົາເຈົ້າຍັງປູກຕົ້ນຢາສູບ, ປູກໝາກທຸ່ງ, ກ້ວຍ, ປູກອ້ອຍ, ໝາກເຜັດ, ໝາກເຂືອ ແລະ ອື່ນໆ.

### ຂ. ການລ້ຽງສັດ

ການລ້ຽງສັດຂອງປະຊາຊົນບ້ານຕຸ້ມລືທົ່ງ ແລະ ບ້ານຕຸ້ມລືຂາວສ່ວນໃຫ່ຍແມ່ນ: ຄວາຍ, ງົວ, ແບ້, ໝູ, ເປັດ, ໄກ່ ການລ້ຽງແມ່ນ ປ່ອຍຕາມທຳມະຊາດໃນຊ່ວງລະດູແລ້ງ ແລະ ຈະຜູກໃນຊ່ວງລະດູຝົນ. ພະຍາດທີ່ມັກເກີດກັບງົວ, ຄົວ ແມ່ນພະຍາດປາກເປື່ອຍລີ້ງເລັບ ໃນຊ່ວງເດືອນ 2 ແລະ ເດືອນ 7. ພະຍາດທີ່ມັກເກີດກັບສັດປີກ ແມ່ນພະຍາດຕາຍຮ່າ ມັນມັກເກີດຂຶ້ນໃນຊ່ວງເດືອນ 2 ຫາ ເດືອນ 3 ແລະ ໃນຊ່ວງເດືອນ 5 ຫາ ເດືອນ 6. ສ່ວນການປິ່ນປົວແມ່ນປິ່ນປົວຕາມພື້ນບ້ານ ເຊັ່ນ: ພະຍາດປາກເປື່ອຍລີ້ງເລັບທີ່ເກີດກັບງົວ, ຄວາຍແມ່ນຈະໃຊ້ໝາກນາວ, ໝາກລວງ, ໝາກຕ້ອງ (ໝາກໄມ້ທີ່ມີລົດຊາດສົ້ມ) ມາທາໃສ່ບໍລິເວນທີ່ເປັນພະຍາດ ແລ້ວມັນກໍ່ຈະຄ່ອຍໆບັນເທົາໄປ ແລະ ຈົນເຖິງຂັ້ນຫາຍດີ. ພະຍາດທີ່ເກີດກັບສັດປີກແມ່ນຈະບໍ່ມີການຮັກສາແມ່ນຈະປ່ອຍໃຫ້ມັນຕາຍເພາະເຂົາເຈົ້າບໍ່ມີວິທີການປ້ອງກັນ ແລະ ຮັກສາ.

ຕາຕະລາງທີ 4: ຈຳນວນສັດລ້ຽງຂອງປະຊາຊົນ

| ລ/ດ | ບ້ານຕຸ້ມລືທົ່ງ | | ບ້ານຕຸ້ມລືຂາວ | |
|---|---|---|---|---|
| | ປະເພດສັດລ້ຽງ | ຈຳນວນສັດລ້ຽງ (ໂຕ) | ປະເພດສັດລ້ຽງ | ຈຳນວນສັດລ້ຽງ (ໂຕ) |
| 1 | ງົວ | 141 | ງົວ | 35 |
| 2 | ຄວາຍ | 263 | ຄວາຍ | 30 |
| 3 | ແບ້ | 33 | ແບ້ | 20 |
| 4 | ໝູ | 190 | ໝູ | 100 |
| 5 | ເປັດ | 504 | ເປັດ | 79 |
| 6 | ໄກ່ | 372 | ໄກ່ | 121 |
| ລວມ | 6 ປະເພດສັດລ້ຽງ | 1,503 | 6 ປະເພດສັດລ້ຽງ | 385 |

*ແຫຼ່ງຂໍ້ມູນ: ຈາກການສຳພາດພາກສະໜາມ, 2011.*

# 5. ຜົນຂອງການສຶກສາ

## 5.1 ສະພາບການນຳໃຊ້ທີ່ດິນກ່ອນ ແລະ ຫຼັງ ການສຳປະທານທີ່ດິນ

### 5.1.1 ສະພາບການນຳໃຊ້ທີ່ດິນກ່ອນສຳປະທານປີ 2008

ການນຳໃຊ້ທີ່ດິນ-ປ່າໄມ້ຂອງປະຊາຊົນບ້ານຕຸ້ມລີທົ່ງ ແລະ ບ້ານຕຸ້ມລີຂາວ ແມ່ນມີປະຫວັດທີ່ຍາວນານ ແລະ ມີການປ່ຽນແປງໄປຕາມແຕ່ລະໄລຍະ. ສະພາບການນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງປະຊາຊົນຕາມການຈັດແບ່ງປະເພດທີ່ດິນໃນເວລານັ້ນເຊິ່ງປະກອບມີ 3 ປະເພດໃຫຍ່ຄື: ທີ່ດິນປ່າໄມ້, ທີ່ດິນກະສິກຳ ແລະ ທີ່ດິນປຸກສ້າງ, ມີ 9 ປະເພດດິນຍ່ອຍເຊັ່ນ: ດິນປ່າສະຫງວນ, ດິນປ່າບໍລິເວນນ້ຳ, ດິນປ່າຊ້າ, ດິນປ່າຊົມໃຊ້, ດິນປຸກສ້າງ, ດິນແຮປຸກສ້າງ, ດິນໂຮງຮຽນ, ດິນກະສິກຳ ແລະ ດິນສຸກສາລາ ແລະ ດິນອື່ນໆ.

- ດິນກະສິກຳ: ເຊິ່ງເປັນດິນທີ່ປະຊາຊົນສ່ວນໃຫຍ່ຈະນຳໃຊ້ເຂົ້າໃນການເຮັດໄຮ່ແບບໝູນວຽນ, ໃນນັ້ນ ມີພຽງບາງຄອບຄົວທີ່ເຮັດນາ, ເຮັດສວນນີ້ແມ່ນອາໃສທຳມະຊາດໂດຍກົງ ຖ້າປີໃດສະພາບອາກາດເອື້ອອຳນວຍຝົນຕົກຖືກຕ້ອງຕາມລະດູການ ແລະ ນ້ຳບໍ່ຖ້ວມ ກໍ່ຈະໄດ້ຜົນຜະລິດຫຼາຍ ແຕ່ກົງກັນຂ້າມຖ້າປີໃດສະພາບອາກາດບໍ່ປົກກະຕິຝົນຕົກບໍ່ຖືກຕ້ອງຕາມລະດູການ, ອາກາດແຫ້ງແລ້ງ ຜົນຜະລິດກໍ່ຈະໄດ້ໜ້ອຍ ບໍ່ພຽງພໍກັບຄວາມຕ້ອງການ ເຮັດໃຫ້ປະຊາຊົນຕົກຢູ່ໃນພາວະຂາດເຂົ້າກິນ.

- ດິນປ່າປ້ອງກັນບໍລິເວນນ້ຳ: ຊາວບ້ານຈະນຳໃຊ້ເຂົ້າໃນການເຮັດສວນປູກມັນຕົ້ນ, ສາລີ, ອ້ອຍ, ກ້ວຍ ແລະ ອື່ນໆ ແລະ ເຮັດນາປູກເຂົ້າ ຜົນຜະລິດຈະບໍ່ຄ່ອຍໄດ້ດີປານໃດ ເພາະດິນບໍລິເວນນີ້ເປັນດິນທີ່ບໍ່ອຸດົມສົມບູນປານໃດ ແລະ ໃນການທີ່ປະຊາຊົນມາເຮັດສວນ, ເຮັດນາໃສ່ນັ້ນ ເຮັດໃຫ້ດິນບໍລິເວນແຄມຝັ່ງເຊາະເຈື່ອນໄປເທື່ອລະໜ້ອຍໃນແຕ່ລະປີ.

- ດິນປ່າຊ້າ: ປະຊາຊົນຈະນຳໃຊ້ເຂົ້າໃນການຝັງສົບຄົນຕາຍ ແຕ່ດິນບໍລິເວນນີ້ເປັນດິນທີ່ອຸດົມສົມບູນ ແລະ ມີປ່າໄມ້ຕຶບໜາ ເພາະປະຊາຊົນຈະນັບຖືເປັນປ່າສັກສິດບໍ່ມີໃຜກ້າເຂົາໄປເຮັດກິດຈະກຳຕ່າງໆພາຍໃນປ່າດັ່ງກ່າວ.

- ດິນປ່າຊົມໃຊ້: ປະຊາຊົນຈະນຳໃຊ້ເຮັດໄຮ່ປູກເຂົ້າ ແລະ ລ້ຽງສັດ ເຊັ່ນ: ງົວ, ຄວາຍ, ແບ້ໃສ່ບໍລິເວນດິນປ່າຊົມໃຊ້.

- ດິນປຸກສ້າງ: ປະຊາຊົນຈະໃຊ້ປຸກສ້າງເຮືອນຊານບ້ານຊ່ອງ ແລະ ເຮັດສວນ (ສວນຄົວ) ປູກຜັກ, ປູກໝາກເຜັດ, ປູກກ້ວຍ, ປູກໝາກນັດ, ປູກອ້ອຍ ແລະ ອື່ນໆ.

- ດິນແຮປຸກສ້າງ: ບ້ານຈະໃຊ້ເປັນດິນແຮໄວ້ສ້າງໂຮງງຮຽນ, ສ້າງເຮືອນຊານ, ເຮັດໂຮງໝໍ ແລະ ອື່ນໆ. ແຕ່ປະຊາຊົນບາງຄອບຄົວກໍ່ໄປເຮັດສວນ ແລະ ເຮັດໄຮ່ໃສ່ດິນບໍລິເວນນັ້ນ.

- ດິນໂຮງຮຽນ: ແມ່ນໃຊ້ສຳລັບປຸກສ້າງໂຮງຮຽນ ເພື່ອເປັນບ່ອນສຶກສາຫາຄວາມຮູ້ໃຫ້ແກ່ລູກຫຼານຂອງພໍ່ແມ່ປະຊາຊົນພາຍໃນບ້ານ.

- ດິນສຸກສາລາ: ແມ່ນໃຊ້ສ້າງສຸກສາລາ ເພື່ອປິ່ນປົວພະຍາດໃຫ້ແກ່ປະຊາຊົນ ໃນເວລາທີ່ເຂົາເຈົ້າເຈັບເປັນ ໂດຍມີສຸກສາລາແຫ່ງດຽວ, ໃນນັ້ນມີບ້ານອ້ອມຂ້າງຈະເຂົ້າມາຊົມໃຊ້ປິ່ນປົວ.

- ດິນປ່າສະຫງວນ: ບ້ານຈະໃຊ້ເປັນພື້ນທີ່ອະນຸລັກພັນສັດ ແລະ ພັນໄມ້ຕ່າງໆທີ່ມີໃນພື້ນທີ່ດັ່ງກ່າວ ແຕ່ປະຊາຊົນສາມາດເຂົ້າໄປເກັບເຄື່ອງປ່າຂອງດົງໃນພື້ນທີ່ປ່າສະຫງວນໄດ້ ເພື່ອນຳມາເປັນອາຫານ ແລະ ຂາຍເພື່ອຫາລາຍໄດ້ພຽງເລັກນ້ອຍ.

ເບິ່ງລວມແລ້ວຮູບແບບການນຳໃຊ້ທີ່ດິນ ສ່ວນໃຫຍ່ແມ່ນດຳເນີນໄປຕາມຄວາມຊິນເຄີຍ ທີ່ສືບທອດກັນມາແຕ່ລຸ້ນປູ່ຍ່າຕາຍາຍ, ບໍ່ມີລັກສະນະຈັບຈອງກຳມະສິດຜູກຂາດ ສາມາດຢືມ ຫຼື ຢືມກຳມະສິດການນຳໃຊ້ທີ່ດິນໄດ້ ເຊັ່ນ: ການເຮັດໄຮ່ເຂົ້າແມ່ນຈະເຮັດຕາມປ່າເລົ່າທີ່ຕຶບໜາອຸດົມສົມບູນ, ສາມາດປູກໄດ້ໜຶ່ງຫາສອງປີຈຶ່ງເຄື່ອນຍ້າຍໄປຕາມພື້ນທີ່ທີ່ຕົນເອງເຄີຍຖາກຖາງທີ່ຜ່ານມາ ຫຼື ກໍ່ຂໍນຳເພື່ອນບ້ານ.

ການນຳໃຊ້ທີ່ດິນປ່າໄມ້ໃນຫຼາຍປະເພດຂອງປະຊາຊົນ ແມ່ນມີລັກສະນະເປັນຊັບສິນສ່ວນລວມນຳໃຊ້ຮ່ວມກັນໄດ້ ຍົກເວັ້ນເນື້ອທີ່ດິນເຊິ່ງຖືວ່າເປັນມໍລະດົກຕົກທອດ ແລະ ເນື້ອທີ່ດິນທີ່ເຮັດການຜະລິດຄົງທີ່ ແລະ ໄດ້ຮັບຜົນຜະລິດທຸກໆປີ ເຊັ່ນ: ດິນສວນ ແລະ ດິນນາ. ສຳລັບເນື້ອທີ່ດິນນາເນື່ອງຈາກຕ້ອງໃຊ້ແຮງງານໜັກໃນການຊຸບຊ່າວ ແລະ ຕ້ອງໄດ້ໃຊ້ເວລາຫຼາຍປີຈຶ່ງເປັນພື້ນທີ່ນາທີ່ສາມາດເກັບນ້ຳໄດ້ດີ ເໝາະສົມຕໍ່ກັບການປູກເຂົ້າ.

ສຳລັບບ້ານຕຸ້ມລີຂາວ ການນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງປະຊາຊົນກໍ່ມີປະຫວັດທີ່ຍາວນານເຊັ່ນດຽວກັນ, ການຈັດແບ່ງປະເພດທີ່ດິນ ແລະ ປ່າໄມ້ອອກເປັນ 3 ປະເພດໃຫ່ຍຄື: ທີ່ດິນປ່າໄມ້, ທີ່ດິນກະສິກຳ ແລະ ທີ່ດິນປຸກສ້າງ, ມີ 8 ປະເພດດິນຍ່ອຍເຊັ່ນ: ດິນປ່າສະຫງວນ, ດິນປ່າໄມ້ບໍລິເວນນ້ຳ, ດິນປ່າຊ້າ, ດິນປ່າຊົມໃຊ້, ດິນປຸກສ້າງ, ດິນແຮປຸກສ້າງ, ດິນໂຮງຮຽນ ແລະ ດິນກະສິກຳ ແຕ່ວ່າບໍ່ມີສຸກສາລາ. ສ່ວນການນຳໃຊ້ທີ່ດິນແຕ່ລະປະເພດແມ່ນຄ້າຍຄືກັນ ເພາະວ່າບ້ານດັ່ງກ່າວແມ່ນຢູ່ຕິດກັນ ແລະ ມີແນວຄິດ, ຮີດຄອງປະເພນີອັນດຽວກັນ.

## 5.1.2 ສະພາບການນຳໃຊ້ທີ່ດິນພາຍຫຼັງທີ່ມີການສຳປະທານປີ 2010

ການນຳໃຊ້ທີ່ດິນຂອງປະຊາຊົນ ບ້ານຕຸ້ມລີທົ່ງ ແລະ ບ້ານຕຸ້ມລີຂາວ ພາຍຫຼັງການສຳປະທານທີ່ດິນ ຈາກການວິເຄາະຂໍ້ມູນເຫັນວ່າການນຳໃຊ້ທີ່ດິນແຕ່ລະລະປະເພດກໍ່ຍັງຄົງນຳໃຊ້ແບບເກົ່າບໍ່ມີຫຍັງແຕກຕ່າງໄປຈາກເດີມ ກ່ອນທີ່ຈະມີການສຳປະທານທີ່ດິນ.

ພາຍຫຼັງການເຂົ້າມາສຳປະທານທີ່ດິນຂອງບໍລິສັດ ສຳລັບການເຮັດໄຮ່ຂອງປະຊາຊົນທັງສອງບ້ານດັ່ງກ່າວ ເຊິ່ງມີບາງຄອບຄົວທີ່ເຄີຍເຮັດໄຮ່ຢູ່ໃນບໍລິເວນສວນຂອງບໍລິສັດກໍ່ຕ້ອງໄປຖາງໄຮ່ບ່ອນອື່ນທີ່ໄກຈາກບ່ອນເກົ່າ ຫຼັງຈາກທີ່ໄດ້ປູກເຂົ້າໄດ້ສອງປີຜ່ານມາໂດຍບໍລິສັດສະໜອງແນວພັນເຂົ້າໜຽວໃຫ້ຄອບຄົວລະ 30 ກິໂລກຼາມ. ສ່ວນໃນປີຈະມານີ້ແມ່ນກໍ່ມີບາງຄອບຄົວແມ່ນຈະປູກມັນ

ຕົ້ນ, ສາລີ ແລະ ພືດອື່ນໆໃສ່ ແຕ່ວ່າເຂົາເຈົ້າຈະບໍ່ປູກເຂົ້າແລ້ວເພາະວ່າ ຕົ້ນໄມ້ວິກແມ່ນໃຫຍ່ເຮັດໃຫ້ເຂົ້າຈະບໍ່ໄດ້ຮັບຜົນຜະລິດໄດ້ດີ.

ປະຊາຊົນຕ້ອງໄດ້ບຸກເບີກພື້ນທີ່ທຳການຜະລິດຕື່ມອີກ ໃນເນື້ອທີ່ດິນແຮກະສິກຳ ເພື່ອໃຫ້ພຽງພໍກັບຄວາມຕ້ອງການໂດຍການຖາງປ່າເຮັດໄຮ່, ເຮັດສວນ ແລະ ມີການຈັບຈອງພື້ນທີ່ດິນເພື່ອລ້ຽງສັດ ແລະ ມີບາງຄອບຄົວໄດ້ໄປລຸກລ້ຳພື້ນທີ່ປ່າປ້ອງກັນບໍລິເວນນ້ຳ, ປ່າຊົມໃຊ້ເຮັດໃຫ້ດິນແຄມນ້ຳນັ້ນເຊາະເຈື່ອນ ແລະ ເຮັດໃຫ້ນ້ຳຂຸ່ນ.

## 5.2 ປະເພດການນຳໃຊ້ທີ່ດິນກ່ອນ ແລະ ຫຼັງການສຳປະທານທີ່ດິນ

### 5.2.1 ປະເພດການນຳໃຊ້ທີ່ດິນກ່ອນການສຳປະທານທີ່ດິນ ປີ 2008

ກ່ອນການສຳປະທານທີ່ດິນພາຍໃນບ້ານຕຸ້ມລີທົ່ງມີເນື້ອທີ່ທັງໝົດແມ່ນ 2,610.99 ເຮັກຕາ. ໃນນັ້ນ, ທີ່ດິນປ່າໄມ້ມີຫຼາຍກ່ວາໝູ່ມີ 1,661.67 ເຮັກຕາ (63.64 ເປີເຊັນ) ແລະ ໜ້ອຍກ່ວາໝູ່ແມ່ນທີ່ດິນປຸກສ້າງມີ 13 ເຮັກຕາ (0.5 ເປີເຊັນ) ຂອງເນື້ອທີ່ທັງໝົດບ້ານ. ສຳລັບການນຳໃຊ້ທີ່ດິນກະສິກຳຂອງປະຊາຊົນແມ່ນເຮັດໄຮ່ກວມເນື້ອທີ່ຫຼາຍກ່ວາໝູ່ມີ 67.8 ເຮັກຕາ (2.6 ເປີເຊັນ) ແລະ ໜ້ອຍກ່ວາໝູ່ແມ່ນເນື້ອທີ່ນາມີ 2.3 ເຮັກຕາ (0.09 ເປີເຊັນ) ຂອງເນື້ອທີ່ທັງໝົດບ້ານ.

ສ່ວນບ້ານຕຸ້ມລີຂາວມີເນື້ອທີ່ທັງໝົດແມ່ນ 1,841.94 ເຮັກຕາ. ໃນນັ້ນ, ທີ່ດິນກະສິກຳມີຫຼາຍກ່ວາໝູ່ມີ 949.81 ເຮັກຕາ (51.57 ເປີເຊັນ) ແລະ ໜ້ອຍກ່ວາໝູ່ແມ່ນ ທີ່ດິນປຸກສ້າງມີ 15.37 ເຮັກຕາ (0.83 ເປີເຊັນ) ຂອງເນື້ອທີ່ທັງໝົດບ້ານ. ສຳລັບການນຳໃຊ້ທີ່ດິນກະສິກຳ ຂອງຂອງປະຊາຊົນແມ່ນເຮັດໄຮ່ກວມເນື້ອທີ່ຫຼາຍກ່ວາໝູ່ມີ 24 ເຮັກຕາ (1.3 ເປີເຊັນ) ແລະ ໜ້ອຍກ່ວາໝູ່ແມ່ນເນື້ອທີ່ນາມີ 13 ເຮັກຕາ (0.71 ເປີເຊັນ) ຂອງເນື້ອທີ່ທັງໝົດບ້ານ. ເຊິ່ງລາຍລະອຽດສະແດງຢູ່ຕາຕາລາງລຸ່ມນີ້:

ຕາຕະລາງທີ 5: ປະເພດການນຳໃຊ້ທີ່ດິນກ່ອນການສຳປະທານທີ່ດິນປີ 2008

| ລ/ດ | ປະເພດທີ່ດິນ | ບ້ານຕຸ້ມລີທົ່ງ | | ບ້ານຕຸ້ມລີຂາວ | | ລວມ | |
|---|---|---|---|---|---|---|---|
| | | ເນື້ອທີ່ (ຮຕ) 2008 | ເປີເຊັນ (%) | ເນື້ອທີ່ (ຮຕ) 2008 | ເປີເຊັນ (%) | ເນື້ອທີ່ (ຮຕ) 2008 | ເປີເຊັນ (%) |
| **ກ** | **ທີ່ດິນປ່າໄມ້** | | | | | | |
| 1 | ດິນປ່າສະຫງວນ | 1,422.53 | 54.48 | 670.91 | 36.43 | 2,093.44 | 47.01 |
| 2 | ດິນປ່າປ້ອງກັນບໍລິເວນນ້ຳ | 120.66 | 4.62 | 84.035 | 4.56 | 204.695 | 4.6 |

| | | | | | | | |
|---|---|---|---|---|---|---|---|
| 3 | ດິນປ່າຊ້ຳ | 12.22 | 0.47 | 12.92 | 0.7 | 25.14 | 0.56 |
| 4 | ດິນປ່າຊົມໃຊ້ | 106.26 | 4.07 | 29.17 | 1.58 | 135.43 | 3.04 |
| 5 | ດິນປ່າສັກສິດ | 0 | 0 | | 0 | 0 | 0 |
| **ລວມຍ່ອຍ** | | **1,661.67** | **63.64** | 797.035 | **43.27** | 2,458.705 | **55.21** |
| **ຂ** | **ທີ່ດິນປຸກສ້າງ** | | | | | | |
| 1 | ດິນປຸກສ້າງມີແລ້ວ | 6.54 | 0.25 | 6.73 | 0.36 | 13.27 | 0.3 |
| 2 | ດິນແຂປຸກສ້າງ | 5.14 | 0.2 | 8.1 | 0.44 | 13.24 | 0.3 |
| 3 | ດິນສຸກສາລາ | 0.91 | 0.03 | 0 | 0 | 0.91 | 0.02 |
| 4 | ດິນໂຮງຮຽນ | 0.41 | 0.02 | 0.54 | 0.03 | 0.95 | 0.02 |
| **ລວມຍ່ອຍ** | | **13** | **0.5** | **15.37** | **0.83** | **28.37** | **0.64** |
| **ຄ** | **ດິນກະສິກຳ** | | | | | | |
| | ດິນໄຮ່ | **67.8** | 2.6 | **24** | 1.3 | 91.8 | 2.06 |
| | ດິນນາ | **2.3** | 0.09 | **13** | 0.71 | 15.3 | 0.34 |
| | ດິນສວນ | **29** | 1.11 | **14** | 0.76 | 43 | 0.97 |
| | ດິນແຮ່ກະສິກຳ | **712.93** | 27.3 | **898.81** | 48.8 | 185.88 | 36.2 |
| | **ລວມຍ່ອຍ** | **812.03** | 31.1 | **949.81** | 51.57 | 1,706.84 | 39.57 |
| **ງ** | **ທີ່ດິນອື່ນໆ** | 124.29 | 4.76 | 79.725 | 4.33 | 204.015 | 4.58 |
| **ລວມເນື້ອທີ່ດິນທັງໝົດ** | | 2,610.99 | **100** | 1,841.94 | **100** | 4,452.93 | 100 |

*ແຫຼ່ງຂໍ້ມູນ: ອົງການຄຸ້ມຄອງທີ່ດິນແຂວງສາລະວັນ ແລະ ນາຍບ້ານ, 2011.*

### 5.2.2 ປະເພດການນຳໃຊ້ທີ່ດິນຂອງປະຊາຊົນ ພາຍຫຼັງການສຳປະທານທີ່ດິນ ປີ 2010

ບໍລິສັດບົວລະພາ ໄດ້ຮັບອະນຸຍາດການລົງທຶນ ສະບັບເລກທີ 251/ຈຂ.ສວ ລົງວັນທີ 20/07/07, ມີເນື້ອທີ່ 55 ເຮັກຕາ, ອະນຸຍາດການສຳປະທານແມ່ນ 50 ປີ.

ການສຳປະທານຂອງບໍລິສັດບົວລະພາ ໄດ້ພົວພັນກັບອຳນາດການປົກຄອງບ້ານໃນການສຳຫຼວດຫາເນື້ອທີ່ ແລະ ລົງກວດກາເກັບກຳຂໍ້ມູນ 55 ເຮັກຕາ. ບ້ານຕຸ້ມລີທົ່ງ 20 ເຮັກຕາ ແລະ ບ້ານຕຸ້ມລີຂາວ 35 ເຮັກຕາ ການລົງທຶນແມ່ນສຸມໃສ່ພື້ນທີ່ຂະໜາດໃຫ່ຍທີ່ມີທີ່ດິນເປັນຕອນດຽວ ແຕ່ຂອບເຂດແຕ່ລະບ້ານ ຫຼັງຈາກນັ້ນກໍ່ສະເໜີໃຫ້ເມືອງ, ແຂວງຮັບຮູ້ ເພື່ອດຳເນີນການປູກໄມ້ວິກຈຳນວນ 55 ເຮັກຕາໃນສອງບ້ານ. ບໍລິສັດໄດ້ຮັບອະນຸຍາດໃຫ້ບຸກເບີກເນື້ອທີ່ດິນກະສິກຳຢູ່ໃນບໍລິເວນເຂດປ່າເລົ່າ ແຕ່ມາຮອດປະຈຸບັນໄດ້ທຳການບຸກເບີກເນື້ອທີ່ສຳເລັດທັງໝົດ 55 ເຮັກຕາ ລວມທັງສອງບ້ານ ບ້ານຕຸ້ມລີທົ່ງປູກໄດ້ 20 ເຮັກຕາ ແລະ ບ້ານຕຸ້ມລີຂາວປູກໄດ້ 35 ເຮັກຕາ.

ຕາຕະລາງທີ 6: ປະເພດການນຳໃຊ້ທີ່ດິນຫຼັງການສຳປະທານທີ່ດິນປີ 2010

| ລ/ດ | ປະເພດທີ່ດິນ | ບ້ານຕຸ້ມລີທົ່ງ | | ບ້ານຕຸ້ມລີຂາວ | | ລວມ | |
|---|---|---|---|---|---|---|---|
| | | ເນື້ອທີ່ (ຮຕ) 2010 | ເປີເຊັນ (%) | ເນື້ອທີ່ (ຮຕ) 2010 | ເປີເຊັນ (%) | ເນື້ອທີ່ (ຮຕ) 2010 | ເປີເຊັນ (%) |
| **ກ** | **ທີ່ດິນປ່າໄມ້** | | | | | | |
| 1 | ດິນປ່າສະຫງວນ | 1,422.53 | 54.48 | 670.91 | 36.43 | 2,093.44 | 47.01 |
| 2 | ດິນປ່າປ້ອງກັນບໍລິເວນນ້ຳ | 120.66 | 4.62 | 84.035 | 4.56 | 204.695 | 4.6 |
| 3 | ດິນປ່າຊ້ຳ | 12.22 | 0.47 | 12.92 | 0.7 | 25.14 | 0.56 |
| 4 | ດິນປ່າຊົມໃຊ້ | 106.26 | 4.07 | 29.17 | 1.58 | 135.43 | 3.04 |
| 5 | ດິນປ່າສັກສິດ | 0 | 0 | | 0 | 0 | 0 |
| **ລວມຍ່ອຍ** | | **1,661.67** | **63.64** | 797.035 | **43.27** | 2,458.705 | **55.21** |
| **ຂ** | **ທີ່ດິນປຸກສ້າງ** | | | | | | |
| 1 | ດິນປຸກສ້າງມີແລ້ວ | 8.84 | 0.34 | 6.73 | 0.36 | 13.27 | 0.3 |
| 2 | ດິນແຮປຸກສ້າງ | 2.84 | 0.11 | 8.1 | 0.44 | 13.24 | 0.3 |
| 3 | ດິນສຸກສາລາ | 0.91 | 0.03 | 0 | 0 | 0.91 | 0.02 |
| 4 | ດິນໂຮງຮຽນ | 0.41 | 0.02 | 0.54 | 0.03 | 0.95 | 0.02 |
| **ລວມຍ່ອຍ** | | **13** | **0.5** | **15.37** | **0.83** | **28.37** | **0.64** |
| **ຄ** | **ດິນກະສິກຳ** | | | | | | |
| **1** | ດິນໄຮ່ | **69.8** | 2.67 | **30** | 1.63 | 99.8 | 2.24 |
| **2** | ດິນນາ | **2.3** | 0.09 | **13** | 0.71 | 15.3 | 0.34 |
| **3** | ດິນສວນ | **34** | 1.3 | **17** | 0.92 | 51 | 1.15 |
| **4** | ດິນແຮ່ກະສິກຳ | **685.93** | 26.27 | **854.81** | 46.41 | 1,505.74 | 34.6 |
| **5** | **ລວມຍ່ອຍ** | **792.03** | 30.33 | **914.81** | 49.67 | 1,706.84 | 38.33 |
| **ງ** | **ທີ່ດິນອື່ນໆ** | 124.29 | 4.76 | 79.725 | 4.33 | 204.015 | 4.58 |
| **ຈ** | **ດິນສຳປະທານ** | 20 | 0.77 | 35 | 1.9 | 55 | 1.24 |
| **ລວມເນື້ອທີ່ດິນທັງໝົດ** | | 2,610.99 | **100** | 1,841.94 | **100** | 4,452.93 | 100 |

*ແຫຼ່ງຂໍ້ມູນ: ອົງການຄຸ້ມຄອງທີ່ດິນແຂວງສາລະວັນ ແລະ ນາຍບ້ານ, 2011.*




ຮູບທີ 3: ແຜນທີ່ການນຳໃຊ້ທີ່ດິນບ້ານຕຸ້ມລີທົ່ງ




ຮູບທີ 4: ແຜນທີ່ການນຳໃຊ້ທີ່ດິນບ້ານຕຸ້ມລີຂາວ




ຮູບທີ 5: ສົມທຽບການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີທົ່ງປີ 2008 ແລະ ປີ 2010




ຮູບທີ 6: ການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີທົ່ງ ປີ 2008 ແລະ ປີ 2010

ປະເພດການນຳໃຊ້ທີ່ດິນ 3 ປະເພດໃຫຍ່ຂອງບ້ານຕຸ້ມລີທົ່ງໃນ ປີ 2008 ຫາ ປີ 2010 ແມ່ນບໍ່ໄດ້ມີການປ່ຽນແປງ. ແຕ່ໃນນັ້ນ, ມີການປ່ຽນແປງສະເພາະແຕ່ທີ່ດິນປະເພດຍ່ອຍເທົ່ານັ້ນ ເຊັ່ນ: ທີ່ດິນປຸກສ້າງ ແລະ ທີ່ດິນກະສິກຳຂອງປະຊາຊົນ. ໃນນັ້ນການນຳໃຊ້ທີ່ດິນກະສິກຳຂອງປະຊາຊົນເພີ່ມຂຶ້ນເຊັ່ນ: ດິນໄຮ່ 2 ເຮັກຕາ (0.25 ເປີເຊັນ), ດິນສວນ 5 ເຮັກຕາ (0.63 ເປີເຊັນ) ແລະ ດິນສຳປະທານ 20 ເຮັກຕາ (2.53 ເປີເຊັນ) ຂອງທີ່ດິນກະສິກຳ ເຮັດໃຫ້ດິນແຮກະສິກຳຫຼຸດລົງ 27 ເຮັກຕາ (1.03 ເປີເຊັນ) ແລະ ຍັງເຫຼືອ 685.93 ເຮັກຕາ ( 26.27 ເປີເຊັນ) ຂອງເນື້ອທີ່ບ້ານ. ການນຳໃຊ້ທີ່ດິນປຸກສ້າງເພີ່ມຂຶ້ນ 2.3 ເຮັກຕາ (17.69 ເປີເຊັນ) ຂອງທີ່ດິນປຸກສ້າງຂອງບ້ານ, ດິນແຮປຸກສ້າງຫຼຸດລົງ 2.3 ເຮັກຕາ (0.09 ເປີເຊັນ) ແລະ ຍັງເຫຼືອ 2.84 ( 0.11 ເປີເຊັນ) ຂອງເນື້ອທີ່ບ້ານ.




ຮູບທີ7: ສົມທຽບການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີຂາວ ປີ 2008 ແລະ ປີ 2010




ຮູບທີ 8: ການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີຂາວ ປີ 2008 ແລະ ປີ 2010

ປະເພດການນຳໃຊ້ທີ່ດິນ 3 ປະເພດໃຫຍ່ຂອງບ້ານຕຸ້ມລີຂາວໃນ ປີ 2008 ຫາ ປີ 2010 ແມ່ນບໍ່ໄດ້ມີການປ່ຽນແປງ. ແຕ່ໃນນັ້ນ, ມີການປ່ຽນແປງສະເພາະແຕ່ທີ່ດິນປະເພດຍ່ອຍເທົ່ານັ້ນ ເຊັ່ນ: ທີ່ດິນປຸກສ້າງ ແລະ ທີ່ດິນກະສິກຳຂອງປະຊາຊົນ. ໃນນັ້ນການນຳໃຊ້ທີ່ດິນກະສິກຳຂອງປະຊາຊົນເພີ່ມຂຶ້ນເຊັ່ນ: ດິນໄຮ່ 6 ເຮັກຕາ (0.66 ເປີເຊັນ), ດິນສວນ 3 ເຮັກຕາ (0.33 ເປີເຊັນ) ແລະ ດິນສຳປະທານ 35 ເຮັກຕາ (3.83 ເປີເຊັນ) ຂອງທີ່ດິນກະສິກຳ ເຮັດໃຫ້ດິນແຮກະສິກຳຫຼຸດລົງ 44 ເຮັກຕາ(2.39 ເປີເຊັນ) ແລະ ຍັງເຫຼືອ **854.81** ເຮັກຕາ (46.41 ເປີເຊັນ) ຂອງເນື້ອທີ່ບ້ານ.

## 5.2.3 ການນຳໃຊ້ທີ່ດິນຂອງຄອບຄົວຕົວຢ່າງ

## ກ. ການນຳໃຊ້ທີ່ດິນຂອງບ້ານຕຸ່ມລີທີ່ງ

ຈາກການວິເຄາະຄອບຄົວຕົວຢ່າງພາຍໃນບ້ານຕຸ້ມລີທີ່ງ ກ່ອນການສຳປະທານ ເຊິ່ງການນຳໃຊ້ທີ່ດິນກະສິກຳໃນນັ້ນ ແມ່ນເຂົາເຈົ້າເຮັດໄຮ່ເປັນອາຊີບຕົ້ນຕໍເກືອບທຸກຄອບຄົວເຊິ່ງໃຊ້ໃນການປູກເຂົ້າ, ປູກຜັກຊະນິດຕ່າງໆ, ສຳລັບດິນນາປົກກະຕິແມ່ນເຮັດນາປີ ແຕ່ພາຍຫຼັງສຳປະທານ ການເຮັດໄຮ່ແມ່ນຄືເກົ່າ, ນາບາງພື້ນທີ່ກໍ່ປ່ອຍໃຫ້ເປັນນາເຮື້ອຍ້ອນບໍ່ມີນ້ຳພຽງພໍ່, ການເຮັດສວນແມ່ນເພີ່ມຂຶ້ນເຊັ່ນ: ການປູກໄມ້ໃຫ້ໝາກ, ໄມ້ຢາງບົງ, ກາເຟ, ມັນຕົ້ນ ແລະ ອື່ນໆອີກ.

ໃນປີ 2008, ທີ່ດິນກທີ່ຄອບຄົວຕົວຢ່າງນຳໃຊ້ທັງໝົດມີ 25.04 ເຮັກຕາ, ໃນນີ້ແມ່ນນຳໃຊ້ທີ່ດິນໄຮ່ຫຼາຍກ່ວາໝູ່ ມີ 18.45 ເຮັກຕາ (73.68 ເປີເຊັນ), ໜ້ອຍກ່ວາໝູ່ແມ່ນດິນສວນມີ 0.5 ເຮັກຕາ (2 ເປີເຊັນ) ຂອງເນື້ອທີ່ທັງໝົດ. ພາຍຫຼັງສຳປະທານມາຮອດປີ 2010 ມີເນື້ອທີ່ສວນເພີ່ມຂຶ້ນອີກ 6.06 ເຮັກຕາ ລວມເປັນ 31.1 ເຮັກຕາ ດັ່ງຕາຕະລາງລຸ່ມນີ້:

ໃນປີ 2008 ການນຳໃຊ້ທີ່ດິນ ເຊິ່ງສະເລ່ຍຕໍ່ຄອບຄົວແມ່ນ 0.88 ເຮັກຕາ/ຄອບຄົວ. ເຊິ່ງໃນນັ້ນ, ສະເລ່ຍດິນໄຮ່ມີ 0.683,3 ເຮັກຕາ/ຄອບຄົວ, ສະເລ່ຍດິນນາມີ 0.183 ເຮັກຕາ/ຄອບຄົວ ແລະ ສະເລ່ຍດິນສວນມີ 0.018,5 ເຮັກຕາ/ຄອບຄົວ. ສ່ວນດິນປຸກສ້າງແມ່ນມີເນື້ອທີ່ສະເລຍຕໍ່ຄອບຄົວມີ 0.042,6 ເຮັກຕາ/ຄອບຄົວ. ມາຮອດປີ 2010 ການນຳໃຊ້ທີ່ດິນ ເຊິ່ງສະເລ່ຍຕໍ່ຄອບຄົວແມ່ນ 1.109,2 ເຮັກຕາ/ຄອບຄົວ. ເຊິ່ງໃນນັ້ນ, ສະເລ່ຍດິນໄຮ່, ດິນນາ ແລະ ດິນປຸກສ້າງແມ່ນຄືປີຜ່ານມາຕ່າງແຕ່ດິນສວນເພີ່ມຂຶ້ນສະເລ່ຍມີ 0.243 ເຮັກຕາ/ຄອບຄົວ.

ຕາຕາລາງທີ 7: ປະເພດການນຳໃຊ້ທີ່ດິນຂອງປະຊາຊົນບ້ານຕຸ້ມລີທີ່ງປີ 2008 ແລະ ປີ 2010

| ລ/ດ | ປະເພດທີ່ດິນ | 2008 | | 2010 | | ຄວາມແຕກຕ່າງ | |
|---|---|---|---|---|---|---|---|
| | | ເນື້ອທີ່ (ເຮັກຕາ) | ປີເຊັນ (%) | ເນື້ອທີ່ (ເຮັກຕາ) | ປີເຊັນ (%) | ເນື້ອທີ່ (ເຮັກຕາ) | ປີເຊັນ (%) |
| 1 | ດິນໄຮ່ | 18.45 | 73.68 | 18.45 | 59.33 | 0 | |
| 2 | ດິນນາ | 4.94 | 19.73 | 4.94 | 15.88 | 0 | |
| 3 | ດິນສວນ | 0.5 | 2 | 6.56 | 21.09 | + 6.06 | 19.49 |
| 4 | ດິນປຸກສ້າງ | 1.15 | 4.59 | 1.15 | 3.7 | 0 | |
| ລວມ | | 25.04 | 100 | 31.1 | 100 | + 6.06 | 19.49 |

*ແຫຼ່ງຂໍ້ມູນ: ພາກສະໜາມ, 2011.*




ຮູບທີ 9: ສົມທຽບການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີທົ່ງປີ 2008 ແລະ ປີ 2010

ກ່ອນການສຳປະທານທີ່ດິນ ປີ 2008 ເນື້ອທີ່ທຳການຜະລິດເຂົ້າໄຮ່ໃນເນື້ອທີ່ທັງໝົດມີ 18.45 ເຮັກຕາ, ໄດ້ຜົນຜະລິດທັງໝົດ 37.5 ໂຕນ ເຊິ່ງປະສິດທິພາບໂດຍສະເລ່ຍແມ່ນ 2.032 ໂຕນ/ເຮັກຕາ. ພາຍຫຼັງສຳປະທານທີ່ດິນ ປີ 2010 ຜົນຜະລິດແມ່ນເທົ່າເກົ່າກັບປີຜ່ານໆມາ.

ກ່ອນການສຳປະທານທີ່ດິນ ປີ 2008 ເນື້ອທີ່ທຳການຜະລິດເຂົ້ານາໃນເນື້ອທີ່ທັງໝົດມີ 4.94 ເຮັກຕາ, ໄດ້ຜົນຜະລິດທັງໝົດ 6.54 ໂຕນ ເຊິ່ງປະສິດທິພາບໂດຍສະເລ່ຍແມ່ນ 1.32 ໂຕນ/ເຮັກຕາ. ພາຍຫຼັງສຳປະທານທີ່ດິນ ປີ 2010 ເນື່ອງຈາກວ່າການສະໜອງນ້ຳໃນການ ເຮັດນາແມ່ນບໍ່ພຽງພໍເຮັດໃຫ້ກາຍເປັນນາເຮື້ອ 2.4 ເຮັກຕາ ເຮັດໃຫ້ມີເນື້ອທີ່ນາທີ່ຍັງປູກເຂົ້າຍັງເຫຼືອພຽງ 2.54 ເຮັກຕາ, ຜົນຜະລິດແມ່ນມີ 3.48 ໂຕນ ເຊິ່ງປະສິດທິພາບໂດຍສະເລ່ຍແມ່ນ 1.37 ໂຕນ/ເຮັກຕາ ດັ່ງຕາຕະລາງລຸ່ມນີ້:

ຕາຕາລາງທີ 8: ການຜະລິດເຂົ້າຂອງປະຊາຊົນບ້ານຕຸ້ມລີທົ່ງປີ 2008 ແລະ ປີ 2010

| ລ/ດ | ປະເພດ ການຜະລິດ | ຄອບ | 2008 | | ຄອບ | 2010 | |
|---|---|---|---|---|---|---|---|
| | | | ເນື້ອທີ່ (ຮຕ) | ໂຕນ/ຮຕ | | ເນື້ອທີ່ (ຮຕ) | ໂຕນ/ຮຕ |
| 1 | ໄຮ່ | 26 | 18.45 | 2.032 | 26 | 18.45 | 2.032 |
| 2 | ນາປີ | 9 | 4.94 | 1.32 | 4 | 2.54 | 1.37 |
| 3 | ນາເຮື້ອ | 0 | 0 | 0 | 5 | 2.4 | 0 |
| ລວມ | | 35 | 23.39 | 3.352 | 35 | 23.39 | 3.402 |

*ແຫຼ່ງຂໍ້ມູນ: ພາກສະໜາມ, 2011.*

❖ ຜົນກະທົບຈາກການສຳປະທານທີ່ດິນຕໍ່ກັບການນຳໃຊ້ທີ່ດິນຂອງປະຊາຊົນບ້ານຕຸ້ມລີທົ່ງ

ແຕ່ພາຍຫຼັງທີ່ບໍລິສັດເຂົ້າມາສຳປະທານທີ່ດິນ ຜົນກະທົບທາງກົງພາຍໃນບ້ານຕຸ້ມລີທົ່ງ ເຫັນວ່າໄດ້ ກວມເອົາເນື້ອທີ່ທີ່ປະຊາຊົນແຮ່ໄວ້ ເພື່ອເຮັດໄຮ່ໝູນວຽນໃນປີຕໍ່ໆໄປເຊິ່ງຍັງບໍ່ໄດ້ມີການບຸກເບີກຍັງເປັນປ່າເຫຼົ່າອ່ອນ ແລະ ແກ່, ບ່ອນທີ່ເຄີຍເຮັດໄຮ່ມາກ່ອນ ເຊິ່ງບໍ່ໄດ້ມີຜົນຜະລິດກະສິກຳໃດໆມີ ເນື້ອທີ່ 20 ເຮັກຕາ ຍ້ອນວ່າທີ່ດິນດັ່ງກ່າວແມ່ນຖືກຊ່ວງທີ່ຍັງບໍ່ທັນໄດ້ໝູນວຽນກັບມາເທື່ອ. ສັ້ນນັ້ນ ທີ່ດິນທີ່ບໍ່ມີຜົນຜະລິດເພາະດິນໄຮ່ແມ່ນບໍລິສັດຈະບໍ່ໄດ້ເສຍຄ່າຊົດເຊີຍໃຫ້ປະຊາຊົນເຊິ່ງໄດ້ລວມເຂົ້າເປັນຄ່າເສຍຄ່າສຳປະທານທີ່ດິນຂອງບ້ານ ເນື່ອງຈາກວ່າທີ່ດິນດັ່ງກ່າວ ບໍ່ໄດ້ມີໃບຢັ້ງຢືນທີ່ດິນ ຫຼື ໃບຕາດິນ ເຊິ່ງປະຊາຊົນຍັງໃຊ້ທີ່ດິນແບບສ່ວນລວມ. ສຳລັບຄອບຄົວທີ່ເຄີຍເຮັດໄຮ່ຢູ່ໃນພື້ນທີ່ດັ່ງກ່າວ ແມ່ນຕ້ອງໄດ້ຍ້າຍໄປເຮັດຢູ່ບ່ອນອື່ນທັດຈາກບ່ອນເກົ່າ. ສຳລັບຜົນກະທົບທາງອ້ອມແມ່ນປະຊາຊົນທີ່ເຄີຍເຮັດໄຮ່, ຫາເຄື່ອງປ່າຂອງດົງ, ຫາສະໝູນໄພ, ຫາຟືນ, ເຮັດໃຫ້ນ້ຳຊຸ່ມຫາປາກໍ່ຍາກ ແລະ ໄດ້ໜ້ອຍ, ເຂດດັ່ງກ່າວແຕ່ກ່ອນມີ ການສຳປະທານຍັງມີສັດປ່າອາໃສຢູ່ປະຊາຊົນແມ່ນຍັງໄປຫາມາເປັນອາຫານ ແລະ ການລ້ຽງສັດໃນພື້ນທີ່ດັ່ງກ່າວ ແມ່ນຕ້ອງໄດ້ຍ້າຍໄປເຮັດໄຮ່ບ່ອນອື່ນໄກກ່ວາເກົ່າ ໂດຍອີງຕາມຄວາມສາມາດ, ແຮງງານຂອງປະຊາຊົນ ແລະ ຕ້ອງໃຊ້ເວລາຫຼາຍກ່ວາເກົ່າໃນການອອກໄປຫາເຄື່ອງປ່າຂອງດົງ, ຫາສະໝູນໄພ, ການໄປເອົາຟືນກໍ່ໄກອີກ, ຕ້ອງໄດ້ໄປລ້ຽງສັດໄກກ່ວາເກົ່າເຊັ່ນດຽວກັນ, ອີກຢ່າງໜຶ່ງການທີ່ ປະຊາຊົນຕ້ອງໄດ້ບຸກເບີກເນື້ອທີ່ບ່ອນໃໝ່ແມ່ນເຮັດໃຫ້ປ່າໄມ້ຫຼຸດລົງ ແລະ ເຂົ້າໄປຖາງປ່າບໍລິສຸດອີກ, ຄວາມອຸດົມສົມບູນດ້ານຊີວະນາໆພັນຖືກລົບກວນຂຶ້ນຕື່ມ ແລະ ເຮັດໃຫ້ຮອບວຽນໃນການເຮັດໄຮ່ສັ້ນລົງກວ່າກ່ຳ.

## ຂ. ການນຳໃຊ້ທີ່ດິນຂອງປະຊາຊົນບ້ານຕຸມລີຂາວ

ໃນປີ 2008, ທີ່ດິນທີ່ຄອບຄົວຕົວຢ່າງນຳໃຊ້ທັງໝົດມີ 19.39 ເຮັກຕາ, ໃນນີ້ແມ່ນມີການນຳໃຊ້ທີ່ດິນໄຮ່ຫຼາຍກ່ວາໝູ່ ມີ 14.70 ເຮັກຕາ (75.81 ເປີເຊັນ), ໜ້ອຍກ່ວາໝູ່ແມ່ນດິນສວນມີ 0.38 ເຮັກຕາ (1.96 ເປີເຊັນ) ຂອງເນື້ອທີ່ທັງໝົດ. ພາຍຫຼັງສຳປະທານມາຮອດປີ 2010 ມີເນື້ອທີ່ສວນ ເພີ່ມຂຶ້ນອີກ 3.57 ເຮັກຕາ ລວມເປັນ 22.96 ເຮັກຕາ ດັ່ງຕາຕະລາງລຸ່ມນີ້:

ໃນປີ 2008 ການນຳໃຊ້ທີ່ດິນ ເຊິ່ງສະເລ່ຍຕໍ່ຄອບຄົວແມ່ນ 0.808 ເຮັກຕາ/ຄອບຄົວ. ເຊິ່ງໃນນັ້ນ, ສະເລ່ຍດິນໄຮ່ມີ 0.612,5 ເຮັກຕາ/ຄອບຄົວ, ສະເລ່ຍດິນນາມີ 0.135 ເຮັກຕາ/ຄອບຄົວ ແລະ ສະເລ່ຍດິນສວນມີ 0.015,8 ເຮັກຕາ/ຄອບຄົວ. ສ່ວນດິນປຸກສ້າງແມ່ນມີເນື້ອທີ່ສະເລຍຕໍ່ຄອບຄົວມີ 0.044,7 ເຮັກຕາ/ຄອບຄົວ. ມາຮອດປີ 2010 ການນຳໃຊ້ທີ່ດິນ ເຊິ່ງສະເລ່ຍຕໍ່ຄອບຄົວແມ່ນ 0.956,7 ເຮັກຕາ/ຄອບຄົວ. ເຊິ່ງໃນນັ້ນ, ສະເລ່ຍດິນໄຮ່, ດິນນາ ແລະ ດິນປຸກສ້າງແມ່ນຄືປີຜ່ານມາຕ່າງແຕ່ດິນສວນເພີ່ມຂຶ້ນສະເລ່ຍມີ 0.164,6 ເຮັກຕາ/ຄອບຄົວ.

ຕາຕາລາງທີ 9: ປະເພດການນຳໃຊ້ທີ່ດິນຂອງປະຊາຊົນບ້ານຕຸ້ມລີຂາວປີ 2008 ແລະ ປີ 2010

| ລ/ດ | ປະເພດທີ່ດິນ | 2008 | | 2010 | | ຄວາມແຕກຕ່າງ | |
|---|---|---|---|---|---|---|---|
| | | ເນື້ອທີ່ (ເຮັກຕາ) | ປີເຊັນ (%) | ເນື້ອທີ່ (ເຮັກຕາ) | ເປີເຊັນ (%) | ເນື້ອທີ່ (ເຮັກຕາ) | ປີເຊັນ (%) |
| 1 | ດິນໄຮ່ | 14.70 | 75.81 | 14.70 | 64.03 | 0 | |
| 2 | ດິນນາ | 3.24 | 16.71 | 3.24 | 14.11 | 0 | |
| 3 | ດິນສວນ | 0.38 | 1.96 | 3.95 | 17.2 | + 3.57 | 15.55 |
| 4 | ດິນປຸກສ້າງ | 1.07 | 5.52 | 1.07 | 4.66 | 0 | |
| ລວມ | | 19.39 | 100 | 22.96 | 100 | + 3.57 | 15.55 |

*ແຫຼ່ງຂໍ້ມູນ: ພາກສະໜາມ, 2011.*




ຮູບທີ10: ການສົມທຽບການປ່ຽນແປງການນຳໃຊ້ທີ່ດິນບ້ານຕຸ້ມລີຂາວປີ 2008 ແລະ ປີ 2010

ກ່ອນການສຳປະທານທີ່ດິນ ປີ 2008 ເນື້ອທີ່ທຳການຜະລິດເຂົ້າໄຮ່ໃນເນື້ອທີ່ທັງໝົດມີ 14.7 ເຮັກຕາ, ໄດ້ຜົນຜະລິດທັງໝົດ 21.42 ໂຕນ ເຊິ່ງປະສິດທິພາບໂດຍສະເລ່ຍແມ່ນ 1.46 ໂຕນ/ເຮັກຕາ. ພາຍຫຼັງສຳປະທານທີ່ດິນ ປີ 2010 ຜົນຜະລິດແມ່ນເທົ່າເກົ່າກັບປີຜ່ານໆມາ.

ກ່ອນການສຳປະທານທີ່ດິນ ປີ 2008 ເນື້ອທີ່ທຳການຜະລິດເຂົ້ານາໃນເນື້ອທີ່ທັງໝົດມີ 3.24 ເຮັກຕາ, ໄດ້ຜົນຜະລິດທັງໝົດ 2.16 ໂຕນ ເຊິ່ງປະສິດທິພາບໂດຍສະເລ່ຍແມ່ນ 0.831 ໂຕນ/ເຮັກຕາ. ພາຍຫຼັງສຳປະທານທີ່ດິນ ປີ 2010 ຜົນຜະລິດເຂົ້ານາແມ່ນບໍ່ມີເລີຍຍ້ອນວ່າບໍ່ມີນ້ຳພຽງພໍ ດັ່ງຕາຕະລາງລຸ່ມນີ້:

ຕາຕາລາງທີ 10: ການຜະລິດເຂົ້າຂອງປະຊາຊົນບ້ານຕຸ້ມລີຂາວປີ 2008 ແລະ ປີ 2010

| ລ/ດ | ປະເພດ ການຜະລິດ | ຕອນ | 2008 | | ຕອນ | 2010 | |
|---|---|---|---|---|---|---|---|
| | | | ເນື້ອທີ່ (ຮຕ) | ໂຕນ/ຮຕ | | ເນື້ອທີ່ (ຮຕ) | ໂຕນ/ຮຕ |
| 1 | ໄຮ່ | 24 | 14.7 | 1.46 | 24 | 14.7 | 1.46 |
| 2 | ນາປີ | 5 | 2.6 | 0.831 | 0 | 0 | 0 |
| 3 | ນາເຊື້ອ | 3 | 0.64 | 0 | 8 | 3.24 | 0 |
| ລວມ | | 32 | 17.94 | 2.13 | 32 | 17.94 | 1.46 |

ແຫຼ່ງຂໍ້ມູນ: ພາກສະໜາມ 2011.

❖ **ກະທົບຈາກການສຳປະທານທີ່ດິນຕໍ່ກັບການນຳໃຊ້ທີ່ດິນຂອງປະຊາຊົນບ້ານຕຸ້ມລີຂາວ**

ແຕ່ພາຍຫຼັງທີ່ບໍລິສັດເຂົ້າມາສຳປະທານທີ່ດິນ ຜົນກະທົບທາງກົງພາຍໃນບ້ານຕຸ້ມລີຂາວ ເຫັນວ່າໄດ້ກວມເອົາເນື້ອທີ່ທີ່ປະຊາຊົນແຮ່ໄວ້ ເພື່ອເຮັດໄຮ່ໝູນວຽນໃນປີຕໍ່ໆໄປເຊິ່ງຍັງບໍ່ໄດ້ມີການບຸກເບີກຍັງເປັນປ່າເຫຼົ່າອ່ອນ ແລະ ແກ່ ຫຼື ບ່ອນທີ່ເຄີຍເຮັດໄຮ່ມາກ່ອນ ເຊິ່ງບໍ່ໄດ້ມີຜົນຜະລິດກະສິກຳໃດໆມີເນື້ອທີ່ 29.4 ເຮັກຕາ ໂດຍມີການເສຍຄ່າສຳປະທານໃຫ້ບ້ານ ແລະ ສຳລັບເນື້ອທີ່ດິນຂອງປະຊາຊົນ ແມ່ນກວມເອົາ 6 ຄອບຄົວ, ມີ 8 ຕອນ, ມີ 5.6 ເຮັກຕາ ແຕ່ໃນນັ້ນ ແມ່ນເສຍຄ່າຊົດເຊີຍໃຫ້ພຽງ 1 ຄອບຄົວ ເຊິ່ງມີເນື້ອທີ່ 1 ເຮັກຕາ (1 ຕອນ) ແຕ່ບໍ່ໄດ້ຊົດເຊີຍທາງດ້ານເນື້ອທີ່ແຕ່ຊົດເຊີຍຜົນຜະລິດພືດຜັກຕ່າງໆພາຍໃນດິນໄຮ່ດັ່ງກ່າວເທົ່ານັ້ນ ເຊັ່ນ: ໝາກເຂືອ, ໝາກແຕງ, ໝາກເຜັດ... ສ່ວນທີ່ເຫຼືອນັ້ນແມ່ນບໍ່ໄດ້ຮັບການຊົດເຊີຍ ຍ້ອນວ່າທີ່ດິນດັ່ງກ່າວແມ່ນຖືກຊ່ວງເກັບກ່ຽວຜົນຜະລິດເຂົ້າໄຮ່ຮຽບຮ້ອຍແລ້ວໂດຍບໍ່ມີຜົນຜະລິດ. ສັ້ນນັ້ນ, ທີ່ດິນທີ່ບໍ່ມີຜົນຜະລິດເພາະດິນໄຮ່ແມ່ນບໍລິສັດຈະບໍ່ໄດ້ເສຍຄ່າຊົດເຊີຍໃຫ້ປະຊາຊົນ ເຊິ່ງໄດ້ລວມເຂົ້າເປັນຄ່າເສຍຄ່າສຳປະທານທີ່ດິນຂອງບ້ານ ເນື່ອງຈາກວ່າທີ່ດິນດັ່ງກ່າວບໍ່ໄດ້ມີໃບຢັ້ງຢືນທີ່ດິນ ຫຼື ໃບຕາດິນ ເຊິ່ງປະຊາຊົນຍັງໃຊ້ທີ່ດິນແບບສ່ວນລວມ. ສຳລັບຄອບຄົວທີ່ເຄີຍເຮັດໄຮ່ຢູ່ໃນພື້ນທີ່ດັ່ງກ່າວ ແມ່ນຕ້ອງໄດ້ຍ້າຍໄປເຮັດຢູ່ບ່ອນອື່ນທັດຈາກບ່ອນເກົ່າ. ສ່ວນຜົນກະທົບທາງອ້ອມແມ່ນປະຊາຊົນທີ່ເຄີຍເຮັດໄຮ່, ຫາເຄື່ອງປ່າຂອງດົງ, ຫາສະໝູນໄພ, ຫາຟືນ, ເຮັດໃຫ້ນ້ຳຂຸ່ນຫາປາກໍ່ຍາກ ແລະ ໄດ້ໜ້ອຍ, ເຂດດັ່ງກ່າວແຕ່ກ່ອນມີການສຳປະທານຍັງມີສັດປ່າອາໃສຢູ່ປະຊາຊົນແມ່ນຍັງໄປຫາມາເປັນອາຫານ ແລະ ການລ້ຽງສັດໃນພື້ນທີ່ດັ່ງກ່າວ ແມ່ນຕ້ອງໄດ້ຍ້າຍໄປເຮັດໄຮ່ບ່ອນອື່ນໄກກ່ວາເກົ່າ ໂດຍອີງຕາມຄວາມສາມາດ, ແຮງງານຂອງປະຊາຊົນ ແລະ ຕ້ອງໃຊ້ເວລາຫຼາຍກ່ວາເກົ່າໃນການອອກໄປຫາເຄື່ອງປ່າຂອງດົງ, ຫາສະໝູນໄພ, ການໄປເອົາຟືນກໍ່ໄກອີກ, ຕ້ອງໄດ້ໄປລ້ຽງສັດໄກກ່ວາເກົ່າເຊັ່ນດຽວກັນ, ອີກຢ່າງໜຶ່ງການທີ່ປະຊາຊົນຕ້ອງໄດ້ບຸກເບີກເນື້ອທີ່ບ່ອນໃໝ່ແມ່ນເຮັດໃຫ້ປ່າໄມ້ຫຼຸດລົງ ແລະ ເຂົ້າໄປຖາງປ່າບໍລິສຸດອີກ, ຄວາມອຸດົມສົມບູນດ້ານຊີວະນາໆພັນຖືກລົບກວນຂຶ້ນຕື່ມ ແລະ ເຮັດໃຫ້ຮອບວຽນໃນການເຮັດໄຮ່ສັ້ນລົງກວ່າກ່ອນ.

## 5.3 ການຖືຄອງການນຳໃຊ້ທີ່ດິນ

### 5.3.1 ສະພາບການຖືຄອງທີ່ດິນ

ກ່ອນການສຳປະທານທີ່ດິນພາຍໃນບ້ານຕຸ້ມລີທິ່ງ ແລະ ບ້ານຕຸ້ມລີຂາວເປັນບ້ານທີ່ຍັງບໍ່ທັນໄດ້ມີການຈັດສັນ ແລະ ມອບດິນ-ມອບປ່າເທື່ອເຊັ່ນດຽວກັນ, ການຖືຄອງທີ່ດິນຂອງປະຊາຊົນແມ່ນແບບສ່ວນລວມຕາມປະເພນີ ອີງຕາມແຮງງານ ແລະ ຄວາມສາມາດຂອງເຂົາເຈົ້າທີ່ຈະບຸກເບີກເນື້ອທີ່ທຳການຜະລິດ ເຊັ່ນ: ການເຮັດໄຮ່ແມ່ນອາຊີບຕົ້ນຕໍຂອງເຂົາເຈົ້າ ເຊິ່ງການເຮັດໄຮ່ນີ້ແມ່ນເຮັດໄຮ່ແບບໝູນວຽນໃນພື້ນທີ່ໜຶ່ງສາມາດປູກເຂົ້າໃສ່ໄດ້ໜຶ່ງ ຫາ ສອງ ຫຼື ສາມປີຈຶ່ງຍ້າຍໄປຖາງໄຮ່ບ່ອນໃໝ່, ການເລືອກພື້ນທີ່ນັ້ນແມ່ນສາມາດເລືອກໄດ້ຕາມໃຈ ໃນຂອບເຂດບ້ານຂອງຕົນແຕ່ວ່າຄົນທີ່ມີບົດບາດກໍ່ຄືເຖົ້າແກ່ແນວໂຮມ ແລະ ນາຍບ້ານແມ່ນມີສິດເລືອກພື້ນທີ່ທີ່ມີຄວາມຮາບພຽງ ແລະ ດິນອຸດົມສົມບູນກ່ວາ ພ້ອມດຽວກັນນັ້ນ ປະຊາຊົນກໍ່ໄດ້ເຮັດສວນຢູ່ພາຍໃນໄຮ່ເຊິ່ງເປັນອາຫານລ້ຽງຊີບໃນຊີວິດປະຈຳວັນ.

ການຖືຄອງດິນນາແມ່ນຜູ້ທີ່ມາບຸກເບີກກ່ອນ ແລະ ໃຊ້ເຫື່ອແຮງຂອງຄົນ ເຊິ່ງວ່າເປັນວຽກທີ່ໜັກໜ່ວງ ເພາະວ່າເປັນເລື່ອງທີ່ລະອຽດຕ້ອງໃຊ້ແຮງງານຄົນໃນການປັບໜ້າດິນ, ເຮັດຄັນນາ ແລະຂຸດ ຫຼື ໄຖດິນ ແລະ ດິນນາກໍ່ແມ່ນການທຳການຜະລິດແບບຄົງທີ່. ສະນັ້ນ, ດິນນາສ່ວນຫຼາຍແມ່ນໄດ້ມາຈາກການສືບທອດມູນມໍລະດົກ.

ການຖືຄອງທີ່ດິນປຸກສ້າງ ແມ່ນສາມາດເລືອກປຸກໄດ້ຕາມໃຈໂດຍບໍ່ມີຂອບເຂດເຮືອນຊັດເຈນ ແຕ່ວ່າຄືກັບການຖືຄອງທີ່ດິນໄຮ່ ແລະ ນາ ເຊິ່ງຜູ້ທີ່ມີບົດບາດແມ່ນມີສິດເລືອກພື້ນທີ່ທີ່ຕົນມັກກ່ອນ. ເຊິ່ງການຕັ້ງເຮືອນແມ່ນອີງຕາມຄວາມສາມາດ ແລະ ແຮງງານຂອງປະຊາຊົນເຊັ່ນດຽວກັນ.

ພາຍຫຼັງການສຳປະທານທີ່ດິນປີ 2010 ສອງບ້ານດັ່ງກ່າວແມ່ນກໍ່ຍັງບໍ່ໄດ້ມີການມອບ-ດິນມອບປ່າເທື່ອ ແລະ ບໍ່ມີໃບຢັ້ງຢືນທີ່ດິນຊົ່ວຄາວ ຫຼື ໃບຕາດິນຖາວອນ. ສະພາບການຖືຄອງທີ່ດິນແມ່ນຍັງຄືເກົ່າກັບປີຜ່ານໆມາ ເຊິ່ງຮູບແບບການໄດ້ມາຂອງການຖືຄອງທີ່ດິນໃນບ້ານ ສ່ວນໃຫຍ່ແມ່ນໄດ້ມາຈາກການສັບສ່າວເອົາເອງ ແລະ ສ່ວນໜ້ອຍໄດ້ມາຈາກການສືບທອດມູນມໍລະດົກຈາກພໍ່ແມ່ເຊິ່ງເປັນພື້ນທີ່ທີ່ທຳການຜະລິດຄົງທີ່ ແລະ ດິນປຸກສ້າງ. ແຕ່ວ່າປະຊາຊົນກໍ່ຍັງມີການເສຍພາສີທີ່ດິນກະສິກຳແຕ່ລະປະເພດ ເພື່ອເປັນການຢັ້ງຢືນສິດໃນການຖືຄອງທີ່ດິນ ໂດຍບ້ານໄດ້ບັນທຶກ ແລະ ຮັບຮູ້ກັນພາຍໃນບ້ານ. ແຕ່ວ່າອີງຕາມແຜນການມອບດິນ-ມອບປ່າຂອງອົງການຄຸ້ມຄອງທີ່ດິນປະຈຳແຂວງສາລະວັນ ແມ່ນຈະໄດ້ລົງໄປປະຕິບັດໃຫ້ສຳເລັດພາຍໃນປີ 2012 ເຊິ່ງອາດຈະກ້າວໄປເຖິງການຂຶ້ນທະບຽນທີ່ດິນ ໂດຍໃບຢັ້ງຢືນທີ່ດິນຊົ່ວຄາວ ຫຼື ໃບຕາດິນຖາວອນ.

### 5.3.2 ການຈັດແບ່ງປະເພດການຖືຄອງທີ່ດິນ

ອີງຕາມປະເພນີຂອງການຄຸ້ມຄອງທີ່ດິນຂອງປະຊາຊົນ ແມ່ນປະຊາຊົນໄດ້ຈັດແບ່ງທີ່ດິນເພື່ອຄຸ້ມຄອງ ແລະ ນຳໃຊ້ອອກເປັນ 2 ປະເພດຄື : ຄຸ້ມຄອງນຳໃຊ້ສ່ວນລວມ ແລະ ຂອງສ່ວນບຸກຄົນ. ການຄຸ້ມຄອງ ແລະ ການນຳໃຊ້ ການໄດ້ມາຂອງທີ່ດິນສ່ວນບຸກຄົນໃນນີ້ສ່ວນໃຫຍ່ແມ່ນໄດ້ມາຈາກການສັບສ່າວເອົາເອງເຊັ່ນ: ດິນໄຮ່, ດິນປຸກສ້າງ, ດິນາ ແລະ ດິນສວນ. ສ່ວນການສືບທອດມູນມໍລະດົກຈາກພໍ່ແມ່ ແມ່ນມີໜ້ອຍເຊັ່ນ: ດິນປຸກສ້າງ, ດິນນາ ແລະ ດິນສວນ ພາຍໃນບ້ານ ລາຍລະອຽດການຄຸ້ມຄອງທີ່ດິນຂອງສ່ວນບຸກຄົນ ມີ 2 ຮູບແບບຄື :

### 5.3.3 ການຖືຄອງທີ່ດິນໃນລະດັບບ້ານ

ການຖືຄອງທີ່ດິນໃນລະດັບບ້ານໃນສອງບ້ານນີ້ແມ່ນທີ່ດິນທີ່ເປັນຂອງສ່ວນລວມ ເຊັ່ນ: ປ່າສະຫງວນ, ປ່າປ້ອງກັນດິນບໍລິເວນນ້ຳ, ປ່າຊົມໃຊ້, ປ່າຊ້າ, ດິນໂຮງຮຽນ, ດິນສຸກສາລາ, ສາຍນ້ຳ, ດິນແຮປຸກສ້າງ, ດິນແຮກະສິກຳທີ່ດິນຄົມມະນາຄົມ ແລະ ດິນອື່ນໆ ທີ່ບ້ານຈັດໃຫ້ເປັນດິນລວມ ໃນນີ້ທັງສອງບ້ານຍັງໄດ້ແບ່ງເຂດຄຸ້ມຄອງໃນແຕ່ລະຄຸ້ມບ້ານຂອງຕົນຕື່ມອີກ ເຊິ່ງວ່າ ບ້ານຕຸ້ມລີທົ່ງໃນປີ 2008 ມີເນື້ອທີ່ທັງໝົດ 2,505.35 ເຮັກຕາ ແລະ ປີ 2010 ມີ 2,476.05 ເຮັກຕາ ແລະທີ່ດິນປູກໄມ້ວິກຂອງບໍລິສັດມີ 20 ເຮັກຕາ. ສ່ວນ ບ້ານຕຸ້ມລີຂາວໃນປີ 2008 ມີເນື້ອທີ່ທັງໝົດ 1,784.21 ເຮັກຕາ ແລະ ປີ 2010 ມີ 1,740.21 ເຮັກຕາ ແລະ ທີ່ດິນປູກໄມ້ວິກຂອງບໍລິສັດມີ 35 ເຮັກຕາ. ໃນນີ້ທຸກຄົນມີສິດນຳໃຊ້ ແລະ ຄຸ້ມຄອງພາຍໃຕ້ຄວາມເປັນເອກະພາບໃນການຕົກລົງເຫັນດີກັນຂອງປະຊາຊົນພາຍໃນບ້ານໂດຍການຊີ້ນຳຈາກນາຍບ້ານ ແລະ ເຫັນດີຈາກເຈົ້າເມືອງ.

### 5.3.4 ການຖືຄອງທີ່ດິນໃນລະດັບຄອບຄົວ ຫຼື ບຸກຄົນ

ໃນການຖືຄອງທີ່ດິນໃນລະດັບຄອບຄົວ ຫຼື ບຸກຄົນ ພາຍໃນສອງບ້ານດັ່ງກ່າວນີ້ແມ່ນເນື່ອງຈາກວ່າບໍ່ໄດ້ມີການມອບດິນ-ມອບປ່າເທື່ອ ແລະ ກຳມະສິດກ່ຽວກັບທີ່ດິນສ່ວນຕົວກໍ່ບໍ່ມີໃບຢັ້ງຢືນ ແລະ ໃບຕາດິນທີ່ເປັນເອກະສານອ້າງອີງສິດໃນການຖືຄອງທີ່ດິນ ແຕ່ພາຍໃນບ້ານບໍ່ຮັບປະກັບກຳມະສິດໃນການຖືຄອງທີ່ດິນຂອງຄອບຄົວ ຫຼື ບຸກຄົນ ໂດຍບ້ານໄດ້ຈົດບັນທຶກກ່ຽວກັບການຖືຄອງທີ່ດິນ ແລະ ການນຳໃຊ້ທີ່ດິນ ໂດຍຜູ້ທີ່ນຳໃຊ້ທີ່ດິນຕ້ອງໄດ້ເສຍພາສີທີ່ດິນແຕ່ລະປະເພດໃຫ້ລັດເປັນປົກກະຕິໃນແຕ່ລະປີ ເຊິ່ງທີ່ດິນທີ່ປະຊາຊົນນຳໃຊ້ມີພຽງດິນກະສິກຳ ແລະ ທີ່ດິນປຸກສ້າງ ເຊັ່ນ: ດິນໄຮ່, ດິນນາ, ດິນສວນ ແລະ ດິນປຸກສ້າງມີແລ້ວ ເຊິ່ງບ້ານຕຸ້ມລີທົ່ງມີທີ່ດິນຜະລິດກະສິກຳ ແລະທີ່ດິນປຸກສ້າງທັງໝົດໃນປີ 2008 ມີ 105.64 ເຮັກຕາ ແລະ ປີ 2010 ແມ່ນເພີ່ມຂຶ້ນມີ 114.94 ເຮັກຕາ, ສ່ວນບ້ານຕຸ້ມລີຂາວມີທີ່ດິນຜະລິດກະສິກຳ ແລະ ທີ່ດິນປຸກສ້າງທັງໝົດໃນປີ 2008 ມີ 57.73 ເຮັກຕາ ແລະ ປີ 2010 ແມ່ນເພີ່ມຂຶ້ນມີ 66.73 ເຮັກຕາ.

### 5.3.5 ການຖືຄອງທີ່ດິນສຳລັບຄອບຄົວທີ່ໄດ້ສຳພາດ 30 ເປີເຊັນ

ອີງຕາມການສຳພາດຄອບຄົວຕົວຢ່າງຈາກພາກສະໜາມ ສາມາດຮູ້ໄດ້ວ່າ: ບ້ານຕຸ້ມລີທີ່ງ ແລະ ບ້ານຕຸ້ມລີຂາວ ຮູບແບບການຖືຄອງທີ່ດິນເຂົາເຈົ້າເຊິ່ງໄດ້ມາຈາກການສັບສ່າວເປັນສ່ວນໃຫຍ່ ແລະ ການສືບທອດຈາກມູນມໍລະດົກທີ່ພໍ່ແມ່ໃຫ້.

### ກ. ການສືບມູນມໍລະດົກຈາກພໍ່ແມ່

ຈາກການສຳພາດກຸ່ມປະຊາຊົນກອນຕົວຢ່າງບ້ານຕຸ້ມລີທີ່ງຈຳນວນ 27 ຄອບຄົວ ແລະ ບ້ານຕຸ້ມລີຂາວ ຈຳນວນ 24 ຄອບຄົວ ສາມາດວິເຄາະໄດ້ດັ່ງນີ້:

ປະເພນີການສືບທອດຂອງປະຊາຊົນບ້ານຕຸ້ມລີທີ່ງ ມູນມໍລະດົກສ່ວນຫຼາຍຈະແບ່ງໃຫ້ລູກຜູ້ທີ່ຢູ່ນຳພໍ່ແມ່ເບິ່ງແຍງລ້ຽງດູພໍ່ແມ່ເວລາພໍ່ແມ່ເຈັບເປັນ ສ່ວນລູກຄົນອື່ນໆທີ່ແຕ່ງງານສ້າງຄອບຄົວ ຫຼື ແຍກອອກຈາກພໍ່ແມ່ໄປຢູ່ຕ່າງຫາກ ກໍ່ຈະມີສິດສືບມໍລະດົກພຽງສ່ວນເລັກນ້ອຍທີ່ພໍ່ແມ່ແບ່ງປັນໃຫ້ເທົ່ານັ້ນ ຈະບໍ່ມີສິດໄປຫຍຸ້ງກ່ຽວກັບມູນທີ່ພໍ່ແມ່ແບ່ງໃຫ້ລູກຜູ້ທີ່ຢູ່ນຳພໍ່ແມ່ເດັດຂາດ ດິນທີ່ສືບມູນສ່ວນຫຼາຍແມ່ນດິນນາ, ດິນປຸກສ້າງ ແລະ ດິນສວນ.

ຕາຕະລາງທີ 11: ຮູບແບບການຖືຄອງທີ່ດິນຂອງປະຊາຊົນໃນການໄດ້ມາຈາກການສືບມູນ

| ລ/ດ | ຮູບແບບການຖືຄອງທີ່ດິນ | ບ້ານຕຸ້ມລີທີ່ງ | | | ບ້ານຕຸ້ມລີຂາວ | | | ລວມ | |
|---|---|---|---|---|---|---|---|---|---|
| | | ຈຳນວນຄອບຄົວ | | ເປີເຊັນ (%) | ຈຳນວນຄອບຄົວ | | ເປີເຊັນ (%) | ຈຳນວນຄອບຄົວ | ເປີເຊັນ (%) |
| **ການສືບມູນ** | | | | | | | | | |
| 1 | ດິນນາ | 1 | | 3.73 | 2 | | 8.3 | 3 | 5.88 |
| 2 | ດິນປຸກສ້າງ | 4 | | 14.8 | 4 | | 16.7 | 8 | 15.69 |
| 3 | ດິນສວນ | 0 | | 0 | 2 | | 8.3 | 2 | 3.92 |
| **ການສືບມູນ** | | ຈ/ນ ຕອນ | ເນື້ອທີ່ (ha) | ເປີເຊັນ (%) | ຈ/ນ ຕອນ | ເນື້ອທີ່ (ha) | ເປີເຊັນ (%) | ເນື້ອທີ່ (ha) | ເປີເຊັນ (%) |
| 1 | ດິນນາ | 1 | 0.5 | 76.92 | 2 | 1.30 | 68.42 | 1.8 | 70.59 |
| 2 | ດິນປຸກສ້າງ | 4 | 0.15 | 23.08 | 4 | 0.26 | 13.68 | 0.41 | 16.08 |
| 3 | ດິນສວນ | 0 | 0 | 0 | 2 | 0.34 | 17.9 | 0.34 | 13.33 |
| **ລວມຍ່ອຍ** | | 5 | 0.65 | **100** | 8 | 1.9 | **100** | 2.55 | 100 |

*ແຫຼ່ງຂໍ້ມູນ : ພາກສະໜາມ, 2011.*

ບ້ານຕຸ້ມລີທົ່ງຄອບຄົວຕົວຢ່າງທັງໝົດມີ 27 ຄອບຄົວ, ມີເນື້ອທີ່ສືບມູນ 0.65 ເຮັກຕາ (100 ເປີເຊັນ) ເຊັ່ນ: ດິນນາມີ 1 ຄອບຄົວ ( 3.73 ເປີເຊັນ), ມີ 1 ຕອນ, ມີ 0.5 ເຮັກຕາ ( 76.92 ເປີເຊັນ) ແລະ ດິນປຸກສ້າງມີ 4 ຄອບຄົວ ( 14.8 ເປີເຊັນ), ມີ 4 ຕອນ, ມີ 0.15 ເຮັກຕາ ( 23.08 ເປີເຊັນ).

ສ່ວນບ້ານຕຸ້ມລີຂາວມີຄອບຄົວຕົວຢ່າງທັງໝົດມີ 24 ຄອບຄົວ, ມີເນື້ອທີ່ສືບມູນ 1.9 ເຮັກຕາ (100 ເປີເຊັນ) ເຊັ່ນ: ດິນນາມີ 2 ຄອບຄົວ ( 8.3 ເປີເຊັນ), ມີ 2 ຕອນ, ມີ 1.30 ເຮັກຕາ ( 68.42 ເປີເຊັນ); ດິນປຸກສ້າງມີ 4 ຄອບຄົວ ( 16.7 ເປີເຊັນ), ມີ 4 ຕອນ, ມີ 0.26 ເຮັກຕາ ( 13.68 ເປີເຊັນ) ແລະ ດິນສວນມີ 2 ຄອບຄົວ ( 8.3 ເປີເຊັນ), ມີ 2 ຕອນ, ມີ 0.34 ເຮັກຕາ ( 17.9 ເປີເຊັນ).




ຮູບທີ 11: ຮູບແບບການຖືຄອງແບບສືບມູນມໍລະດົກບ້ານຕຸ້ມລີທົ່ງ ປີ 201




ຮູບທີ 12: ຮູບແບບການຖືຄອງແບບສືບມູນມໍລະດົກບ້ານຕຸ້ມລີຂາວ ປີ 2010

## ຂ. ການສັບສ່າວເອົາເອງ

ພາຍໃນສອງບ້ານດັ່ງກ່າວ ເຊິ່ງທີ່ດິນທີ່ໄດ້ມາຈາກການສັບສ່າວເອົາເອງ ໂດຍການບຸກເບີກເນື້ອທີ່ດິນປ່າເລົ່າ ສ່ວນໜຶ່ງທີ່ຕົນເອງໄດ້ຈັບຈອງໄວ້ ເພື່ອທຳການຜະລິດຈະເປັນຜູ້ມີສິດໃນການຄຸ້ມຄອງທີ່ດິນຕອນດັ່ງກ່າວນັ້ນ ແລະ ກໍ່ມີການເສຍພາສີໃນແຕ່ລະປີ ຄືກັບການຖືຄອງແບບອື່ນເຊັ່ນດຽວກັນ ແລະ ມີສິດໃນການແບ່ງປັນທີ່ດິນໃຫ້ແກ່ຄົນອື່ນໄດ້ໂດຍການຮັບຮູ້ກັນພາຍໃນບ້ານ.

ຕາຕະລາງທີ 12 : ຮູບແບບການຖືຄອງທີ່ດິນຂອງປະຊາຊົນໃນການໄດ້ມາຈາກການສັບສ່າວ

<table>
<tr><td rowspan="2">ລ/ດ</td><td rowspan="2">ຮູບແບບ ການຖືຄອງທີ່ດິນ</td><td colspan="3">ບ້ານຕຸ້ມລີທີ່ງ</td><td colspan="3">ບ້ານຕຸ້ມລີຂາວ</td><td colspan="2">ລວມ</td></tr>
<tr><td colspan="2">ຈຳນວນ ຄອບຄົວ</td><td>ເປີເຊັນ (%)</td><td colspan="2">ຈຳນວນ ຄອບຄົວ</td><td>ເປີເຊັນ (%)</td><td>ຈຳນວນ ຄອບຄົວ</td><td>ເປີເຊັນ (%)</td></tr>
<tr><td colspan="2">ການສັບສ່າວ</td><td colspan="2"></td><td></td><td colspan="2"></td><td></td><td></td><td></td></tr>
<tr><td>1</td><td>ດິນໄຮ່</td><td colspan="2">26</td><td>96.3</td><td colspan="2">24</td><td>100</td><td>50</td><td>98.04</td></tr>
<tr><td>2</td><td>ດິນນາ</td><td colspan="2">8</td><td>29.6</td><td colspan="2">6</td><td>25</td><td>14</td><td>27.45</td></tr>
<tr><td>3</td><td>ດິນສວນ</td><td colspan="2">14</td><td>51.9</td><td colspan="2">14</td><td>58.3</td><td>28</td><td>54.9</td></tr>
<tr><td>4</td><td>ດິນປຸກສ້າງ</td><td colspan="2">23</td><td>58.2</td><td colspan="2">20</td><td>83.3</td><td>43</td><td>84.31</td></tr>
<tr><td colspan="2">ການສັບສ່າວ</td><td>ຈ/ນ ຕອນ</td><td>ເນື້ອທີ່ (ha)</td><td>ເປີເຊັນ (%)</td><td>ຈ/ນ ຕອນ</td><td>ເນື້ອທີ່ (ha)</td><td>ເປີເຊັນ (%)</td><td>ເນື້ອທີ່ (ha)</td><td>ເປີເຊັນ (%)</td></tr>
<tr><td>1</td><td>ດິນໄຮ່</td><td>26</td><td>18.45</td><td>60.59</td><td>24</td><td>14.70</td><td>69.8</td><td>33.15</td><td>64.36</td></tr>
<tr><td>2</td><td>ດິນນາ</td><td>8</td><td>4.44</td><td>14.58</td><td>6</td><td>1.94</td><td>9.21</td><td>6.38</td><td>12.39</td></tr>
<tr><td>3</td><td>ດິນສວນ</td><td>14</td><td>6.56</td><td>21.54</td><td>14</td><td>3.61</td><td>17.14</td><td>10.17</td><td>19.74</td></tr>
<tr><td>4</td><td>ດິນປຸກສ້າງ</td><td>23</td><td>1</td><td>3.29</td><td>20</td><td>0.81</td><td>3.85</td><td>1.81</td><td>3.51</td></tr>
<tr><td colspan="2">ລວມຍ່ອຍ</td><td>71</td><td>30.45</td><td>100</td><td>64</td><td>21.06</td><td>100</td><td>51.51</td><td>100</td></tr>
</table>

*ແຫຼ່ງຂໍ້ມູນ : ພາກສະໜາມ, 2011.*

ບ້ານຕຸ້ມລີທີ່ງຄອບຄົວຕົວຢ່າງທັງໝົດມີ 27 ຄອບຄົວ, ມີເນື້ອທີ່ການສັບສ່າວ 30.45 ເຮັກຕາ (100 ເປີເຊັນ) ເຊັ່ນ: ດິນໄຮ່ມີ 26 ຄອບຄົວ (96.3 ເປີເຊັນ), ມີ 26 ຕອນ, ມີ 18.45 ເຮັກຕາ (60.59 ເປີເຊັນ) ແລະ ດິນນາມີ 8 ຄອບຄົວ (29.6 ເປີເຊັນ), ມີ 8 ຕອນ, ມີ 4.44 ເຮັກຕາ (14.58ເປີເຊັນ), ດິນສວນມີ 14 ຄອບຄົວ (51.9 ເປີເຊັນ), ມີ 14 ຕອນ, ມີ 6.56 ເຮັກຕາ (21.54 ເປີເຊັນ) ແລະ ດິນປຸກສ້າງມີ 23 ຄອບຄົວ (58.2 ເປີເຊັນ), ມີ 23 ຕອນ, ມີ 1 ເຮັກຕາ (3.29 ເປີເຊັນ).

ສ່ວນບ້ານຕຸ້ມລີຂາວມີຄອບຄົວຕົວຢ່າງທັງໝົດມີ 24 ຄອບຄົວ, ມີເນື້ອທີ່ການສັບສ່ວາ 21.06 ເຮັກຕາ (100 ເປີເຊັນ) ເຊັ່ນ: ດິນໄຮ່ມີ 24 ຄອບຄົວ (100 ເປີເຊັນ), ມີ 24 ຕອນ, ມີ 14.70 ເຮັກຕາ (69.8 ເປີເຊັນ) ດິນນາມີ 6 ຄອບຄົວ (25 ເປີເຊັນ), ມີ 6 ຕອນ, ມີ 1.94 ເຮັກຕາ (9.21 ເປີເຊັນ); ດິນສວນມີ 14 ຄອບຄົວ (58.3 ເປີເຊັນ), ມີ 14 ຕອນ, ມີ 3.61 ເຮັກຕາ (17.14 ເປີເຊັນ) ແລະ ດິນປູກສ້າງມີ 20 ຄອບຄົວ (83.3 ເປີເຊັນ), ມີ 20 ຕອນ, ມີ 0.81 ເຮັກຕາ (3.85 ເປີເຊັນ).




ຮູບທີ 13: ຮູບແບບການຖືຄອງແບບສັບສ່ວາບ້ານຕຸ້ມລີທົ່ງ ປີ 2010




ຮູບທີ 14: ຮູບແບບການຖືຄອງແບບສັບສ່ວາບ້ານຕຸ້ມລີຂາວ ປີ 2010

## 5.4. ການເສຍພາສີທີ່ດິນຂອງປະຊາຊົນ

ການເສຍພາສີທີ່ດິນຂອງປະຊາຊົນດັ່ງກ່າວ ຕາມການສຳພາດຄອບຄົວຕົວຢ່າງທີ່ໄດ້ເສຍຕາມເນື້ອທີ່ດິນຂອງຕົນເອງ ແລະ ເສຍຕາມດິນແຕ່ລະປະເພດຂອງການນຳໃຊ້ ແລະ ເຂດທີ່ຕັ້ງຂອງທີ່ດິນ ເຊັ່ນ: ໄຮ່, ນາ ແລະ ສວນ ເພື່ອສະແດງເຖິງສິດໃນການເປັນເຈົ້າຂອງທີ່ດິນຄວາມໝັ້ນຄົງທາງດ້ານສິດຕໍ່ກັບເນື້ອທີ່ດິນ ເຊິ່ງເປັນປັດໃຈສຳຄັນສຳລັບທຸກຄົນໃນເຂດຊົນນະບົດ. ເນື່ອງຈາກວ່າບ້ານດັ່ງກ່າວແມ່ນຍັງບໍ່ທັນໄດ້ມີການມອບດິນ-ມອບປ່າ ເຮັດໃຫ້ການຖືຄອງທີ່ດິນແມ່ນຕາມປະເພນີ, ການເກັບພາສີກໍ່ແມ່ນເກັບພຽງແຕ່ເນື້ອທີ່ດິນກະສິກຳສຳລັບໄຮ່, ນາ, ສວນ.




ຮູບທີ 15: ການເສຍພາສີທີ່ດິນກະສິກຳຂອງຄອບຄົວຕົວຢ່າງບ້ານຕຸ້ມລີທົ່ງ ປີ 2010

ພາຍໃນບ້ານຕຸ້ມລີທົ່ງຄອບຄົວທີ່ເຮັດໄຮ່ທັງໝົດມີ 26 ຄອບຄົວ (96.3 ເປີເຊັນ) ເຊິ່ງເສຍພາສີທັງໝົດ, ໃນນັ້ນ ມີ 1 ຄອບຄົວທີ່ບໍ່ໄດ້ເຮັດໄຮ່ (3.7 ເປີເຊັນ) ຍ້ອນວ່າເປັນຄອບຄົວໜຶ່ງທີ່ທຸກຈົນ, ເປັນແມ່ໝ້າຍ ແລະ ມີລູກຍັງນ້ອຍບໍ່ມີແຮງງານທຳການຜະລິດ. ຄອບຄົວທີ່ເຮັດນາມີ 9 ຄອບຄົວ (33.3 ເປີເຊັນ), ເຊິ່ງໃນນັ້ນ ເສຍພາສີພຽງ 4 ຄອບຄົວ (14.8 ເປີເຊັນ), ສ່ວນ 5 ຄອບຄົວ (18.5 ເປີເຊັນ) ບໍ່ໄດ້ເສຍພາສີຍ້ອນວ່ານາຂອງເຂົາເຈົ້າບໍ່ມີນ້ຳສະໜອງພຽງພໍຈຶ່ງເຮັດໃຫ້ມີການປ່ອຍໃຫ້ກາຍເປັນນາເຮື້ອເຊິ່ງບໍ່ໄດ້ເຮັດມາເປັນເວລາ 3 ປີ ຜ່ານມາແລ້ວ ເຮັດໃຫ້ບໍ່ໄດ້ຮັບຜົນຜະລິດ. ສ່ວນຄອບຄົວທີ່ເຮັດສວນມີ 15 ຄອບຄົວ (51.85 ເປີເຊັນ), ເຊິ່ງໃນນັ້ນ ເສຍພາສີມີ 6 ຄອບຄົວ (22.22 ເປີເຊັນ) ຍ້ອນວ່າໄດ້ມີການບຸກເບີກມາດົນ ແລະ ໄດ້ມາຈາກການສືບມູນໂດຍໄດ້ຮັບຜົນຜະລິດຕະ

ຫຼອດປີເຊັ່ນ: ໝາກມ່ວງ, ໝາກຂາມ, ໝາກມີ້, ໄມ້ຢາງບົງ ແລະ ອື່ນໆ. ສ່ວນຄອບຄົວທີ່ບໍ່ໄດ້ເສຍພາສີມີ 8 ຄອບຄົວ ຍ້ອນວ່າເປັນເນື້ອທີ່ຫາກໍບຸກເບີກໃໝ່ບໍ່ທັນມີຜົນຜະລິດ.




ຮູບທີ 16: ການເສຍພາສີທີ່ດິນກະສິກຳຂອງຄອບຄົວຕົວຢ່າງບ້ານຕຸ້ມລີຂາວ ປີ 2010

ພາຍໃນບ້ານຕຸ້ມລີຂາວຄອບຄົວທີ່ເຮັດໄຮ່ທັງໝົດມີ 24 ຄອບຄົວ ແມ່ນເສຍພາສີໝົດ. ຄອບຄົວທີ່ມີດິນນາແຕ່ບໍ່ໄດ້ເສຍພາສີດິນນາມີ 8 ຄອບຄົວ (33.3 ເປີເຊັນ) ແຕ່ບໍ່ໄດ້ເສຍພາສີຈັກຄອບຄົວ ແລະ ຄອບຄົວທີ່ມີດິນສວນມີ 15 ຄອບຄົວ (62.5 ເປີເຊັນ) ແມ່ນບໍ່ໄດ້ເສຍພາສີຈັກຄອບຄົວ, ສຳລັບເຫດຜົນການເສຍຫຼື ບໍ່ເສຍພາສີແມ່ນຄ້າຍຄືກັນກັບບ້ານຕຸ້ມລີທົ່ງ.

## 5.5 ປະເມີນທັດສະນະຂອງປະຊາຊົນຕໍ່ກັບການສຳປະທານທີ່ດິນ

ຕາມການວິເຄາະ ແລະ ປະເມີນຕົວຈິງ ຈາກກຸ່ມປະຊາກອນຕົວຢ່າງຂອງສອງບ້ານເຫັນວ່າທັດສະນະຂອງປະຊາຊົນທີ່ມີຕໍ່ບໍລິສັດທີ່ເຂົ້າມາສຳປະທານທີ່ດິນເພື່ອປູກໄມ້ວິກ ແມ່ນສາມາດແບ່ງອອກເປັນ 2 ຢ່າງຄື :

- ທັດສະນະຂອງປະຊາຊົນທີ່ມີຕໍ່ບໍລິສັດບົວລະພາທີ່ມາສຳປະທານທີ່ດິນປູກໄມ້ວິກ.
- ທັດສະນະຕໍ່ກັບຊີວິດການເປັນຢູ່ຂອງເຂົາເຈົ້າເມື່ອມີການສຳປະທານທີ່ດິນ.

### 5.5.1 ທັດສະນະຂອງປະຊາຊົນທີ່ມີຕໍ່ບໍລິສັດ ທີ່ມາສຳປະທານທີ່ດິນເພື່ອປູກໄມ້ວິກ

ໂດຍການວິເຄາະຄວາມພໍໃຈ ແລະ ຄວາມຄິດເຫັນຂອງປະຊາກອນກຸ່ມຕົວຢ່າງ ບ້ານຕຸ້ມລີທົ່ງ ແລະ ຕຸ້ມລີຂາວ ແມ່ນສາມາດເວົ້າໄດ້ວ່າ :

- ທັດສະນະຂອງປະຊາຊົນ ທີ່ມີຕໍ່ບໍລິສັດບົວລະພາ ແມ່ນປະຊາຊົນບໍ່ຄ່ອຍພໍໃຈກັບການເຂົ້າມາສຳປະທານທີ່ດິນເພື່ອປູກໄມ້ວິກ ຂອງບໍລິສັດບົວລະພາ ເຊິ່ງມັນສະແດງອອກໃນການສູນເສຍພື້ນທຳການຜະລິດຂອງເຂົາເຈົ້າ ແຕ່ກ່ອນທີ່ບໍລິສັດດັ່ງກ່າວ ຍັງບໍ່ທັນໄດ້ເຂົ້າມາພື້ນທີ່ທຳການຜະລິດຂອງເຂົາເຈົ້າແມ່ນພຽງພໍກັບຄວາມຕ້ອງການ ແລະ ພື້ນທີ່ທຳການຜະລິດກໍ່ໃກ້ກັບບ້ານເຮັດໃຫ້ເຂົາເຈົ້າສະດວກສະບາຍໃນການເບິ່ງແຍງ ແລະ ຮັກສາພື້ນທີ່ທຳການຜະລິດກະສິກຳ (ປູກພືດ ແລະ ລ້ຽງສັດ) ແຕ່ເມື່ອບໍລິສັດເຂົ້າມາສຳປະທານທີ່ດິນເພື່ອປູກໄມ້ວິກ ເຮັດໃຫ້ປະຊາຊົນສູນເສຍເນື້ອທີ່ທຳການຜະລິດກະສິກຳໄປເປັນບໍລິເວນກ້ວາງ ເນື່ອງຈາກວ່າເຂົາເຈົ້າໄດ້ບຸກເບີກເນື້ອທີ່ດິນບໍລິເວນກ້ວາງໂດຍການດຸດ, ໄຖ ເຮັດໃຫ້ພື້ນທີ່ດັ່ງກ່າວເປັນພື້ນທີ່ປອກໂຫຼ້ນ.

- ບາງຄອບຄົວທີ່ພໍໃຈກັບການເຂົ້າມາສຳປະທານທີ່ດິນຂອງບໍລິສັດ ເພາະເຂົາເຈົ້າໄດ້ຮັບປະໂຫຍດ ຈາກການບໍລິສັດຄື: ເຂົາເຈົ້າໄດ້ເຂົ້າໄປຮັບຈ້າງໃນເຂດສຳປະທານ (ການຖາງ, ຮື້, ຈູດ, ເຮັດຮົ້ວ ແລະ ຍາມ), ລູກຫຼານຂອງເຂົາເຈົ້າໄດ້ຮັບທຶນການສຶກສາຈາກບໍລິສັດຕັ້ງແຕ່ຮຽນຊັ້ນ ມໍ 1 ເຖິງ ມໍ 4 ທາງບໍລິສັດຍັງໃຫ້ເງິນເດືອນແກ່ນັກຮຽນທີ່ໄດ້ທຶນເດືອນລະ 250.000 ກີບ ແຕ່ທາງບໍລິສັດຈະຈ່າຍເປັນງວດຄືປີໜຶ່ງ 3 ງວດ (ໃຫ້ທຶນບ້ານລະ 2 ຄົນ) ແລະ ເຂົາເຈົ້າໄດ້ຮັບອະນຸຍາດໃຫ້ເຮັດໄຮ່ໃນຫວ່າງແຖວປູກໄມ້ວິກຂອງບໍລິສັດ (ພັນເຂົ້າແມ່ນທາງບໍລິສັດເອົາໃຫ້ລ້າໆ) ແລະ ທາງບໍລິສັດໄດ້ຈ່າຍເງິນສຳປະທານທີ່ດິນໃຫ້ບ້ານ ແລ້ວທາງບ້ານໄດ້ນຳເງິນໄປຊື້ໂຕະຊື້ຕັ່ງໃຫ້ກັບໂຮງຮຽນ.

- ມີຄອບຄົວຈຳນວນໜຶ່ງທີ່ໃຫ້ທັດສະນະວ່າພໍໃຈປານກາງ (ພໍໃຈແດ່ບໍ່ພໍໃຈແດ່) ເຂົາເຈົ້າໄດ້ໃຫ້ທັດສະນະວ່າ: ຊ່ວງໄລຍະທຳອິດທີ່ບໍລິສັດເຂົ້າມາສຳປະທານທີ່ດິນ ໄດ້ໃຫ້ຂໍ້ສະເໜີກັບບ້ານ ແລະ ປະຊາຊົນວ່າ: ຈະສ້າງໂຮງຮຽນ ແລະ ຖະໜົນຫົນທາງໃຫ້, ໃຫ້ປະຊາຊົນໄດ້ເຮັດວຽກນຳບໍລິສັດ ແຕ່ມາໃນປະຈຸບັນເຂົາເຈົ້າບໍ່ໄດ້ເຮັດວຽກນຳບໍລິສັດແລ້ວ, ໂຮງຮຽນກໍ່ບໍ່ສ້າງໃຫ້, ຖະໜົນຫົນທາງກໍ່ບໍ່ໄດ້ເຮັດຕາມທີ່ສະເໜີໝົດ, ໄລຍະເວລາໃນການສຳປະທານດິນເກີນໄປ ແລະ ໃນອານາຄົດເຂົາເຈົ້າຢ້ານລູກຫຼານບໍ່ມີພື້ນທີ່ທຳການຜະລິດເພື່ອລ້ຽງຊີບ, ດັ່ງນັ້ນປະຊາຊົນຈຶ່ງພໍໃຈໃນຊ່ວງທຳອິດ ແຕ່ມາໃນປະຈຸບັນປະຊາຊົນບໍ່ພໍໃຈ ຍ້ອນທາງບໍລິສັດບໍ່ເຮັດຕາມຂໍ້ສະເໜີທີ່ເຄີຍໃຫ້ໄວ້ກັບບ້ານ ແລະ ປະຊາຊົນໃນ ຊ່ວງທຳອິດທີ່ເຂົ້າມາສຳປະທານທີ່ດິນ.

ຕາຕາລາງທີ 13: ທັດສະນະຂອງປະຊາຊົນຕໍ່ບໍລິສັດທີ່ມາສໍາປະທານເພື່ອປູກໄມ້ວິກ

| ລ/ດ | ທັດສະນະຂອງປະຊາຊົນຕໍ່ກັບບໍລິສັດ | ບ້ານຕຸ້ມລີທົ່ງ | | ບ້ານຕຸ້ມລີຂາວ | | ລວມ | |
|---|---|---|---|---|---|---|---|
| | | ຈໍານວນຄອບຄົວ | ເປີເຊັນ (%) | ຈໍານວນຄອບຄົວ | ເປີເຊັນ (%) | ຈໍານວນຄອບຄົວ | ເປີເຊັນ (%) |
| 1 | ພໍໃຈ | 1 | 3.7 | 6 | 25 | 7 | 13.7 |
| 2 | ບໍ່ພໍໃຈ | 26 | 96.3 | 10 | 41.7 | 36 | 70.6 |
| 3 | ພໍໃຈປານກາງ | 0 | 0 | 8 | 33.3 | 8 | 15.7 |
| ລວມ | | 27 | 100 | 24 | 100 | 51 | 100 |

*ແຫຼ່ງຂໍ້ມູນ: ພາກສະໜາມ, 2011.*

ຈາກຕາຕະລາງຂ້າງສະແດງໃຫ້ເຫັນວ່າ: ຈໍານວນປະຊາກອນຕົວຢ່າງບ້ານຕຸ້ມລີທົ່ງຈໍານວນ 27 ຄອບຄົວ ໃນນີ້ຈໍານວນ 26 ຄອບຄົວ (96.3 ເປີເຊັນ) ບໍ່ພໍໃຈຕໍ່ການເຂົ້າມາສໍາປະທານທີ່ດິນເພື່ອປູກໄມ້ວິກຂອງບໍລິສັດບົວລະພາ, ພໍໃຈມີພຽງແຕ່ 1 ຄອບຄົວ (3.7ເປີເຊັນ) ເທົ່ານັ້ນ.

ປະຊາກອນຕົວຢ່າງບ້ານຕຸ້ມລີຂາວຈໍານວນ 24 ຄອບຄົວ ທີ່ສະແດງໄວ້ໃນຕາຕະລາງທັດສະນະຂອງປະຊາຊົນຕໍ່ບໍລິສັດຂ້າງເທິງ ເຮົາສາມາດເວົ້າໄດ້ວ່າ: ຈໍານວນຄອບຄົວທີ່ພໍໃຈມີພຽງ 6 ຄອບຄົວ ( 25 ເປີເຊັນ), ຈໍານວນຄອບຄົວທີ່ບໍ່ພໍໃຈມີເຖິງ 10 ຄອບຄົວ (41.7 ເປີເຊັນ) ແລະຈໍານວນຄອບຄົວທີ່ພໍໃຈປານກາງມີ 8 ຄອບຄົວ (33.3) ເປີເຊັນ.

## 5.5.2 ທັດສະນະຂອງປະຊາຊົນຕໍ່ກັບການດໍາລົງຊີວິດພາຍຫຼັງການສໍາປະທານທີ່ດິນ

ຈາກການວິເຄາະຂໍ້ມູນກ່ຽວກັບ ທັດສະນະຂອງປະຊາຊົນຕໍ່ກັບການປ່ຽນແປງຊີວິດການເປັນຢູ່ຂອງເຂົາເຈົ້າ ເມື່ອມີການສໍາປະທານທີ່ດິນ ໂດຍການປະເມີນຈາກພາກສະໜາມ ຂອງກຸ່ມປະຊາກອນຕົວຢ່າງແມ່ນພົບວ່າ :

- ທັດສະນະຂອງປະຊາຊົນກ່ຽວກັບການດໍາລົງຊີວິດມີການປ່ຽນແປງນັ້ນ (ດີຂຶ້ນ) ເມື່ອມີການສໍາປະທານທີ່ດິນ ປະຊາຊົນໄດ້ໃຫ້ທັດສະນະວ່າ: ຍ້ອນໄດ້ຮັບເງິນຈາກການສໍາປະທານທີ່ດິນເດືອນລະ 250.000 ກີບ (ເງິນເດືອນຂອງນັກຮຽນທີ່ໄດ້ທຶນຮຽນຈາກບໍລິສັດບົວລະພາ) ໃນເງິນຈໍານວນນີ້ລູກຫຼານຂອງເຂົາເຈົ້າກໍ່ໃຊ້ບໍ່ໝົດໃນແຕ່ລະເດືອນ ເງິນສ່ວນທີ່ຍັງເຫຼືອກໍ່ເອົາມາໃຊ້ຈ່າຍພາຍໃນຄອບຄົວ ແລະ ເຂົາເຈົ້າກໍ່ບໍ່ຕ້ອງຂາຍງົວ, ຄວາຍ ເພື່ອເປັນທຶນການສຶກສາໃຫ້ແກ່ລູກຫຼານ ຈຶ່ງເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າດີຂຶ້ນກວ່າເກົ່າ.

- ກຸ່ມປະຊາກອນຕົວຢ່າງຈຳນວນຫຼາຍຄອບຄົວໄດ້ໃຫ້ທັດສະນະວ່າ: ການດຳລົງຊີວິດຂອງເຂົາເຈົ້າບໍ່ມີການປ່ຽນແປງ (ຄືເກົ່າ) ຍ້ອນວ່າ: ເຂົາເຈົ້າບໍ່ໄດ້ ຫຼື ເສຍຫຍັງຈາກບໍລິສັດ ຖ້າເຂົ້າໄປຮັບຈ້າງໃນບໍລິສັດກໍ່ພຽງແຕ່ສອງສາມມື້ເທົ່ານັ້ນ ແລະ ຄ່າແຮງງານກໍ່ຖືກພຽງ 25.000 ກີບຕໍ່ມື້ ມັນຈຶ່ງບໍ່ສາມາດເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າດີຂຶ້ນໄດ້. ກ່ອນທີ່ບໍ່ມີການສຳປະທານທີ່ດິນການດຳລົງຊີວິດນັ້ນກໍ່ຍັງເອື່ອຍອີງໃສ່ທຳມະຊາດ ແຕ່ເມື່ອບໍລິສັດເຂົ້າມາຊີວິດການເປັນຢູ່ກໍ່ຄືເກົ່າ ບໍ່ມີການປ່ຽນແປງ ກໍ່ຍັງຕ້ອງໄດ້ອາໄສທຳມະຊາດຄືເກົ່າ ຄືຄອບຄົວທີ່ຍັງທຸກຍາກກໍ່ຍັງທຸກຍາກຄືເກົ່າກໍ່ຍັງເກັບຜັກຫັກໜໍ່, ຫາເຄື່ອງປ່າຂອງດົງຕາມທຳມະຊາດຢູ່.

ຕາຕາລາງທີ 14: ທັດສະນະຂອງປະຊາຊົນຕໍ່ກັບການດຳລົງຊີວິດພາຍຫຼັງການສຳປະທານທີ່ດິນ

| ລ/ດ | ທັດສະນະຂອງປະຊາຊົນຕໍ່ກັບການດຳລົງຊີວິດ | ບ້ານຕຸ້ມລີທົ່ງ | | ບ້ານຕຸ້ມລີຂາວ | | ລວມ | |
|---|---|---|---|---|---|---|---|
| | | ຈຳນວນຄອບຄົວ | ເປີເຊັນ (%) | ຈຳນວນຄອບຄົວ | ເປີເຊັນ (%) | ຈຳນວນຄອບຄົວ | ເປີເຊັນ (%) |
| 1 | ດີຂຶ້ນ | 5 | 18.5 | 2 | 8.3 | 7 | 13.7 |
| 2 | ບໍ່ປ່ຽນແປງ | 22 | 81.5 | 22 | 91.7 | 44 | 86.3 |
| ລວມ | | 27 | 100 | 24 | 100 | 51 | 100 |

*ແຫຼ່ງຂໍ້ມູນ: ພາກສະໜາມ, 2011.*

